

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຍຸດທະສາດແຫ່ງຊາດ
ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ
ຮອດປີ 2030

ນະຄອນຫຼວງວຽງຈັນ

05 ມັງກອນ 2023

ສາລະບານ

ໜ້າ

ຄຳນຳ i

ບົດສັງລວມຫຍໍ້ iii

ອະທິບາຍຄຳສັບ v

ພາກທີ I: ສະພາບລວມ ແລະ ຕີລາຄາການຈັດຕັ້ງປະຕິບັດ ຍຸດທະສາດການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ ສະບັບປີ 2010 1

1.1 **ສະພາບລວມ** 1

1.2 **ສະພາບການປ່ຽນແປງດິນຟ້າອາກາດ, ຜົນກະທົບ ແລະ ການແກ້ໄຂໃນລະດັບສາກົນ ແລະ ພາກພື້ນ** . 2

1.2.1 ສະພາບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບໃນລະດັບສາກົນ ແລະ ພາກພື້ນ **..... 2**

1.2.2 ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໃນລະດັບສາກົນ ແລະ ພາກພື້ນ **..... 3**

1.3 **ສະພາບເງື່ອນໄຂຂອງ ສປປ ລາວ** 4

1.3.1 ສະພາບພູມສັນຖານ ແລະ ພູມອາກາດ **..... 4**

1.3.2 ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **..... 5**

1.3.3 ເສດຖະກິດ-ສັງຄົມ **..... 7**

1.4 ຕີລາຄາການຈັດຕັ້ງປະຕິບັດຍຸດທະສາດ, ຜົນກະທົບ ແລະ ການແກ້ໄຂວຽກງານການປ່ຽນແປງດິນຟ້າອາກາດ ຢູ່ ສປປ ລາວ ໃນໄລຍະຜ່ານມາ 8

1.4.1 ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ເສດຖະກິດ-ສັງຄົມ **..... 8**

1.4.2 ການຈັດຕັ້ງປະຕິບັດຍຸດທະສາດ ແລະ ວຽກງານການປ່ຽນແປງດິນຟ້າອາກາດໄລຍະຜ່ານມາ **..... 9**

1.4.3 ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ **.....12**

1.5 **ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງຍຸດທະສາດ** 13

ພາກທີ II: ຍຸດທະສາດ ແລະ ແຜນງານຮອດປີ 2030 15

2.1 **ເປົ້າໝາຍລວມ ແລະ ຄາດໝາຍສູ້ຊົນ** 15

2.2 **ຫຼັກການພື້ນຖານ** 15

2.3 **ຍຸດທະສາດ, ແຜນງານ ແລະ ໂຄງການບຸລິມະສິດຮອດປີ** 2030 16

2.3.1 ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ສ້າງຄວາມທົນທານ ແລະ ຄວາມສາມາດໃນການປັບຕົວ, ຫຼຸດຜ່ອນຄວາມສ່ຽງ ແລະ ຟື້ນຟູຜົນກະທົບຈາກການປ່ຽນແປງດິນຟ້າອາກາດ **.....17**

2.3.2 ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ຄວບຄຸມ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ **.....17**

2.3.3 ຍຸດທະສາດ ການເຊື່ອມສານ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ສຳລັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ **.....18**

2.4 **ແຜນງານ ແລະ ໂຄງການບຸລິມະສິດຮອດປີ** 2030..... 18

ພາກທີ III: **ການຈັດຕັ້ງປະຕິບັດ**, **ການຕິດຕາມກວດກາ**, **ການປະເມີນຜົນແລະການລາຍງານ** 20

3.1 **ການຈັດຕັ້ງປະຕິບັດ** 20

3.2 **ການຕິດຕາມກວດກາ ແລະ ການປະເມີນຜົນ**..... 20

3.2.1 ລະບົບການຕິດຕາມກວດກາ, ການລາຍງານ ແລະ ການຢັ້ງຢືນ**.....20**

3.2.2 ການທົບທວນຍຸດທະສາດ ແລະ ແຜນງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດແຫ່ງຊາດ **...21**

ເອກະສານຊ້ອນທ້າຍ 22

ເອກະສານອ້າງອີງ..... 30

ຄຳນຳ

ຍຸດທະສາດແຫ່ງຊາດ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030 ເປັນການປັບປຸງ ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດ ເຊິ່ງໄດ້ຖືກຮັບຮອງຈາກ ລັດຖະບານ ໃນປີ 2010, ເປັນການ ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ສອດຄ່ອງ ກັບສະພາບການໃໝ່ ທັງພາຍໃນ ແລະ ສາກົນ ເປັນຕົ້ນ: ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ຍຸດທະສາດຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຖິງປີ 2030, ເປົ້າໝາຍການພັດທະນາແບບ ຍືນຍົງ (SDGs), ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ, ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ກົດ ໝາຍ ວ່າດ້ວຍ ການຄຸ້ມຄອງໄພພິບັດ, ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ, ແນໃສ່ເພື່ອ ຫຼຸດຜ່ອນບັນຫາໂລກຮ້ອນ ແລະ ຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດຕໍ່ເສດຖະກິດ-ສັງຄົມ ກໍ່ຄື ສຸຂະພາບ, ຊີວິດ ແລະ ຊັບສິນຂອງປະຊາຊົນ, ໂຄງລ່າງພື້ນຖານ ແລະ ສິ່ງແວດລ້ອມ.

ຜ່ານການຈັດຕັ້ງປະຕິບັດ ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດ ໃນໄລຍະ 10 ກວ່າປີຜ່ານມາ ພວກເຮົາໄດ້ມີຜົນສຳເລັດໃນຫຼາຍດ້ານ ແລະ ໄດ້ເຮັດໃຫ້ ການປ່ອຍທາດອາຍເຮືອນແກ້ວຫຼຸດລົງປະມານ 30% ໃນ ລະຫວ່າງປີ 2000 ຫາ 2020, ສາມາດປະເມີນການປ່ຽນແປງດິນຟ້າອາກາດ ໃນໄລຍະ 1975 ເຖິງ 2099, ສ້າງ ແຜນທີ່ຄວາມສ່ຽງ ແລະ ຄວາມບອບບາງຈາກການປ່ຽນແປງດິນຟ້າອາກາດຢູ່ 148 ເມືອງ ໃນຂອບເຂດທົ່ວ ປະເທດ ແລະ ສາມາດລະດົມທຶນໄດ້ປະມານ 350 ລ້ານ ໂດລາສະຫະລັດ ມາຈັດຕັ້ງປະຕິບັດວຽກງານການ ປ່ຽນແປງດິນຟ້າອາກາດ ຢູ່ ສປປ ລາວ. ຄຽງຄູ່ກັນນັ້ນ ກໍ່ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນ: ການປັບປຸງລະບົບຂໍ້ມູນ-ຂ່າວສານ, ຄວາມຮູ້ຄວາມສາມາດ, ການເຂົ້າເຖິງ ແລະ ຖ່າຍທອດເຕັກໂນໂລຊີ, ງົບປະມານ, ລະບົບການຕິດຕາມກວດກາ ແລະ ການປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານການປັບຕົວເຂົ້າ ກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ. ຜົນສຳເລັດ ແລະ ສິ່ງຄົງຄ້າງນັ້ນໄດ້ ກາຍເປັນບົດຮຽນອັນລ້ຳຄ່າ ແລະ ເປັນບ່ອນອີງພື້ນຖານສຳຄັນໃຫ້ແກ່ການປັບປຸງ ແລະ ຈັດຕັ້ງປະຕິບັດ ຍຸດທະ ສາດສະບັບນີ້ ໃຫ້ມີຜົນສຳເລັດທີ່ຍິ່ງໃຫຍ່ກວ່າເກົ່າ.

ຍຸດທະສາດແຫ່ງຊາດ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030 ໄດ້ອີງໃສ່ຜົນຂອງ ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ຜົນຂອງການສຶກສາຄົ້ນຄວ້າ ກ່ຽວກັບ ຈຸດ ພິເສດ, ສະພາບຄວາມເປັນຈິງ, ການລະໂອກາດ, ສິ່ງທ້າທາຍ, ຂໍ້ຈຳກັດ, ທ່າອ່ຽງຂອງຍຸກສະໄໝ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ, ທ່າອ່ຽງລວມຂອງຂະບວນໂລກາພິວັດ, ການຮ່ວມມືລະດັບພາກພື້ນ ແລະ ສາກົນ ໃນປະຈຸ ບັນ ແລະ ອະນາຄົດ, ຜົນຂອງການປຶກສາຫາລື ແລະ ການປະກອບຄຳເຫັນຂອງ ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ.

ຍຸດທະສາດສະບັບນີ້ ໄດ້ກຳນົດເປົ້າໝາຍລວມ ແລະ ຄາດໝາຍສູ້ຊົນ, ຫຼັກການພື້ນຖານ, ແຜນງານ ແລະ ໂຄງການບູລິມະສິດ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ວຽກງານການປັບຕົວ ແລະ ສ້າງຄວາມທົນທານຕໍ່ການ ປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນທາດອາຍເຮືອນແກ້ວ, ການເຊື່ອມສານ ແລະ ສ້າງສະພາບແວດລ້ອມທີ່ເອື້ອ ອຳນວຍ ສຳລັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ.

ຍຸດທະສາດສະບັບນີ້ ຖືເປັນເອກະສານສຳຄັນໜຶ່ງ ດ້ານນະໂຍບາຍ ແລະ ວິຊາການ ໃນການດຳເນີນວຽກ ງານ ແລະ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຢູ່ ສປປ ລາວ ແລະ ການຮ່ວມມືກັບພາກພື້ນ ແລະ ສາກົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຍິ່ງຂຶ້ນ. ເຖິງແມ່ນວ່າແຕ່ລະແຜນງານທີ່ກຳນົດໃນ ຍຸດທະສາດ ສະບັບນີ້ ຈະມີລັກສະນະເປັນກອບໂຄງການ ຫຼື ໜ້າວຽກກໍ່ຕາມ, ແຕ່ຄາດວ່າຈະເປັນບ່ອນອີງໃນການກຳນົດ ຫຼື ເຊື່ອມສານເຂົ້າໃນແຜນການປະຈຳປີ ແລະ ແຜນການ 5 ປີ ຂອງບັນດາກະຊວງ, ຂະແໜງການ ແລະ ພາກສ່ວນ ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຢູ່ໃນຂົງເຂດວຽກງານ ແລະ ທ້ອງຖິ່ນຕົນ.

ຂ້າພະເຈົ້າ ຂໍຖືໂອກາດນີ້ຕາງໜ້າໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍສະແດງ ຄວາມຂອບໃຈຢ່າງຍິ່ງມາຍັງຄະນະຊີ້ນຳ, ກອງເລຂາ, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ງົບປະມານ ເຂົ້າໃນການປັບປຸງ ຍຸດທະສາດ ສະບັບນີ້. ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜຸນ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນ ການຈັດຕັ້ງປະຕິບັດ ຍຸດທະສາດສະບັນນີ້ ໃນຂັ້ນຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ .....

ລັດຖະມົນຕີ

ບົດສັງລວມຫຍໍ້

ການປ່ຽນແປງດິນຟ້າອາກາດ ເປັນບັນຫາໃຫຍ່ໜຶ່ງທີ່ທ້າທາຍ ແລະ ສົ່ງຜົນກະທົບອັນໜັກໜ່ວງ ຕໍ່ຫຼາຍ ປະເທດໃນໂລກ ລວມທັງ ສປປ ລາວ ໂດຍສະເພາະຜົນກະທົບທີ່ມີຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ເຊິ່ງສ່ວນໃຫ່ຍແມ່ນເພິ່ງພາທຳມະຊາດ ເປັນແຫຼ່ງທຳມາຫາກິນ. ເວົ້າລວມແລ້ວ, ການປ່ຽນແປງດິນຟ້າອາກາດ ຖືເປັນໄພຂົ່ມຂູ່ອັນມະຫາສານຕໍ່ ເສດຖະກິດ-ສັງຄົມເຮົາ. ດັ່ງນັ້ນ, ລັດຖະບານ ຈຶ່ງໄດ້ເປັນເຈົ້າການເຂົ້າຮ່ວມເຈລະຈາ ການຮ່າງສົນທິສັນຍາ ສປຊ ວ່າດ້ວຍ ການປ່ຽນແປງດິນຟ້າ ອາກາດ ແຕ່ຫົວທີ ນັບແຕ່ປີ 1990 ເປັນຕົ້ນມາ ແລະ ໄດ້ເຂົ້າເປັນພາຄີສົນທິສັນຍາດັ່ງກ່າວໃນປີ 1995, ອະນຸ ສັນຍາກຽວໂຕ ວ່າດ້ວຍ ການຄວບຄຸມການປ່ອຍທາດອາຍເຮືອນແກ້ວ ໃນປີ 2003 ແລະ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ໃນປີ 2016.

ເພື່ອຈັດຕັ້ງຜັນຂະຫຍາຍ ວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ໃຫ້ປະກົດຜົນເປັນຈິງ ສປປ ລາວ ຈຶ່ງໄດ້ສ້າງ ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດ ສະບັບທຳອິດຂຶ້ນໃນປີ 2010. ຜ່ານ ການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ມາຮອດປະຈຸບັນເຫັນວ່າ ເນື້ອໃນ ແລະ ແຜນງານບຸລິມະສິດຈຳນວນໜຶ່ງ ຍັງບໍ່ທັນຄົບຖ້ວນ ແລະ ຈະແຈ້ງ ໂດຍສະເພາະ ຄວາມສອດຄ່ອງກັບບັນດານິຕິກຳ, ນະໂຍບາຍ ແລະ ແຜນງານ ຂອງຂະແໜງການ ທີ່ສ້າງຂຶ້ນຫຼັງປີ 2010; ບໍ່ໄດ້ກຳນົດກອບເວລາ, ຄາດໝາຍ ແລະ ແຜນງານ; ບໍ່ທັນມີລະບົບ ຕິດຕາມກວດກາ, ປະເມີນ ແລະ ລາຍງານຜົນ; ບໍ່ທັນມີກົນໄກທາງດ້ານການເງິນ, ການເຂົ້າຫາທຶນ ແລະ ການ ລະດົມທຶນ; ການຈັດຕັ້ງປະຕິບັດກິດຈະກຳ ແລະ ໂຄງການພາຍໃຕ້ຍຸດທະສາດ ຍັງບໍ່ທັນມີປະສິດທິຜົນສູງເທົ່າທີ່ ຄວນ.

ນອກຈາກນັ້ນ, ກໍ່ຍັງມີປັດໄຈພາຍນອກ ໂດຍສະເພາະແມ່ນ ສະພາບຂອງການປ່ຽນແປງດິນຟ້າອາກາດ ຢູ່ ໃນລະດັບໂລກ ແລະ ພາກພື້ນ ລວມທັງ ສປປ ລາວ ໄດ້ມີການປ່ຽນແປງຢ່າງໄວວາ ແລະ ຄາດຄະເນໄດ້ຍາກ ເປັນຕົ້ນ: ອຸນຫະພູມ ແລະ ປະລິມານນ້ຳຝົນໄດ້ມີການປ່ຽນແປງກະທັນຫັນ, ພາຍຸ, ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ມີທ່າອ່ຽງຖີ່ຂຶ້ນ ແລະ ຮຸນແຮງຂຶ້ນ, ປະຊາຄົມໂລກໄດ້ຮັບຮອງເອົາເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (Paris Agreement) ເພື່ອແກ້ໄຂບັນຫາການປ່ຽນແປງ ດິນຟ້າອາກາດຢ່າງຈິງຈັງ ແລະ ຄວບຄຸມອຸນນະພູມສະເລ່ຍຂອງໂລກ ບໍ່ໃຫ້ສູງຂຶ້ນເກີນ 1,5 ອົງສາເຊລເຊຍ. ສະນັ້ນ, ຈຶ່ງມີຄວາມຈຳເປັນ ໃນການປັບປຸງຍຸດທະສາດ ໃຫ້ມີຄວາມແທດເໝາະ ແລະ ສອດຄ່ອງກັບສະພາບ ແລະ ທ່າອ່ຽງດ້ານການປ່ຽນແປງດິນຟ້າອາກາດ ໃນປະຈຸບັນ ແລະ ອະນາຄົດ.

ເປົ້າໝາຍລວມ ຂອງຍຸດທະສາດສະບັບປັບປຸງແມ່ນເພື່ອ ບັນລຸຄາດໝາຍສູ້ຊົນ ຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບ ທາດອາຍເຮືອນແກ້ວ ໃຫ້ເປັນສູນ ໃນປີ 2050 ແລະ ສາມາດປັບຕົວເຂົ້າກັບການປ່ຽນແປງດິນ ຟ້າອາກາດ ໄດ້ໂດຍພື້ນຖານ ເຊິ່ງປະກອບມີ 3 ຍຸດທະສາດຕົ້ນຕໍ ແລະ 9 ແຜນງານບູລິມະສິດ ຄື:

1. **ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ສ້າງຄວາມທົນທານ ແລະ ຄວາມສາມາດ ໃນການປັບຕົວ, ຫຼຸດຜ່ອນຄວາມສ່ຽງ ແລະ ຟື້ນຟູຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດ:** ແມ່ນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ລະບົບຂໍ້ມູນຂ່າວສານ, ການລາຍງານ, ການເຕືອນໄພລ່ວງ ໜ້າ, ການຫຼຸດຜ່ອນຄວາມສ່ຽງ ແລະ ການຟື້ນຟູຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ການພັດທະນາຊັບພະຍາກອນມະນຸດ, ການສຶກສາ, ການສ້າງຈິດສຳນຶກ, ການຖ່າຍທອດ ເຕັກໂນໂລຊີ, ການສ້າງຄວາມທົນທານ ແລະ ຄວາມສາມາດປັບຕົວຂອງໂຄງລ່າງພື້ນຖານ, ການ ຜະລິດ, ທຸລະກິດ, ລະບົບນິເວດ ແລະ ຊຸມຊົນ.
2. **ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ຄວບຄຸມ ແລະ ຫຼຸດຜ່ອນທາດອາຍ ເຮືອນແກ້ວ**: ແມ່ນການເສີມສ້າງຄວາມເຂັ້ມແຂງດ້ານການປະຢັດ ແລະ ນຳໃຊ້ພະລັງງານຢ່າງມີປະ ສິດທິພາບ ແລະ ປະສິດທິຜົນ, ລວມທັງ ພະລັງງານທົດແທນ ແລະ ພະລັງງານທາງເລືອກຕ່າງໆທີ່ເປັນ ມິດຕໍ່ສິ່ງແວດລ້ອມ ແລະ ປ່ອຍທາດອາຍເຮືອນແກ້ວຕ່ຳ, ບົດບາດຂອງລະບົບນິເວດ ໃນການດູດຊັບ

ທາດອາຍເຮືອນແກ້ວ, ກົນໄກພັດທະນາສະອາດ, ການກຳຈັດສິ່ງເສດເຫຼືອໃຫ້ໄດ້ມາດຕະຖານ, ການປັບປຸງໂຄງລ່າງຜັງເມືອງ, ໂຍທາທິການ ແລະ ຂົນສົ່ງ, ການຈັດຕັ້ງປະຕິບັດນິຕິກຳ ແລະ ມາດຕະການຕ່າງໆດ້ານການປ່ຽນແປງດິນຟ້າອາກາດ.

3. **ຍຸດທະສາດ ການເຊື່ອມສານ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ສຳລັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ**: ແມ່ນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ ການເສີມຂະຫຍາຍ ແລະ ຈັດຕັ້ງປະຕິບັດລະບຽບການ, ແຜນການ, ກົນໄກການເງິນ, ການປະສານງານ ແລະ ຮ່ວມມືທັງພາຍໃນ ແລະ ສາກົນ, ການຕິດຕາມກວດກາ ແລະ ປະເມີນຜົນ.

9 ແຜນງານບູລິມະສິດ ຄື:

1) ພັດທະນາ, ຄຸ້ມຄອງລະບົບຂໍ້ມູນ-ຂ່າວສານ, ລາຍງານສະພາບ, ເຫດການ ແລະ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ;
2) ເສີມສ້າງຄວາມທົນທານ, ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຂອງໂຄງລ່າງພື້ນຖານ, ລະບົບການຜະລິດ, ທຸລະກິດ, ບໍລິການ, ລະບົບນິເວດ ແລະ ຊຸມຊົນ ກໍ່ຄື ທຸກຂະແໜງການ ທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບ;
3) ເສີມສ້າງຄວາມເຂັ້ມແຂງໃນການການສຳຫຼວດ, ຕິດຕາມກວດກາ ແລະ ລາຍງານ ກ່ຽວກັບ ທາດອາຍເຮືອນແກ້ວ;
4) ເສີມສ້າງຄວາມເຂັ້ມແຂງ ໃນການຄວບຄຸມ ແລະ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃນຂະແໜງການຕ່າງໆ;
5) ພັດທະນາ, ນຳໃຊ້ ແລະ ຖ່າຍທອດ ເຕັກໂນໂລຊີ;
6) ສົ່ງເສີມການສຶກສາ, ສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງມວນຊົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ;
7) ເສີມສ້າງຄວາມເຂັ້ມແຂງ ດ້ານການເງິນ ໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດ;
8) ເຊື່ອມສານ, ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ໃນຄຸ້ມຄອງການປ່ຽນແປງດິນຟ້າອາກາດ;
9) ເສີມສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ, ຊັບພະຍາກອນມະນຸດ ເພື່ອຄຸ້ມຄອງບໍລິຫານ ວຽກງານການປ່ຽນແປງດິນຟ້າອາກາດ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເປັນຈຸດປະສານງານກັບຂະແໜງການກ່ຽວຂ້ອງໃນທຸກລະດັບ ເພື່ອຈັດຕັ້ງປະຕິບັດ, ຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ຍຸດທະສາດສະບັບນີ້ ໃຫ້ແກ່ລັດຖະບານເປັນແຕ່ລະໄລຍະ.

ອະທິບາຍຄຳສັບ

1) **ການປ່ຽນແປງດິນຟ້າອາກາດ** ໝາຍເຖິງ ສະພາວະການປ່ຽນແປງຂອງອຸນຫະພູມສະເລ່ຍເທິງພື້ນຜິວໂລກ ທີ່ເພີ່ມຂຶ້ນເກີນເກນປົກກະຕິ ໃນໄລຍະຍາວ ເຊິ່ງເກີດມາຈາກການກະທຳຂອງມະນຸດໂດຍກົງ ຫຼື ທາງອ້ອມ ຫຼື ເກີດຈາກທຳມະຊາດ ທີ່ເຮັດໃຫ້ອົງປະກອບຂອງຊັ້ນບັນຍາກາດປ່ຽນແປງ.
2) **ການຄຸ້ມຄອງການປ່ຽນແປງດິນຟ້າອາກາດ** ໝາຍເຖິງ ການວາງນະໂຍບາຍ, ຍຸດທະສາດ, ພັດທະນາຊັບພະຍາກອນມະນຸດ, ພັດທະນາຫຼັກສູດການສຶກສາ, ຄົ້ນຄວ້າວິທະຍາສາດ, ສ້າງຈິດສຳນຶກ, ສະໜອງຂໍ້ມູນ-ຂ່າວສານ, ງົບປະມານ, ວັດຖຸປະກອນ, ພາຫະນະ ລວມທັງການໃຊ້ພູມປັນຍາທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.
3) **ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ** ໝາຍເຖິງ ການປັບສະພາບຂອງດິນ, ສັດ, ພືດ, ລະບົບນິເວດ, ໂຄງລ່າງພື້ນຖານ, ຜັງເມືອງໃນຕົວເມືອງ ແລະ ອື່ນໆ ໃຫ້ມີຄວາມທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໃຫ້ໄດ້ຮັບຜົນກະທົບໜ້ອຍທີ່ສຸດ ດ້ວຍການດຳເນີນມາດຕະການທີ່ເໝາະສົມໃນການຫຼຸດຜ່ອນຄວາມບອບບາງ, ຄວາມສ່ຽງ ແລະ ຄວາມເສຍຫາຍທີ່ອາດເກີດຂຶ້ນ.
4) **ຄວາມບອບບາງ** ໝາຍເຖິງ ຄວາມອ່ອນໄຫວ ແລະ ບໍ່ສາມາດຮັບມືກັບຜົນກະທົບທີ່ເກີດຈາກການປ່ຽນແປງດິນຟ້າອາກາດ.
5) **ຄວາມທົນທານ** ໝາຍເຖິງ ຄວາມສາມາດໃນການຮັບມືກັບຜົນກະທົບ ຫຼື ຟື້ນຄືນສູ່ສະພາບປົກກະຕິ ຂອງຊຸມຊົນ, ສັງຄົມ ລວມທັງໂຄງລ່າງພື້ນຖານ ແລະ ລະບົບນິເວດ.
6) **ທາດອາຍເຮືອນແກ້ວ** ໝາຍເຖິງ ບັນດາທາດອາຍ ເປັນຕົ້ນ: ກາກບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ (N_2O), ໄຮໂດຣຟລູໂອໂຣກາກບອນ (HFCs), ເປີຟລູໂອໂຣກາກບອນ (PFCs), ເຮັກຊາຟລູໂອໄລ (SF_6) ແລະ ໄນໂຕຣເຈນ ທຣິຟລູໂອໄຣ (NF_3) ທີ່ຖືກປ່ອຍອອກຈາກທຳມະຊາດ ຫຼື ເກີດຂຶ້ນຈາກການກະທຳຂອງມະນຸດຂຶ້ນສູ່ຊັ້ນບັນຍາກາດກໍ່ຕົວເປັນຊັ້ນອາຍເຮືອນແກ້ວ ເຊິ່ງເປັນສາເຫດເຮັດໃຫ້ໂລກຮ້ອນ ຫຼື ການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການເຜົາໄໝ້ນ້ຳມັນເຊື້ອໄຟ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ການສ້າງ ແລະ ທຳລາຍສິ່ງເສດເຫຼືອ.
7) **ການປ່ອຍທາດອາຍເຮືອນແກ້ວ** ໝາຍເຖິງ ການປ່ອຍ 7 ທາດອາຍເຮືອນແກ້ວທີ່ລະບຸຢູ່ຂໍ້ 6 ເຊິ່ງຖືກປ່ອຍອອກຈາກທຳມະຊາດ ຫຼື ເກີດຂຶ້ນຈາກການກະທຳຂອງມະນຸດ ຂຶ້ນສູ່ຊັ້ນບັນຍາກາດ ກໍ່ຕົວເປັນຊັ້ນອາຍເຮືອນແກ້ວ ເຊິ່ງເປັນສາເຫດເຮັດໃຫ້ໂລກຮ້ອນ ຫຼື ການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການເຜົາໄໝ້ນ້ຳມັນເຊື້ອໄຟ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ການສ້າງ ແລະ ທຳລາຍສິ່ງເສດເຫຼືອ.
8) **ການຫຼຸດຜ່ອນທາດອາຍເຮືອນແກ້ວ** ໝາຍເຖິງ ການດຳເນີນຂະບວນການ ກ່ຽວກັບ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມແຫຼ່ງດູດຊັບທາດອາຍເຮືອນແກ້ວ.
9) **ການດູດຊັບທາດອາຍເຮືອນແກ້ວ** ໝາຍເຖິງ ການດູດຊັບທາດອາຍເຮືອນແກ້ວຈາກຊັ້ນບັນຍາກາດ.
10) **ກົນໄກດ້ານການເງິນ** ໝາຍເຖິງ ການອຳນວຍຄວາມສະດວກ ເງື່ອນໄຂຂອງກົນໄກດ້ານການເງິນ ການປ່ຽນແປງດິນຟ້າອາກາດ. ສົນທິສັນຍາໄດ້ສ້າງກົນໄກທາງການເງິນ ເພື່ອຈັດສັນງົບປະມານໃຫ້ບັນດາປະເທດດ້ອຍພັດທະນາ ແລະ ກຳລັງພັດທະນາ.
11) **ຜົນກະທົບ** ໝາຍເຖິງ ໄພທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ທີ່ມີຜົນຕໍ່ລະບົບທຳມະຊາດ ແລະ ການຍະພາບຂອງມະນຸດ.
12) **ໄພແຫ້ງແລ້ງ** ໝາຍເຖິງ ປະກົດການທີ່ເກີດຂຶ້ນ ເມື່ອປະລິມານນ້ຳຝົນ ຕ່ຳກວ່າລະດັບປົກກະຕິ ທີ່ໄດ້ບັນທຶກໄວ້ ເປັນສາເຫດຂອງ ຄວາມບໍ່ສົມດຸນຂອງນ້ຳ ເຊິ່ງເປັນຜົນກະທົບດ້ານລົບຕໍ່ທີ່ດິນ ແລະ ລະບົບການຜະລິດ.
13) **ໄພນ້ຳຖ້ວມ** ໝາຍເຖິງ ກະແສນ້ຳທີ່ໄຫຼແຮງລົ້ນອອກຈາກຕາຝັ່ງຫ້ວຍນ້ຳ ຫຼື ຈຳນວນທີ່ໄຫຼໂຮມເຂົ້າກັນຖ້ວມພື້ນທີ່ໃດໜຶ່ງ ທີ່ບໍ່ເຄີຍມີນ້ຳຖ້ວມມາກ່ອນ.

ພາກທີ I: ສະພາບລວມ ແລະ ຕິລາຄາການຈັດຕັ້ງປະຕິບັດ ຍຸດທະສາດການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ ສະບັບປີ 2010

1.1 ສະພາບລວມ

ການປ່ຽນແປງດິນຟ້າອາກາດ ເປັນບັນຫາໃຫຍ່ໜຶ່ງທີ່ທ້າທາຍ ແລະ ສົ່ງຜົນກະທົບອັນໜັກໜ່ວງ ຕໍ່ຫຼາຍປະເທດໃນໂລກ ລວມທັງ ສປປ ລາວ. ໃນໄລຍະຜ່ານມາ ຢູ່ ສປປ ລາວ ສັງເກດເຫັນວ່າສະພາບດິນຟ້າອາກາດມີການປ່ຽນແປງ ເປັນຕົ້ນ ອຸນຫະພູມສະເລ່ຍເພີ່ມສູງຂຶ້ນ, ອຸນຫະພູມ ແລະ ປະລິມານນ້ຳຝົນ ທີ່ແປປວນ, ໄພແຫ້ງແລ້ງແກ່ຍາວ, ພະຍຸ, ໄພນ້ຳຖ້ວມຖີ່ ແລະ ຮຸນແຮງຂຶ້ນ. ໄພທຳມະຊາດດັ່ງກ່າວໄດ້ສ້າງຜົນກະທົບຕໍ່ທຸກຂົງເຂດວຽກງານ ເປັນຕົ້ນ ຂົງເຂດກະສິກຳ ແລະ ການຄ້ຳປະກັນສະບຽງອາຫານ, ປ່າໄມ້ ແລະ ການປ່ຽນແປງນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ພະລັງງານ, ອຸດສາຫະກຳ, ໂຍທາທິການ ແລະ ຂົນສົ່ງ, ການພັດທະນາຕົວເມືອງ ແລະ ສາທາລະນະສຸກ. ຕົວຢ່າງ ໃນປີ 2009 ພະຍຸເກດສະໜາໄດ້ສ້າງຄວາມເສຍຫາຍ ຕໍ່ເສດຖະກິດຂອງ ສປປ ລາວ ປະມານ 94,2 ລ້ານ ໂດລາສະຫະລັດ ແລະ ສ້າງຜົນກະທົບຕໍ່ປະຊາກອນ 180.000 ກ່ວາຄົນໃນ 30.000 ຄົວເຮືອນ. ໃນປີ 2011 ພະຍຸນົກເຕັນໄດ້ສ້າງຄວາມເສຍຫາຍ ທາງດ້ານເສດຖະກິດ ປະມານ 200 ລ້ານ ໂດລາສະຫະລັດ, 12 ແຂວງໄດ້ຮັບຜົນກະທົບໜັກ ແລະ ມີຜູ້ເສຍຊີວິດ 41 ຄົນ. ໃນປີ 2018 ພະຍຸເຊິນຕີ ແລະ ພະຍຸເບບິນກ້າ ໄດ້ກໍ່ໃຫ້ເກີດໄພນ້ຳຖ້ວມໜັກ ແລະ ໄດ້ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ໂຄງລ່າງພື້ນຖານ, ການຜະລິດ, ການບໍລິການ, ຄົມມະນາຄົມ-ຂົນສົ່ງ ແລະ ອື່ນໆ ຄິດເປັນເງິນ 371,1 ລ້ານ ໂດລາສະຫະລັດ, ທຽບເທົ່າກັບ 2,1% ຂອງລວມຍອດຜະລິດຕະພັນພາຍໃນ. ມີການຄາດຄະເນວ່າ ໃນອະນາຄົດ ການປ່ຽນແປງດິນຟ້າອາກາດ ຍິ່ງຈະເຮັດໃຫ້ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມຮຸນແຮງ ແລະ ຖີ່ຂຶ້ນ ແລະ ສ້າງຜົນກະທົບອື່ນໆຕາມມາ. ເຫດການເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າ ສປປ ລາວ ມີຄວາມບອບບາງສູງ ຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ. ໃນປີ 2018 ສປປ ລາວ ໄດ້ຖືກຈັດຢູ່ອັນດັບທີ 22 ຂອງບັນດາປະເທດທີ່ມີຄວາມບອບບາງສູງ ຈາກການປ່ຽນແປງດິນຟ້າອາກາດໃນໂລກ.

ສປປ ລາວ ເຫັນໄດ້ຄວາມສຳຄັນ ແລະ ໄດ້ດຳເນີນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຢ່າງຈິງຈັງ ຢູ່ພາຍໃນປະເທດ ແລະ ປະກອບສ່ວນຮ່ວມກັບປະຊາຄົມໂລກ. ໃນປີ 1995 ສປປ ລາວ ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC), ອະນຸສັນຍາກຽວໂຕ ວ່າດ້ວຍ ການຄວບຄຸມການປ່ອຍທາດອາຍເຮືອນແກ້ວ (Kyoto Protocol) ໃນປີ 2003 ແລະ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (Paris Agreement) ໃນປີ 2016. ພ້ອມດຽວກັນນີ້ ສປປ ລາວ ໄດ້ຮັບຮອງເອົາ ຍຸດທະສາດແຫ່ງຊາດການປ່ຽນແປງດິນຟ້າອາກາດ ໃນປີ 2010 ແລະ ແຜນດຳເນີນງານການປ່ຽນແປງດິນຟ້າອາກາດ 2013-2020 ໃນປີ 2013. ໃນປີ 2015 ສປປ ລາວ ໄດ້ນຳສົ່ງ ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ແລະ ໃນປີ 2021 ໄດ້ສົ່ງ NDC ສະບັບປັບປຸງໃຫ້ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ໃນເດືອນກັນຍາ 2019 ກໍ່ໄດ້ຮັບຮອງ ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.

ຍຸດທະສາດສະບັບນີ້ ເປັນການປັບປຸງຍຸດທະສາດໃນເມື່ອກ່ອນ ທີ່ໄດ້ຮັບຮອງຈາກລັດຖະບານ ໃນປີ 2010 ເຊິ່ງຖືເປັນເອກະສານສຳຄັນໜຶ່ງ ດ້ານນະໂຍບາຍໃນການດຳເນີນວຽກງານ ແລະ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດຢູ່ ສປປ ລາວ ແລະ ການຮ່ວມມືກັບພາກພື້ນ ແລະ ສາກົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຍິ່ງຂຶ້ນ. ເນື້ອໃນສຳຄັນຂອງຍຸດທະສາດສະບັບນີ້ ລວມມີ ເປົ້າໝາຍລວມ ຮອດປີ 2050, ຍຸດທະສາດ ແລະ ແຜນງານ ຮອດປີ 2030 ເປັນຕົ້ນແມ່ນ ໜ້າວຽກຍຸດທະສາດ ສຳລັບ ການປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງ, ສ້າງຄວາມທົນທານ, ປັບຕົວ, ຟື້ນຟູ ແລະ ກໍ່ສ້າງຄືນຫຼັງຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ເປັນສາເຫດຕົ້ນຕໍ ຂອງບັນຫາ ການປ່ຽນແປງດິນຟ້າອາກາດ. ພ້ອມດຽວກັນນີ້ ຍຸດທະສາດນີ້ຍັງເປັນການປະກອບສ່ວນສຳຄັນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດ

ຍືນຍົງ ແລະ ສີຂຽວ, ເສີມສ້າງການປະສານງານ, ການຮ່ວມມື ແລະ ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ຂອງທຸກພາກສ່ວນ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ.

1.2 ສະພາບການປ່ຽນແປງດິນຟ້າອາກາດ, ຜົນກະທົບ ແລະ ການແກ້ໄຂໃນລະດັບສາກົນ ແລະ ພາກພື້ນ

1.2.1 ສະພາບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບໃນລະດັບສາກົນ ແລະ ພາກພື້ນ

ສະພາບພູມອາກາດ ເປັນຕົ້ນແມ່ນ ອຸນຫະພູມຂອງໂລກ ໄດ້ມີການປ່ຽນແປງໃນລະດັບໄວສົມຄວນ. ນັບຕັ້ງແຕ່ກ່ອນຍຸກອຸດສາຫະກຳ (ຊຸມປີ 1850) ມາຮອດ 2017 ອຸນຫະພູມສະເລ່ຍຂອງໂລກໄດ້ເພີ່ມຂຶ້ນ 1 ອົງສາ ເຊລເຊສ (°C). ສາເຫດຕົ້ນຕໍແມ່ນຍ້ອນ ການເພີ່ມຂຶ້ນຂອງການປ່ອຍທາດອາຍເຮືອນແກ້ວ (GHGs) ເຊິ່ງເກີດ ຈາກການຂຸດຄົ້ນ ແລະ ນຳໃຊ້ພະລັງງານເຊື້ອໄຟ ແລະ ຊັບພະຍາກອນທຳມະຊາດ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ການຜະລິດກະສິກຳ ແລະ ອຸດສາຫະກຳ, ການຜະລິດ ແລະ ນຳໃຊ້ ສານເຄມີ, ການສ້າງ ແລະ ທຳລາຍສິ່ງເສດເຫຼືອ.

ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ທີ່ປະຊາຄົມໂລກໄດ້ຮັບຮອງ ໃນປີ 2015 ເປັນນິຕິ ກຳໜຶ່ງທີ່ສຳຄັນໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດໃນລະດັບໂລກ ເຊິ່ງໄດ້ກຳນົດຄາດໝາຍ ແລະ ມາດຕະການຄວບຄຸມການເພີ່ມຂຶ້ນຂອງອຸນນະພູມສະເລ່ຍຂອງໂລກບໍ່ໃຫ້ກາຍ 1,5°C ທຽບໃສ່ອຸນຫະພູມກ່ອນ ຍຸກອຸດສາຫະກຳ. ການກຳນົດເປົ້າໝາຍດັ່ງກ່າວແມ່ນເພື່ອໃຫ້ມີຄວາມປອດໄພ ແລະ ຫຼຸດຜ່ອນຜົນກະທົບຈາກການ ປ່ຽນແປງດິນຟ້າອາກາດ. ໃນປີ 2018 ຄະນະກຳມະການສາກົນ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (IPCC) ໄດ້ວິເຄາະ ແລະ ລາຍງານວ່າ ຖ້າຫາກບໍ່ມີການດຳເນີນມາດຕະການຢ່າງຈິງຈັງ ຫຼື ປ່ອຍໃຫ້ມີການເພີ່ມຂຶ້ນຂອງທາດ ອາຍເຮືອນແກ້ວຕາມສະພາບປົກກະຕິຄືໃນລະດັບປະຈຸບັນ ແມ່ນຈະເຮັດໃຫ້ອຸນຫະພູມສະເລ່ຍຂອງໂລກເພີ່ມຂຶ້ນ 1,5°C ໃນລະຫວ່າງປີ 2030 ຫາ 2052. ການເພີ່ມຂຶ້ນຂອງອຸນຫະພູມຂອງໂລກຄາດວ່າຈະຍັງສ້າງຜົນກະທົບ ຫຼາຍສົມຄວນຕໍ່ລະບົບພູມອາກາດ ແລະ ປະຊາຄົມໂລກ ເປັນຕົ້ນ:

1) **ບັນຫາຄື້ນຄວາມຮ້ອນ ທີ່ມີຄວາມຮຸນແຮງ**: ຈະສ້າງຜົນກະທົບຕໍ່ເຂດຮ້ອນຢ່າງນ້ອຍທຸກໆ 5 ປີ. ຖ້າອຸນຫະພູມ ສະເລ່ຍຂອງໂລກເພີ່ມຂຶ້ນ 2°C, ປະຊາກອນຫຼາຍກວ່າ 1,7 ຕື້ຄົນ ຈະໄດ້ຮັບຜົນກະທົບ ແລະ ອີກ 420 ລ້ານ ຄົນ ຈະໄດ້ຮັບຜົນກະທົບໜັກຈາກຄື້ນຄວາມຮ້ອນທີ່ຮຸນແຮງດັ່ງກ່າວ. ຜົນກະທົບນັ້ນລວມມີພະຍາດລະບາດ, ເຈັບປ່ວຍ ແລະ ການເສຍຊີວິດ.
2) **ບັນຫາໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ**: ຈະເຮັດໃຫ້ປະຊາກອນປະມານ 350 ລ້ານຄົນ ດຳລົງຊີວິດຢູ່ທ່າມກາງ ໄພແຫ້ງແລ້ງ ໃນເງື່ອນໄຂທີ່ອຸນຫະພູມສະເລ່ຍຂອງໂລກຢູ່ໃນລະດັບ 1,5°C . ຖ້າອຸນຫະພູມສະເລ່ຍຂອງ ໂລກເພີ່ມຂຶ້ນເປັນ 2°C, ຈະເຮັດໃຫ້ປະຊາກອນ ປະມານ 410 ລ້ານຄົນ ໄດ້ຮັບຜົນກະທົບ. ຖ້າຫາກສາມາດ ຄວບຄຸມອຸນຫະພູມສະເລ່ຍຂອງໂລກໃຫ້ຢູ່ໃນລະດັບ 1.5°C, ປະຊາກອນໜ້ອຍກວ່າ 50% ຈະໄດ້ຮັບຜົນ ກະທົບຈາກການຂາດແຄນນ້ຳ ທຽບໃສ່ ກໍລະນີອຸນຫະພູມສະເລ່ຍຂອງໂລກເພີ່ມຂຶ້ນເປັນ 2°C. ນອກຈາກນີ້, ປະຊາກອນໂລກຫຼາຍກວ່າ 70% ຈະໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ຖ້າອຸນຫະພູມສະເລ່ຍຂອງໂລກເພີ່ມ ຂຶ້ນເຖິງ 2°C.
3) **ບັນຫາດ້ານການຜະລິດສະບຽງອາຫານ ແລະ ທີ່ຢູ່ອາໄສຂອງສິ່ງທີ່ມີຊີວິດ**: ພາຍໃຕ້ເງື່ອນໄຂອຸນຫະພູມສະເລ່ຍ ຂອງໂລກເພີ່ມຂຶ້ນ 1.5°C, ປະມານ 6% ຂອງແມງໄມ້, 4% ຂອງສັດມີກະດູກສັນຫລັງ ແລະ 8% ຂອງ ພືກສາຊາດ ຈະສູນເສຍຖິ່ນທີ່ຢູ່ອາໄສຂອງຕົນຫຼາຍກວ່າ 50%. ໃນກໍລະນີອຸນຫະພູມສະເລ່ຍຂອງໂລກເພີ່ມ ຂຶ້ນເປັນ 2°C ສິ່ງທີ່ມີຊີວິດດັ່ງກ່າວ ຈະສູນເສຍຖິ່ນທີ່ຢູ່ອາໄສຂອງຕົນເປັນສອງເທົ່າຕົວ. ຜົນຜະລິດເຂົ້າ, ສາລີ, ເຂົ້າບາເລ ແລະ ພື້ນທີ່ລ້ຽງສັດຂອງໂລກຈະຫຼຸດລົງປະມານ 7%– 10%.

ສະພາບການປ່ຽນແປງດິນຟ້າອາກາດ ແລະ ການຮັບມືໃນບັນດາປະເທດອາຊຽນ ແມ່ນມີຄວາມແຕກຕ່າງ ກັນ ຍ້ອນສະພາບທີ່ຕັ້ງ, ເງື່ອນໄຂດ້ານພູມີສາດ, ເສດຖະກິດ-ສັງຄົມ, ວິຖີຊີວິດ, ລະດັບຄວາມຮຸນແຮງຂອງໄພ ທຳມະຊາດ ແລະ ຄວາມສາມາດໃນການຮັບມືແຕກຕ່າງກັນ. ໂດຍລວມແລ້ວ ບັນດາປະເທດອາຊຽນມີຄວາມສ່ຽງ

ຕ່ ບັນຫາລະດັບນ້ຳທະເລຍິ່ງສູງຂຶ້ນ ຍ້ອນວ່າ ປະຊາຄອນສ່ວນໃຫຍ່ ແລະ ໂຄງລ່າງດ້ານເສດຖະກິດ-ສັງຄົມ ແມ່ນ ຢູ່ລຽບຕາມຊາຍຝັ່ງ. ພ້ອມນີ້ ການປ່ຽນແປງດິນຟ້າອາກາດ ກໍ່ສົ່ງຜົນກະທົບຕ່ໍການກະສິກຳ, ໂດຍສະເພາະແມ່ນຜົນ ຜະລິດ ດ້ານທັນຍາຫານ. ໃນໄລຍະຜ່ານມາສັງເກດເຫັນວ່າ ຈຳນວນຄັ້ງຂອງເຫດການຮຸນແຮງໄດ້ເພີ່ມຂຶ້ນ ເຊັ່ນ ຝົນຕົກໜັກຂຶ້ນ, ຈຳນວນມື້ທີ່ມີອາກາດຮ້ອນເພີ່ມຂຶ້ນ, ໄພນ້ຳຖ້ວມມີຄວາມຮຸນແຮງຂຶ້ນ, ພຶດຕິກຳຂອງພະຍຸໄຕ້ຝຸ່ນ ແລະ ໄພແຫ້ງແລ້ງມີການປ່ຽນແປງເຊິ່ງຄາດເດົາໄດ້ຍາກ. ພ້ອມນີ້ ກໍ່ສັງເກດເຫັນວ່າ ຂໍ້ມູນການຄາດຄະເນການສູນ ເສຍ ແລະ ຜົນເສຍຫາຍ ກໍ່ຍັງມີໃນບາງປະເທດອາຊຽນເທົ່ານັ້ນ ເຊິ່ງສ່ວນໃຫຍ່ກໍ່ແມ່ນຂໍ້ມູນທີ່ຕິດພັນກັບໄພນ້ຳ ຖ້ວມ ແລະ ລະດັບນ້ຳທະເລຍິ່ງຂຶ້ນ. ຄຽງຄູ່ກັບບັນດາປະເທດອື່ນໆໃນອາຊຽນ, ຄາດວ່າ ສປປ ລາວ ຈະປະສົບກັບ ບັນຫາອຸນຫະພູມສະເລ່ຍສູງຂຶ້ນ ຈາກເພີ່ມຂຶ້ນ 0,05°C ປີ ໃນໄລຍະ 40 ປີຜ່ານມາ ເປັນ 1,4°C ເຖິງ 4,3°C ໃນປີ 2100, ພ້ອມທັງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງມີຄວາມຮຸນແຮງຂຶ້ນໃນໄລຍະຍາວ.

ອັດຕາການເພີ່ມຂຶ້ນຂອງການປ່ອຍທາດອາຍເຮືອນແກ້ວ ໃນບັນດາປະເທດໃນອ່າງແມ່ນ້ຳຂອງ ທຽບໃສ່ ລວມຍອດຜະລິດຕະພັນພາຍໃນ (GDP) ແມ່ນມີທ່າອ່ຽງຫຼຸດລົງຢ່າງສຳຄັນ ນັບແຕ່ປີ 1990 ເປັນຕົ້ນມາ, ໂດຍ ສະເພາະແມ່ນຢູ່ປະເທດກຳປູເຈຍ, ສປປ ລາວ ແລະ ມຽນມາ. ເຖິງຢ່າງໃດກໍ່ຕາມ, ການປ່ອຍທາດອາຍເຮືອນແກ້ວ ໃນບັນດາປະເທດອ່າງແມ່ນນ້ຳຂອງກໍ່ຍັງເພີ່ມຂຶ້ນໃນລະດັບ 1,3%3,6% ຕໍ່ປີ ຍ້ອນການເຕີບໂຕຂອງປະຊາຄອນ ແລະ ການພັດທະນາເສດຖະກິດ. ສັງເກດເຫັນວ່າອຸນຫະພູມ ແລະ ປະລິມານນ້ຳຝົນສະເລ່ຍປະຈຳປີ ໃນອ່າງ ແມ່ນ້ຳຂອງມີທ່າອ່ຽງເພີ່ມຂຶ້ນ ໂດຍອີງຕາມສະຕິຖິທີ່ໄດ້ເກັບກຳໃນໄລຍະຜ່ານມາ. ເຖິງຢ່າງໃດກໍ່ຕາມ ກໍ່ຍັງເປັນ ການຍາກ ທີ່ຈະລະບຸໄດ້ຢ່າງຈະແຈ້ງວ່າ ປະກົດການດັ່ງກ່າວເປັນສາເຫດໃຫ້ມີຝົນຕົກໜັກ, ມີພະຍຸຮຸນແຮງຂຶ້ນ, ມີ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຖີ່ຂຶ້ນ ຍ້ອນວ່າ ສະພາບພູມອາກາດ ແລະ ສະພາບອື່ນໆ ໃນອ່າງແມ່ນ້ຳຂອງໃນແຕ່ ລະປີ ແມ່ນບໍ່ຄືກັນ. ໂດຍອີງຕາມການພະຍາກອນໃນກໍລະນີຕ່ຳສຸດທີ່ອາດຈະມີຄວາມເປັນໄປໄດ້, ອຸນຫະພູມ ສະເລ່ຍໃນອ່າງແມ່ນ້ຳຂອງອາດສູງເຖິງ 3,3°C ໃນປີ 2060 ເຊິ່ງສູງກວ່າຖ້າທຽບໃສ່ການຄາດຄະເນອຸນຫະພູມ ສະເລ່ຍທີ່ອາດຈະເພີ່ມຂຶ້ນໂດຍລວມຂອງໂລກ.

1.2.2 ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໃນລະດັບສາກົນ ແລະ ພາກພື້ນ

ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໃນລະດັບສາກົນ ໂດຍພື້ນຖານແມ່ນການຈັດຕັ້ງປະຕິບັດ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) ແລະ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ. ໃນປີ 2020 ບັນດາລັດພາຄີຂອງ ສັນຍາປາຣີ ຕ້ອງໄດ້ນຳສົ່ງ ແຜນງານແຫ່ງຊາດການ ປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDCs) ສະບັບປັບປຸງໃໝ່ ແລະ ສ້າງແຜນດຳເນີນງານ ກ່ຽວກັບ ການປ່ອຍທາດອາຍເຮືອນແກ້ວຕ່ຳໃນໄລຍະຍາວ.

ພາຍໃຕ້ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ໂດຍສະເພາະ ຄາດໝາຍສູ້ຊົນສູງສຸດ ໄດ້ ຮຽກຮ້ອງໃຫ້ບັນດາລັດພາຄີ ມີພັນທະປະກອບສ່ວນ: (1) ນຳສົ່ງ ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂ ບັນຫາການປ່ຽນແປງດິນຟ້າອາກາດ ສະບັບປີ 2020 ແລະ ສະບັບປັບປຸງ ປີ 2025; (2) ສັງລວມຂໍ້ມູນໃນລະດັບ ໂລກໃນປີ 2023 ເພື່ອປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍ ກ່ຽວກັບ ການຄວບຄຸມການເພີ່ມ ຂຶ້ນຂອງອຸນຫະພູມສະເລ່ຍຂອງໂລກທີ່ໄດ້ຕົກລົງກັນໄວ້. ນອກຈາກນີ້ ສັນຍາດັ່ງກ່າວຍັງໄດ້ກຳນົດກອບແຜນງານ ເພື່ອເພີ່ມຄວາມໂປ່ງໃສ ໂດຍໄດ້ກຳນົດເງື່ອນໄຂ ແລະ ຮູບແບບການລາຍງານຂອງລັດພາຄີ.

ພ້ອມດຽວກັນນີ້ ບັນດາສະມາຊິກ ຂອງ ອົງການການບິນພົນລະເຮືອນສາກົນ ແລະ ລັດພາຄີຂອງ ສັນຍາ ກິກາລີ ພາຍໃຕ້ ສັນຍາ ມົງເຣອານ ກ່ຽວກັບ ການປົກປ້ອງຊັ້ນໂອໂຊນ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນ ວຽກງານການຫຼຸດຜ່ອນສະພາວະໂລກຮ້ອນ. ໃນປີ 2013 ອົງການການບິນພົນລະເຮືອນສາກົນ ໄດ້ຮັບຮອງເອົາ ກອບໜ້າວຽກໃນລະດັບໂລກ ມາດຕະການດ້ານການຕະຫຼາດ ເພື່ອບັນລຸຄວາມສົມດຸນໃນການປ່ອຍທາດອາຍ ເຮືອນແກ້ວ ໃນຂະແໜງການບິນ. ນອກຈາກນີ້, ສັນຍາ ກິກາລີ ຍັງໄດ້ກຳນົດເປົ້າໝາຍເພື່ອຢຸດຕິການນຳໃຊ້ ໄຮ ໂດຣຟລູໂອຣາກບອນ (HFCs) ທີ່ໄດ້ນຳໃຊ້ເຂົ້າໃນຂະບວນການທຳຄວາມເຢັນ ໃນໄລຍະປີ 2036 ຫາ 2047.

ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໄດ້ກຳນົດ "ຂີດໝາຍໃນອະນາຄົດ ທີ່ມີຄວາມຍືນຍົງຫຼາຍ ຂຶ້ນ ສຳລັບທຸກຄົນ". ເປົ້າໝາຍການພັດທະນາແບບຍືນຍົງທີ 13 ໄດ້ສົ່ງເສີມສະເພາະການປະຕິບັດວຽກງານ ການ

ຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ຕັ້ງເປົ້າໝາຍເພື່ອເສີມສ້າງຄວາມທົນທານ ແລະ ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທີ່ກ່ຽວຂ້ອງ. ເປົ້າໝາຍດັ່ງກ່າວ ຍັງຮຽກຮ້ອງໃຫ້ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນນະໂຍບາຍ ແລະ ແຜນການຕ່າງໆ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.

ບັນດາປະເທດອາຊຽນໄດ້ພ້ອມກັນຢືນຢັນຄືນເຈດຈຳນົງຂອງຕົນໃນການສະໜັບສະໜູນຈຸດປະສົງ ແລະ ເປົ້າໝາຍຂອງ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ. ໃນວັນທີ 02 ພະຈິກ 2019 ບັນດາປະເທດອາຊຽນ ໄດ້ອອກຖະແຫຼງການຮ່ວມ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດຕໍ່ ກອງປະຊຸມລັດພາຄີ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ຄັ້ງທີ 25. ປະຈຸບັນ ບັນດາປະເທດອາຊຽນ ກຳລັງຈັດຕັ້ງປະຕິບັດໜ້າວຽກທີ່ສຳຄັນ ໃນຂົງເຂດວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ. ຫຼາຍປະເທດໄດ້ມີການປະເມີນຄວາມສ່ຽງ ແລະ ຄວາມບອບບາງ, ການສ້າງຄວາມສາມາດ, ການປັບປຸງການຈັດຕັ້ງ, ການກຳນົດນະໂຍບາຍ ແລະ ສ້າງນິຕິກຳດ້ານການປ່ຽນແປງດິນຟ້າອາກາດ. ໃນນີ້ ບັນດາປະເທດອາຊຽນ ໄດ້ເພີ່ມຄວາມພະຍາຍາມຫຼາຍຂຶ້ນ ໃນວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນຊຸມປີຕໍ່ໜ້າ. ພ້ອມນີ້ ບັນດາປະເທດອາຊຽນ ໄດ້ວາງມາດຕະການແຕ່ຫົວທີ ໃນການກຽມຄວາມພ້ອມ ເສີມຂະຫຍາຍ ກອບຄວາມໂປ່ງໃສ ພ້ອມທັງແລກປ່ຽນບົດຮຽນ ແລະ ປະສົບການ ລະຫວ່າງ ບັນດາປະເທດ ສະມາຊິກດ້ວຍກັນ ດ້ານການຫຼຸດຜ່ອນທາດອາຍເຮືອນແກ້ວ, ໂດຍສະເພາະແມ່ນ ການສ້າງຄວາມສາມາດ ດ້ານການຄາດຄະເນການປ່ອຍ ແລະ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເພື່ອພ້ອມກັນກ້າວຂຶ້ນເປັນ ພາກພື້ນທີ່ມີການປ່ອຍ ແລະ ການດູດຊັບທາດອາຍເຮືອນແກ້ວເປັນສູນໃນອະນາຄົດ.

ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ໃນອ່າງແມ່ນ້ຳຂອງ ໂດຍລວມແລ້ວແມ່ນມີຕໍ່ ລະບົບຊັບພະຍາກອນທຳມະຊາດ ແລະ ເສດຖະກິດ-ສັງຄົມ, ທັງໃນອະດີດ, ປະຈຸບັນ ແລະ ຄາດຄະເນຜົນກະທົບໃນອະນາຄົດ. ຍຸດທະສາດ ແລະ ແຜນດຳເນີນງານ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນອ່າງແມ່ນ້ຳຂອງ (2017) ໄດ້ວາງມາດຕະການໃນການປັບຕົວ ໂດຍອີງໃສ່ພື້ນຖານດ້ານນະໂຍບາຍ ແລະ ພື້ນຖານດ້ານຄວາມບອບບາງ, ແນໃສ່ເພື່ອຫຼຸດຜ່ອນຜົນກະທົບ ແລະ ເພີ່ມຄວາມທົນທານຕໍ່ການປຽນແປງດິນຟ້າອາກາດ ໃນອ່າງແມ່ນ້ຳຂອງ. ຍຸດທະສາດໄລຍະຍາວໃນອ່າງແມ່ນ້ຳຂອງ ໄດ້ໃຫ້ຄວາມສຳຄັນໃນການຮັບມືຕໍ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດທີ່ສຳຄັນທີ່ອາດເພີ່ມທະວີຂຶ້ນ ເຊິ່ງອາດສົ່ງຜົນໃຫ້ຜົນຜະລິດກະສິກຳຫຼຸດລົງ ຍ້ອນຂາດແຄນນ້ຳ ແລະ ໄພນ້ຳຖ້ວມທີ່ອາດເພີ່ມຄວາມຮຸນແຮງຂຶ້ນ. ສະນັ້ນ, ບັນດາປະເທດໃນອ່າງແມ່ນ້ຳຂອງ ຄວນມີຍຸດທະສາດ ແລະ ມາດຕະການໃນໄລຍະຍາວ ໃນການສ້າງອ່າງເກັບນ້ຳຊົນລະປະທານ ແລະ ໂຄງລ່າງພື້ນຖານຕ້ານໄພນ້ຳຖ້ວມ ຕາມຄວາມເໝາະສົມ.

1.3 ສະພາບເງື່ອນໄຂຂອງ ສປປ ລາວ

1.3.1 ສະພາບພູມສັນຖານ ແລະ ພູມອາກາດ

ສປປ ລາວ ຕັ້ງຢູ່ໃຈກາງຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້ ເຊິ່ງເປັນຂົງເຂດໜຶ່ງທີ່ມີການພັດທະນາ ແລະ ເຕີບໂຕໄວທີ່ສຸດໃນໂລກ. ສປປ ລາວ ອ້ອມຮອບດ້ວຍປະເທດຣາຊະອານາຈັກ ກຳປູເຈຍ, ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ, ສາທາລະນະລັດແຫ່ງສະຫະພາບມຽນມາ, ຣາຊະອານາຈັກໄທ, ສສ ຫວຽດນາມ ແລະ ສປ ຈີນ ແລະ ບໍ່ມີຊາຍແດນຕິດກັບທະເລ. ເນື້ອທີ່ທັງໝົດຂອງ ປະເທດແມ່ນ 236.800 ກິໂລແມັດມົນທົນ, ໃນນີ້ 70% ເປັນເຂດພູດອຍ ແລະ ລຽບຕາມສາຍພູຫຼວງ. ພື້ນທີ່ທົ່ງພຽງສ່ວນໃຫຍ່ແມ່ນຢູ່ລຽບຕາມແມ່ນ້ຳຂອງ ເຊິ່ງມີເນື້ອທີ່ອ່າງຮັບນ້ຳ 35% ໃນດິນແດນຂອງ ສປປ ລາວ. ສປປ ລາວ ມີສະພາບພູມອາກາດຮ້ອນຊຸ່ມ ໂດຍໄດ້ຮັບອິດທິພົນຈາກລົມມໍລະສຸມທາງພາກຕາເວັນຕົກສ່ຽງໃຕ້ ເຊິ່ງພາໃຫ້ມີຝົນຕົກຫຼາຍ ແລະ ມີຄວາມຊຸ່ມສູງ. ພູມອາກາດໄດ້ແບ່ງເປັນສອງລະດູໃຫຍ່ ຄື ລະດູຝົນ (ພຶດສະພາ - ກັນຍາ) ແລະ ລະດູແລ້ງ (ຕຸລາ - ເມສາ), ມີລະດັບນ້ຳຝົນສະເລ່ຍ 1.900 ມີລິແມັດ ຕໍ່ປີ. ໃນນີ້ 80% ຂອງນ້ຳຝົນແມ່ນຢູ່ໃນລະດູຝົນ. ອຸນຫະພູມສະເລ່ຍສູງສຸດແມ່ນປະມານ 31°°C ແລະ ຕ່ຳສຸດແມ່ນປະມານ 27°C

1.3.2 ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຊັບພະຍາກອນທີ່ດິນ: ອີງຕາມແຜນແມ່ບົດການນຳໃຊ້ທີ່ດິນແຫ່ງຊາດ, ການນຳໃຊ້ທີ່ດິນແບ່ງເປັນ 8 ປະເພດຕາມຈຸດປະສົງຄື (1) ທີ່ດິນກະສິກຳ, (2) ທີ່ດິນປ່າໄມ້, (3) ທີ່ດິນບໍລິເວນນ້ຳ, (4) ທີ່ດິນອຸດສະຫະກຳ, (5) ທີ່ດິນຄົມມະນາຄົມ, (6) ທີ່ດິນວັດທະນະທຳ, (7) ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ (8) ທີ່ດິນປຸກສ້າງ. ຮອດປີ 2030, ສປປ ລາວ ໄດ້ກຳນົດເປົ້າໝາຍໃນການສຳຫຼວດທີ່ດິນເພື່ອສະຫງວນ ແລະ ອະນຸລັກ ເປັນທີ່ດິນປ່າໄມ້ປະມານ 16,5 ລ້ານເຮັກຕາ (ຫຼື 70% ຂອງເນື້ອທີ່ທົ່ວປະເທດ) ໃນນີ້ລວມມີເນື້ອທີ່ດິນປ່າ ສະຫງວນກວມເອົາ 20%, ເນື້ອທີ່ດິນປ່າປ້ອງກັນ 35% ແລະ ເນື້ອທີ່ດິນປ່າຜະລິດກວມເອົາ 13% ແລະ ປ່າປູກ ອີກຈຳນວນໜຶ່ງ, ເນື້ອທີ່ດິນປູກໄມ້ອຸດສາຫະກຳກວມເອົາ 2% ແລະ ທີ່ດິນສຳລັບການພັດທະນາອື່ນໆ 30% ເຊິ່ງລວມມີທີ່ດິນກະສິກຳ 19%, ທີ່ດິນປຸກສ້າງ ແລະ ນຳໃຊ້ເຂົ້າໃນຂະແໜງການອື່ນໆ 11%. ດັ່ງທີ່ກ່າວມານັ້ນ, ພື້ນທີ່ສ່ວນໃຫຍ່ຂອງປະເທດເປັນພູຜາ ແລະ ເນື້ອທີ່ 5,24% ມີຄວາມສ່ຽງທີ່ຈະເກີດດິນຖະຫຼົ່ມ. ທີ່ດິນທີ່ ອຸດົມສົມບູນ ແລະ ເໝາະສົມສຳລັບການກະສິກຳແມ່ນມີຈຳກັດ ຫຼື ມີພຽງ 3,8 ລ້ານ ເຮັກຕາ (ປະມານ 16% ເນື້ອທີ່ທົ່ວປະເທດ). ນອກຈາກນັ້ນ ສປປ ລາວ ຍັງມີດິນຖ່ານຕົມ ທີ່ເປັນບ່ອນສຳຄັນ ໃນການເກັບກັກທາດກາກ ບອນ. ອີງຕາມການສຳຫຼວດເບື້ອງຕົ້ນ ໃນປີ 2022 ໄດ້ພົບເນື້ອທີ່ດິນຖ່ານຕົມແລ້ວປະມານ 1.449 ເຮັກຕາ ໃນ ແຂວງ ຈຳປາສັກ, ແຂວງ ວຽງຈັນ, ນະຄອນຫຼວງວຽງຈັນ ແລະ ແຂວງ ໄຊສົມບູນ ເຊິ່ງຍັງຈະສືບຕໍ່ສຳຫຼວດເພີ່ມ ເຕີມໃນຂອບເຂດທົ່ວປະເທດ.

ຊັບພະຍາກອນປ່າໄມ້: ຕາມສະຖິຕິຜ່ານມາໃນຊຸມປີ 1970, ຄວາມປົກຫຸ້ມປ່າໄມ້ຂອງ ສປປ ລາວ ກວມ ເອົາ 70% ຂອງເນື້ອທີ່ປະເທດ, ແຕ່ໄດ້ຫຼຸດລົງຍ້ອນການບຸກເບີກເນື້ອທີ່ປ່າ, ການຂຸດຄົ້ນໄມ້ ແລະ ໄຟໄໝ້ປ່າ. ອັດຕາການຫຼຸດລົງຂອງເນື້ອທີ່ປ່າໄມ້ ແມ່ນ 1,1% ຕໍ່ປີ ໃນລະຫວ່າງປີ 2005 – 2015. ໃນປີ 2015 ສປປ ລາວ ມີຄວາມປົກຫຸ້ມປ່າໄມ້ກວມເອົາ 58% ແລະ ປີ 2019 ກວມເອົາ 62% ໃນຂອບເຂດທົ່ວປະເທດ ແລະ ສືບຕໍ່ສູ້ ຊົນເພື່ອຍົກລະດັບຄວາມປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດຕາມຍຸດທະສາດປ່າໄມ້ຮອດປີ 2035. ເນື້ອທີ່ສາມາດກາຍເປັນປ່າໄດ້ມີ 26,7%, ເນື້ອທີ່ດິນກະສິກຳ 10,5%, ພື້ນທີ່ພືດພັນອື່ນໆ 1,7%, ແຫຼ່ງ ນ້ຳໜ້າດິນ 1,7%, ພື້ນທີ່ດິນອື່ນໆ 1,1% ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ 0,4%. ປ່າໄມ້ມີຄວາມສຳຄັນຢ່າງ ຫຼວງຫຼາຍຕໍ່ການດຳລົງຊີວິດຂອງປະຊາຊົນລາວ. ໃນປີ 2005, ປະມານ 80% ຂອງພົນລະເມືອງລາວດຳລົງຊີວິດ ຕິດພັນກັບຊັບພະຍາກອນປ່າໄມ້.

ຊັບພະຍາກອນນ້ຳ: ສປປ ລາວ ມີປະລິມານນ້ຳໜ້າດິນປະມານ 377,3 ກິໂລແມັດກ້ອນ (Km^3) ຕໍ່ປີ ເຊິ່ງ ຄິດສະເລ່ຍເປັນປະມານ 55.000 ແມັດກ້ອນຕໍ່ຄົນຕໍ່ປີ. ເນື້ອທີ່ປະມານ 95% ຂອງປະເທດແມ່ນນອນຢູ່ໃນອ່າງ ແມ່ນ້ຳຂອງ ແລະ ປະກອບສ່ວນ 35% ຂອງປະລິມານນ້ຳໜ້າດິນລົງສູ່ແມ່ນ້ຳຂອງ. ການນຳໃຊ້ນ້ຳໃນ ສປປ ລາວ ທັງໝົດແມ່ນປະມານ 4.260 ລ້ານ Km^3/ປີ, ຕົກເປັນ 1,3% ຂອງຊັບພະຍາກອນນ້ຳຈືດທັງໝົດຂອງຕົນ. ການ ນຳໃຊ້ນ້ຳເຂົ້າໃນອຸດສາຫະກຳແມ່ນ 4%; ການນຳໃຊ້ນ້ຳໃນຄົວເຮືອນແມ່ນ 3,1% ແລະ ການນຳໃຊ້ນ້ຳເຂົ້າໃນການ ກະສິກຳແມ່ນ 93%.

ຊັບພະຍາກອນແຮ່ທາດ: ທ່າແຮງບໍ່ມຊ້ອນຂອງຊັບພະຍາກອນແຮ່ທາດທີ່ມີຢູ່ ສປປ ລາວ ທີ່ໄດ້ຂໍ້ມູນຈາກ ໂຄງການ ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະຂຸດຄົ້ນປຸງແຕ່ງແຮ່ທາດ ມີຂໍ້ ມູນປະລິມານສະສົມແຮ່ທາດຄື ແຮ່ຄຳ-ເງິນ ແມ່ນມີຈຳນວນ 389.183.275 ໂຕນ ແລະ ແຮ່ທອງ ຈຳນວນ 156.269.912 ໂຕນ, ແຮ່ນິແກນ ຈຳນວນ 608.075 ໂຕນ, ແຮ່ໂກບານ ຈຳນວນ 21.153 ໂຕນ, ແຮ່ອັງຕີ ມອນ ຈຳນວນ 482.960 ໂຕນ, ແຮ່ກົ່ວ ຈຳນວນ 23.061.700 ໂຕນ, ແຮ່ຊີນ+ສັງກະສີ ຈຳນວນ 2.087.953 ໂຕນ, ແຮ່ເຫຼັກ ຈຳນວນ 100.907.894 ໂຕນ, ແຮ່ທາດຫາຍາກ ຈຳນວນ 319.631.237 ໂຕນ, ຫີນປູນ ຈຳນວນ 1.364.985.807 ໂຕນ, ຫີນກາວ ຈຳນວນ 11.080.986 ໂຕນ, ແຮ່ບົກຊິດ ຈຳນວນ 407.131.300 ໂຕນ, ເກືອໂປຕາສ ຈຳນວນ 12.320.015.470 ໂຕນ, ຖ່ານຫີນ ຈຳນວນ 4.677.099.875 ໂຕນ, ບາຣິດ ຈຳນວນ 92.876.690 ໂຕນ, ແຮ່ກວັດ ຈຳນວນ 852.081 ໂຕນ, ຫີນປາໂກໄດ ຈຳນວນ 1.115.905 ໂຕນ, ຫີນປູນ 1.153.230.814 ໂຕນ, ດິນໜຽວ ຈຳນວນ 8.417.500 ໂຕນ. ຊັບພະຍາກອນແຮ່ທາດທີ່ສຳຄັນ ແລະ

ກຳລັງຖືກຂຸດຄົ້ນໃນປະຈຸບັນ ປະກອບມີ ແຮ່ຄຳ, ທອງ, ແຮ່ທາດຫາຍາກ, ກົ່ວ, ຊີນ, ສັງກະສີ, ອັງຕີມອນ, ເຫຼັກ, ບົກຊິດ, ຖ່ານຫີນ, ຫີນກາວ, ເກືອໂປຕັສ, ຫີນປູນຜະລິດຊີມັງ, ຫີນປາໂກໄດ, ຫີນຮັບໃຊ້ກໍ່ສ້າງ ແລະ ຫີນອຸດສາຫະກຳຈຳນວນໜຶ່ງ. ໃນໄລຍະ 10 ປີຜ່ານມາ ການສົ່ງເສີມການພັດທະນາບໍ່ແຮ່ ແມ່ນມີຜົນສຳເລັດໃນຫຼາຍດ້ານ, ເປັນຕົ້ນ ການສ້າງຕັ້ງໂຮງງານ ຂຸດຄົ້ນ ປຸງແຕ່ງ ແລະ ແປຮູບແຮ່ທາດ, ການຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ. ທັງໝົດເຫຼົ່ານີ້ ແມ່ນເປັນທ່າແຮງເພື່ອສ້າງຖານລາຍຮັບໃຫ້ແກ່ປະເທດ ໃນໄລຍະຍາວ.

ພະລັງງານ: ທ່າແຮງການພັດທະນາໄຟຟ້າພະລັງງານນ້ຳແມ່ນປະມານ 23.000 MW ເຖິງ 26.000 MW. ອີງຕາມການປັບປຸງຂໍ້ມູນແຫຼ່ງຜະລິດໄຟຟ້າໃນປີ 2022, ໂຮງງານໄຟຟ້າທີ່ດຳເນີນການຜະລິດແລ້ວ ໃນກຳລັງຕິດຕັ້ງ 1 MW ຂຶ້ນໄປ ປະກອບມີ 93 ໂຄງການ, ລວມກຳລັງຕິດຕັ້ງທັງໝົດ 11.661,14 MW, ລວມພະລັງງານທີ່ຜະລິດໄດ້ທັງໝົດ 58.700,61 GWh/ປີ. ໃນນີ້ປະກອບມີ ເຂື່ອນໄຟຟ້າພະລັງງານນ້ຳ 81 ໂຄງການ, ມີກຳລັງຕິດຕັ້ງ 9.615,14 MW, ພະລັງງານທີ່ຜະລິດໄດ້ 45.703,25 GWh/ປີ. ນອກຈາກນີ້ ກໍ່ແມ່ນການຜະລິດໄຟຟ້າຈາກຖ່ານຫີນ ແລະ ພະລັງງານທົດແທນອື່ນໆ.

ຮອດປີ 2021, ອັດຕາການຊົມໃຊ້ໄຟຟ້າທົ່ວປະເທດ ສາມາດບັນລຸໄດ້ຄື 1) ຈຳນວນເມືອງທີ່ມີໄຟຟ້າໃຊ້ແມ່ນບັນລຸ 100% ໃນຈຳນວນ 148 ເມືອງ; 2) ຈຳນວນບ້ານທີ່ມີໄຟຟ້າໃຊ້ແມ່ນລັບລຸ 93,3% ໃນຈຳນວນບ້ານທັງໝົດ 8.450 ບ້ານ ແລະ ຈຳນວນບ້ານ ທີ່ມີໄຟຟ້າໃຊ້ແລ້ວມີ 7.866 ບ້ານ; ແລະ 3) ຈຳນວນຄົວເຮືອນທີ່ມີໄຟຟ້າໃຊ້ແມ່ນບັນລຸ 95% ເຊິ່ງ ເປັນຕົວຊີ້ວັດໜຶ່ງທີ່ສຳຄັນ ແລະ ສະແດງເຖິງເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຫລຸດຜ່ອນຄວາມທຸກຍາກ. ອີງຕາມບົດສະຫຼຸບແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ VIII (2016 2020) ແລະ ແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ IX (2021 2025), ລະບົບສາຍສົ່ງໄຟຟ້າ ທີ່ນຳໃຊ້ໃນທົ່ວປະເທດ ມີຄວາມຍາວທັງໝົດ 63.563 km/cct. ໃນນີ້ປະກອບມີສາຍສົ່ງແຮງດັນສູງ 500 kV: 626 km/cct; 230 kV: 2.637 km/cct; 115 kV:7.213 km/cct; ສາຍສົ່ງແຮງດັນກາງ 22 kV: 34.626 km/cct; ແລະ ສາຍສົ່ງແຮງດັນຕ□ຳ 0,4 kV: 20.441 km/cct. ລະບົບສະຖານີໄຟຟ້າ ທີ່ນຳໃຊ້ໃນຂອບເຂດທົ່ວປະເທດທັງໝົດ 74 ແຫ່ງ. ໃນນີ້ປະກອບມີ ສະຖານີ 230/115/22 kV ມີ 11 ແຫ່ງ, ສະຖານີ 115/22 kV ມີ 62 ແຫ່ງ ແລະ ສະຖານີ T-Off 230 kV ມີ 1 ແຫ່ງ.

ເຖິງວ່າ ສປປ ລາວ ມີຄວາມອາດສາມາດໃນການພັດທະນາໄຟຟ້າພະລັງງານນ້ຳໄດ້ຫຼາຍກໍ່ຕາມ, ແຕ່ການປ່ຽນແປງດິນຟ້າອາກາດ ອາດບັ່ນທອນສະຖຽນລະພາບຂອງປະລິມານນ້ຳ ແລະ ກຳລັງການຜະລິດ. ຕົວຢ່າງ ໄພແຫ້ງແລ້ງທີ່ເກີດຂຶ້ນໃນປີ 2019 ໄດ້ສົ່ງຜົນກະທົບຕໍ່ການຜະລິດ, ເຮັດໃຫ້ຄວາມໝັ້ນຄົງ ແລະ ການສົ່ງອອກພະລັງງານໄຟຟ້າຫຼຸດລົງ. ນອກຈາກນີ້ ລາຄາໄຟຟ້າອາດມີຄວາມບໍ່ແນ່ນອນ ເຊິ່ງຄາດວ່າຈະມີຄວາມແປປວນໃນລະດັບສູງໃນປີ 2030 ແລະ ອາດເຮັດໃຫ້ການຜະລິດພະລັງງານດັ່ງກ່າວຫຼຸດລົງເຖິງ 77% ໃນປີ 2040.

ນອກຈາກພະລັງງານນ້ຳທີ່ກ່າວມາ, ສປປ ລາວ ຍັງມີພະລັງງານທົດແທນອື່ນທີ່ສຳຄັນ ເປັນຕົ້ນແມ່ນ: ພະລັງງານຈາກຊີວະມວນ, ແສງຕາເວັນ, ແກັດຊີວະພາບ, ຄວາມຮ້ອນຈາກໃຕ້ດິນ ແລະ ລົມ, ເຊິ່ງອາດສາມາດຜະລິດໄຟຟ້າໄດ້ປະມານ 2.068 ເມກະວັດ (MW) ແລະ ພະລັງງານຄວາມຮ້ອນ 889 ກິໂລໂຕນ (Ktoe). ໃນນັ້ນ, ຊີວະມວນ ມີທ່າແຮງທີ່ອາດສາມາດຜະລິດໄຟຟ້າໄດ້ເຖິງ 938 MW ແລະ ພະລັງງານຄວາມຮ້ອນ 227 Ktoe, ໄຟຟ້າຈາກແສງຕາເວັນອາດມີເຖິງ 511 MW ແລະ ພະລັງງານຄວາມຮ້ອນ 218 ກິໂລໂຕນ (Ktoe), ແກັດຊີວະພາບອາດສາມາດຜະລິດໄຟຟ້າໄດ້ເຖິງ 313 MW ແລະ ພະລັງງານຄວາມຮ້ອນ 444 Ktoe, ສິ່ງເສດເຫຼືອ 216 MW, ໄຟຟ້າຄວາມຮ້ອນຈາກໃຕ້ດິນ 59 MW ແລະ ລົມມີຫຼາຍກວ່າ 40 MW. ໃນປີ 2015, ການນຳໃຊ້ພະລັງງານທັງໝົດໃນປະເທດແມ່ນ 3.122 Ktoe ໃນຂະນະທີ່ການຜະລິດ ແລະ ສະໜອງທັງໝົດແມ່ນ 4.765 Ktoe (ສ່ວນທີ່ເຫຼືອແມ່ນສົ່ງອອກ). ພະລັງງານທີ່ນຳໃຊ້ ປະມານ 46% ແມ່ນມາຈາກຊີວະມວນ (ຟືນ ແລະ ຖ່ານ), ນ້ຳມັນ 29%, ຖ່ານຫີນ 13%, ໄຟຟ້າ 12%. ນັບແຕ່ປີ 2015 ເປັນຕົ້ນມາ, ສປປ ລາວ ໄດ້ຜະລິດ ພະລັງງານໄຟຟ້າດ້ວຍຖ່ານຫີນລິກໄນໃນສັດສ່ວນ 14% ເຊິ່ງພາໃຫ້ມີການເພີ່ມການປ່ອຍທາດອາຍເຮືອນແກ້ວ ຂອງປະເທດຂຶ້ນ. ການຜະລິດກະແສໄຟຟ້າຈາກຖ່ານຫີນສາມາດເພີ່ມຂຶ້ນໄດ້ເຖິງ 22% ຂອງການຜົດລິດພະລັງງານທັງໝົດໃນປີ 2040, ເຊິ່ງການປ່ອຍທາດອາຍເຮືອນແກ້ວກໍ່ຈະເພີ່ມຂຶ້ນ 4 ເທົ່າຕົວທຽບໃສ່ລະດັບການ

ປ່ອຍໃນປີ 2015 ຖ້າບໍ່ມີມາດຕະການຫຼຸດຜ່ອນທີ່ເໝາະສົມ. ການຜະລິດໄຟຟ້າສ່ວນໃຫຍ່ແມ່ນຈາກພະລັງງານທົດແທນ. ຄາດຄະເນວ່າຄວາມຕ້ອງການພະລັງງານທັງໝົດໃນປີ 2025 ແມ່ນ 4.930 ກິໂລໂຕນ (Ktoe) ແລະ ສປປ ລາວ ໄດ້ຕັ້ງເປົ້າໝາຍວ່າ ຈະເພີ່ມການນຳໃຊ້ພະລັງງານທົດແທນໃຫ້ກວມເອົາ 30% ຂອງຄວາມຕ້ອງການພະລັງງານທັງໝົດໃນປີ 2025.

ຊີວະນາໆພັນ: ສປປ ລາວ ຍັງມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ. ສັດເລືອຄານ ແລະ ສັດເຄິ່ງບົກເຄິ່ງນ້ຳມີ 166 ສາຍພັນ, ນົກ 700 ສາຍພັນ, ເຈຍ 90 ສາຍພັນ ແລະ ສັດລ້ຽງລູກດ້ວຍນ້ຳນົມ 500 ສາຍພັນ. ໃນແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງ ປະກອບມີຊະນິດພັນປາພື້ນເມືອງປະມານ 500 ສາຍພັນ. ນອກຈາກນັ້ນ, ກໍ່ຄາດວ່າຍັງມີພືດໃຫ້ດອກປະມານ 8.000-11.000 ສາຍພັນ. ຊີວະນາພັນແມ່ນມີຄຸນປະໂຫຍດຢ່າງຫຼວງຫຼາຍຕໍ່ປະຊາຊົນ ເປັນຕົ້ນ ເຄື່ອງປ່າຂອງດົງ ແລະ ພືດທີ່ເປັນຢາປົວພະຍາດ. ນອກນັ້ນ, ຍັງເປັນຊະນິດພັນກະສິກຳທີ່ມີຄວາມສຳຄັນທາງດ້ານເສດຖະກິດ. ປະມານ 67% ຂອງປະຊາກອນລາວ ແມ່ນຢູ່ເຂດຊົນນະບົດ ແລະ ອາໄສປ່າໄມ້ໃນການດຳລົງຊີວິດ. ລາຍໄດ້ຂອງຄອບຄົວທີ່ທຸກຍາກປະມານ 40% ແມ່ນມາຈາກເຄື່ອງປ່າຂອງດົງ. ຍ້ອນອຸນຫະພູມສະເລ່ຍຂອງໂລກມີທ່າອ່ຽງເພີ່ມຂຶ້ນ ໃນອະນາຄົດ ເຊິ່ງຈະສົ່ງຜົນກະທົບຕໍ່ຄວາມສາມາດປັບຕົວຂອງຊີວະນານາພັນ ແລະ ກະທົບຕໍ່ການເຂົ້າເຖິງຊັບພະຍາກອນດັ່ງກ່າວຂອງປະຊາຊົນ ໂດຍສະເພາະແມ່ນຊາວຊົນນະບົດ ຢ່າງຫຼີກລ່ຽງບໍ່ໄດ້ ເຊິ່ງຈຳເປັນຕ້ອງມີມາດຕະການອັນເໝາະສົມແຕ່ຫົວທີ.

1.3.3 ເສດຖະກິດ-ສັງຄົມ

ເສດຖະກິດ ຂອງ ສປປ ລາວ ມີການເຕີບໂຕຢ່າງຕໍ່ເນື່ອງສະເລ່ຍໃນລະດັບ 6% ຕະຫຼອດໄລຍະໜຶ່ງທົດສະວັດຜ່ານມາ (2012-2021), ສ່ວນໃຫຍ່ແມ່ນຍ້ອນການສົ່ງອອກແຮ່ທາດ, ໄຟຟ້າຈາກພະລັງງານນ້ຳ, ໄມ້ ແລະ ຜະລິດຕະພັນໄມ້. ໃນປີ 2018 ລວມຍອດຜະລິດຕະພັນພາຍໃນ ຂະຫຍາຍຕົວໃນລະດັບ 6,3%, ມູນຄ່າຕາມລາຄາໃນປີ ຕົກເປັນ 152.414 ຕື້ກີບ ຫຼື 18,13 ຕື້ໂດລາສະຫະລັດ. ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ແມ່ນ 2.585 ໂດລາສະຫະລັດ ເຊິ່ງປະຊາກອນ ສປປ ລາວ ໃນປີດັ່ງກ່າວແມ່ນປະມານ 7.012.995 ຄົນ. ຂະແໜງກະສິກຳ ຂະຫຍາຍຕົວ 1,3%, ກວມເອົາ 15,70 ຂອງລວມຍອດຜະລິດຕະພັນພາຍໃນ. ຂະແໜງອຸດສາຫະກຳ ຂະຫຍາຍຕົວ 7,8%, ກວມເອົາ 31,10% ຂອງລວມຍອດຜະລິດຕະພັນພາຍໃນ. ຂະແໜງບໍລິການ ຂະຫຍາຍຕົວ 6,9%, ກວມເອົາ 41,60% ຂອງລວມຍອດຜະລິດຕະພັນພາຍໃນ. ຂະແໜງພາສີ-ອາກອນຜະລິດ ຂະຫຍາຍຕົວ 6,2%, ກວມເອົາ11,10% ຂອງລວມຍອດຜະລິດຕະພັນພາຍໃນ.

ເຖິງແມ່ນວ່າໃນລະຍະຜ່ານມາ ເສດຖະກິດຈະມີການເຕີບໂຕຢ່າງຕໍ່ເນື່ອງກໍ່ຕາມ, ແຕ່ກໍ່ຍັງມີຄວາມບອບບາງ ເນື່ອງຈາກ ການຂັບເຄື່ອນເສດຖະກິດ ຍັງອີງໃສ່ຊັບພະຍາກອນທຳມະຊາດເປັນຫຼັກ, ຖານການຜະລິດຍັງບໍ່ເຂັ້ມແຂງ, ການຜະລິດສິນຄ້າຍັງບໍ່ຫຼາກຫຼາຍ ແລະ ໂຄງລ່າງພື້ນຖານຍັງບໍ່ທັນພຽງພໍ ແລະ ບໍ່ມີຄວາມທົນທານຕໍ່ໄພພິບັດທຳມະຊາດ ເຊິ່ງເປັນປັດໄຈເຮັດໃຫ້ ດັດສະນີຄວາມບອບບາງ ທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ ບໍ່ບັນລຸຕາມເປົ້າໝາຍ. ດ້ວຍເຫດນີ້, ສປປ ລາວ ຈຶ່ງຍັງບໍ່ສາມາດ ປະກາດຫຼຸດພົ້ນອອກຈາກ ປະເທດດ້ອຍພັດທະນາ ໃນປີ 2020 ໄດ້ຕາມກຳນົດໄວ້ໃນ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ໄດ້. ອີງຕາມ ການກຳນົດມາດຖານ ແລະ ເງື່ອນໄຂໃນການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ຂອງອົງການສະຫະປະຊາຊາດ ແມ່ນຕ້ອງບັນລຸ 3 ເງື່ອນໄຂຄື: 1) ລະດັບລາຍໄດ້ແຫ່ງຊາດຕໍ່ຫົວຄົນ (GNP per capita), 2) ລະດັບການພັດທະນາຊັບພະຍາກອນມະນຸດ (HAI) ແລະ 3) ລະດັບຄວາມບອບບາງດ້ານເສດຖະກິດ (EVI) ຊຶ່ງຈະມີການປະເມີນທຸກໆ 3 ປີ ຫຼື ອາດມີການປ່ຽນແປງ ໂດຍອີງຕາມສະພາບ ເສດຖະກິດ-ສັງຄົມຂອງໂລກ ໃນໄລຍະ 3 ປີຜ່ານມາ. ແຕ່ສຳລັບສະພາບຂອງ ສປປ ລາວ ແລ້ວ ປະມານໜຶ່ງສ່ວນສີ່ຂອງປະຊາກອນ ດຳລົງຊີວິດໃນເງື່ອນໄຂທີ່ຕ່ຳກວ່າລະດັບເສັ້ນຄວາມທຸກຍາກ ທີ່ສະຫະປະຊາຊາດກຳນົດ ແລະ ກໍ່ເປັນປະເທດທີ່ມີເສດຖະກິດນ້ອຍທີ່ສຸດອັນດັບທີສາມ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ໃນປີ 2020, ສປປ ລາວ ໄດ້ປະເຊີນກັບໄພຂົ່ມຂູ່ຈາກການປ່ຽນແປງດິນຟ້າອາກາດ ແລະ ພະຍາດໄຂ້ຫວັດສາຍພັນໃໝ່ລະບາດ (COVID-19) ເຊິ່ງເຮັດໃຫ້ເສດຖະກິດຂອງ ສປປ ລາວ ເຕີບໂຕພຽງ 3,3%. ອັດຕາດັ່ງກ່າວ ຍັງຖືເປັນໜຶ່ງໃນອັດຕາການເຕີບໂຕທີ່ສູງທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້. ການປ່ຽນແປງດິນຟ້າອາກາດ ເປັນໄພຂົ່ມຂູ່ຕໍ່ການເຕີບໂຕດ້ານເສດຖະກິດ ແລະ

ການພັດທະນາແບບຍືນຍົງຂອງ ສປປ ລາວ. ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໃນໄລຍະ 2018 ແລະ 2019 ໄດ້ເຮັດໃຫ້ມີການສູນເສຍດ້ານເສດຖະກິດເຖິງ 750 ລ້ານໂດລາສະຫະລັດ ແລະ ສົ່ງຜົນກະທົບຕໍ່ການກະສິກຳ, ການຜະລິດກະແສໄຟຟ້າ ແລະ ການຂົນສົ່ງ. ເຖິງຢ່າງໃດກໍ່ຕາມ, ສປປ ລາວ ກໍ່ຍັງໄດ້ສືບຕໍ່ເອົາໃຈໃສ່ຕິດຕາມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອໃຫ້ສາມາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາໃນປີ 2026 ແລະ ຮັບປະກັນຄວາມຍືນຍົງ. ສັງເກດຕີລາຄາລວມແລ້ວ ໃນອະນາຄົດ ການພັດທະນາເສດຖະກິດຂອງ ສປປ ລາວ ຈະຍັງຄົງຂຶ້ນກັບ ຊັບພະຍາກອນທຳມະຊາດ (ແຮ່ທາດ, ໄຟຟ້າພະລັງງານນ້ຳ ແລະ ໄມ້), ການບໍລິການ ແລະ ອຸດສາຫະກຳ. ເຫັນໄດ້ວ່າ ຕະຫຼອດໄລຍະປີ 2020-2022, ຂະແໜງກະສິກຳ ແລະ ອຸດສາຫະກຳຂອງ ສປປ ລາວ ກໍ່ຍັງຄົງເຕີບໂຕຢ່າງຕໍ່ເນື່ອງຢູ່.

ສປປ ລາວ ມີປະຊາກອນ 7.012.995 ຄົນໃນປີ 2018. ປະຊາກອນສ່ວນໃຫຍ່ຢູ່ໃນເກນອາຍຸໜຸ່ມ (ອາຍຸສະເລ່ຍ, ລະຫວ່າງ 24,4 ປີ). ເຖິງຢ່າງໃດກໍ່ຕາມ 65% ຂອງປະຊາກອນລາວ ດຳລົງຊີວິດຢູ່ເຂດຊົນນະບົດ ແລະ 70% ຂອງປະຊາກອນມີອາຊີບເປັນຊາວກະສິກອນ ເຊິ່ງປະກອບສ່ວນ 17,7% ຂອງລວມຍອດຜະລິດຕະພັນພາຍໃນ. ໃນນັ້ນ ເກືອບ 70% ຂອງວຽກງານກະສິກຳແມ່ນແຮງງານເພດຍິງ. ຊາວກະສິກອນລາວດຳລົງຊີວິດຕິດພັນກັບທຳມະຊາດ ແລະ ໄດ້ຮັບໂພຊະນາການຢ່າງຫຼວງຫຼາຍຈາກຊັບພະຍາກອນປ່າໄມ້, ເຄື່ອງປ່າຂອງດົງ ແລະ ສາຍນ້ຳລຳທານ ເຊິ່ງເປັນອີກສາຍເຫດໜຶ່ງເຮັດໃຫ້ຊາວກະສິກອນ ມີຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ.

ອີງຕາມ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ລັດຖະບານ ໄດ້ເລັ່ງໃສ່ ການຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ ເພື່ອກາຍເປັນປະເທດທີ່ມີລາຍຮັບປານກາງ, ການເຕີບໂຕດ້ານເສດຖະກິດມີຄວາມຍືນຍົງ, ບັນລຸໄດ້ບັນດາເປົ້າໝາຍການພັດທະນາແບບຍືນຍົງ ທີ່ລວມເອົາການລົບລ້າງຄວາມທຸກຍາກໃຫ້ເປັນສູນ ແລະ ມີຄວາມທົນທານຕໍ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຕາມທິດສີຂຽວ ແລະ ຍືນຍົງ.

1.4 ຕີລາຄາການຈັດຕັ້ງປະຕິບັດຍຸດທະສາດ, ຜົນກະທົບ ແລະ ການແກ້ໄຂວຽກງານການປ່ຽນແປງດິນຟ້າອາກາດ ຢູ່ ສປປ ລາວ ໃນໄລຍະຜ່ານມາ

1.4.1 ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ເສດຖະກິດ-ສັງຄົມ

ການປ່ຽນແປງດິນຟ້າອາກາດ ແມ່ນ ສະພາວະການປ່ຽນແປງຂອງອຸນຫະພູມສະເລ່ຍເທິງພື້ນຜິວໂລກ ທີ່ເພີ່ມຂຶ້ນເກີນເກນປົກກະຕິໃນໄລຍະຍາວ ເຊິ່ງເກີດມາຈາກການກະທຳຂອງມະນຸດ ໂດຍກົງ ຫຼື ທາງອ້ອມ ຫຼື ເກີດຈາກທຳມະຊາດ ທີ່ເຮັດໃຫ້ອົງປະກອບຂອງຊັ້ນບັນຍາກາດປ່ຽນແປງ.

ໃນປີ 2018, ສປປ ລາວ ມີອຸນຫະພູມສະເລ່ຍປະມານ 30,8°C. ອຸນຫະພູມສະເລ່ຍ ຢູ່ເຂດພາກເໜືອ ປະມານ 28,41°C, ສ່ວນພາກອື່ນໆແມ່ນ 31,38°C. ເຖິງຢ່າງໃດກໍ່ຕາມ, ສະພາບອາກາດມີການປ່ຽນແປງ ເຊັ່ນ ຕະຫຼອດ 30 ປີ (1976 -2005) ທີ່ຜ່ານມາ ອຸນຫະພູມຢູ່ ສປປ ລາວ ໄດ້ມີການເພີ່ມຂຶ້ນ ແລະ ມີການປ່ຽນແປງທຸກໆ 10 ປີ. ອຸນຫະພູມສະເລ່ຍໃນແຕ່ລະປີໄດ້ເພີ່ມຂຶ້ນໃນອັດຕາ 0,022°C ຕໍ່ປີ. ໃນນີ້ ອຸນຫະພູມສະເລ່ຍສູງສຸດເພີ່ມຂຶ້ນແມ່ນ 0,017°C/ປີ ແລະ ອຸນຫະພູມສະເລ່ຍຕ່ຳສຸດເພີ່ມຂຶ້ນ 0,023°C/ປີ.

ປະລິມານນ້ຳຝົນສະເລ່ຍປະຈຳປີແມ່ນປະມານ 1.896-2.085 ມມ/ປີ ນັບແຕ່ປີ 1976-2005. ປະລິມານນ້ຳຝົນໄດ້ເພີ່ມຂຶ້ນປະມານ 1.46 ມມ/ປີ ຕະຫຼອດ 3 ທົດສະວັດຜ່ານມາ ແລະ ແຕ່ລະທົດສະວັດ ກໍ່ມີຄວາມແຕກຕ່າງກັນ. ປະລິມານນ້ຳຝົນສະເລ່ຍປະຈຳປີແມ່ນສູງກວ່າເກນປົກກະຕິ (+/-7%), ມີບາງປີກໍ່ເພີ່ມຂຶ້ນ ແລະ ຫຼຸດລົງປະມານ 20%. ໃນຕໍ່ໜ້າ, ໂດຍອີງໃສ່ການພະຍາກອນໂດຍນຳໃຊ້ແບບຈຳລອງ RCP 4.5, ອຸນຫະພູມສະເລ່ຍຈະເພີ່ມຂຶ້ນຕື່ມ. ສຳລັບໄລຍະສັ້ນແຕ່ປີ 2021-2050, ອຸນຫະພູມສູງສຸດຈະເພີ່ມຂຶ້ນໃນລະຫວ່າງ 1,03-1,29°C ແລະ ອຸນຫະພູມຕ່ຳສຸດຈະຫຼຸດລົງໃນລະຫວ່າງ 1,09-1,36°C. ແຕ່ປີ 2070 ເຖິງ 2099, ອຸນຫະພູມສູງສຸດອາດເພີ່ມຂຶ້ນ 2,05 ເຖິງ 2,56°C ແລະ ອຸນຫະພູມຕ່ຳສຸດຈະຫຼຸດລົງແຕ່ 2,04 ເຖິງ 2,47°C. ປະລິມານນ້ຳຝົນຈະມີການປ່ຽນແປງຫຼາຍສົມຄວນ ໂດຍສະເພາະໃນລະດູຝົນ ແລະ ລະດູແລ້ງ.

ປະລິມານນ້ຳຝົນຈະຫຼຸດລົງແຕ່ເດືອນ ກຸມພາ ຫາ ເດືອນ ເມສາ ຕາມການຄາດຄະເນໂດຍການນຳໃຊ້ແບບຈຳລອງ ການວິເຄາະສະພາບພູມອາກາດ RCP 4.5 ແລະ RCP 8.5. ການຈຳລອງໂດຍນຳໃຊ້ວິທີ RCP 8.5 ກໍ່ສະແດງ ໃຫ້ເຫັນວ່າ ປະລິມານນ້ຳຝົນປະຈຳປີມີການປ່ຽນແປງຢູ່ລະຫວ່າງ -37% ເຖິງ -19%. ແຕ່ເດືອນ ພຶດສະພາ ຫາ ເດືອນ ກັນຍາ ປະລິມານນ້ຳຝົນຈະມີການເພີ່ມຂຶ້ນ ແລະ ອາດສູງເຖິງ 49% ຂອງເດືອນ ກໍລະກົດ ໂດຍນຳໃຊ້ ແບບຈຳລອງ RCP 8.5. ການປະເມີນໂດຍນຳໃຊ້ ແບບຈຳລອງ RCP 4.5 ສະແດງໃຫ້ເຫັນວ່າ ປະລິມານນ້ຳຝົນ ຈະຫຼຸດລົງນ້ອຍກວ່າ 10% ໃນລະຫວ່າງເດືອນ ມີຖຸນາ ຫາ ເດືອນ ກັນຍາ ແຕ່ມີທ່າອ່ຽງເພີ່ມຂຶ້ນປະມານ 3% ເຖິງ 46% ໃນເດືອນກໍລະກົດ ຫາ ເດືອນ ທັນວາ.

ເຖິງແມ່ນວ່າ ສປປ ລາວ ຈະມີການປ່ອຍທາດອາຍເຮືອນແກ້ວໃນລະດັບຕ່ຳກໍ່ຕາມ (ປະມານ 50.000 GgCO2eq ໃນປີ 2000, ຄາດຄະເນ 82.000 GgCO2eq ໃນປີ 2020 ແລະ 104.000 GgCO2eq ໃນປີ 2030), ແຕ່ກໍ່ມີຄວາມບອບບາງສູງຕໍ່ການປ່ຽນແປງດິນຟ້າອາກາດ ດັ່ງທີ່ກ່າວມາຂ້າງເທິງນັ້ນ. ໄພນ້ຳຖ້ວມໄດ້ ສ້າງຜົນກະທົບຕໍ່ຫຼາຍຂະແໜງການໃນຂົງເຂດເສດຖະກິດ ແລະ ສັງຄົມ ເປັນຕົ້ນ ການກະສິກຳ, ລະບົບ ຊົນລະປະທານ, ຂົວທາງ ແລະ ຜົນຜະລິດເສຍຫາຍ. ຜົນກະທົບດັ່ງກ່າວໄດ້ເຮັດໃຫ້ຄວາມໝັ້ນຄົງດ້ານສະບຽງ ອາຫານຫຼຸດລົງ. ໄພນ້ຳຖ້ວມໃນຊຸມປີຜ່ານມາໄດ້ສົ່ງຜົນກະທົບໜັກສົມຄວນ ໂດຍສະເພາະຕໍ່ ຜົນຜະລິດເຂົ້າບໍ່ໄດ້ ຕາມຄາດໝາຍ ຕົວຢ່າງ ໃນປີ 2017 ເນື້ອທີ່ນາຂອງ ສປປ ລາວ ປະມານ 30.000 ເຮັກຕາ ຖືກຜົນກະທົບຈາກ ໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ຕັກກະແຕນລະບາດ (ສູນເສຍຜົນຜະລິດເຂົ້າປະມານ 130.000 ໂຕນ), ໃນປີ 2018 ທີ່ໄດ້ຮັບຜົນກະທົບຈາກພະຍຸລະດູຮ້ອນສອງຫົວ ເຊິ່ງເປັນສາເຫດໜຶ່ງເຮັດໃຫ້ເຂື່ອນເຊປຽນ-ເຊນ້ຳນ້ອຍພັງ ແລະ ໄດ້ເຮັດໃຫ້ມີການສູນເສຍຢ່າງຫຼວງຫຼາຍທາງດ້ານຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ. ພ້ອມດຽວກັນນີ້, ເນື້ອທີ່ປູກເຂົ້າກໍ່ຖືກທຳລາຍຫຼາຍກວ່າ 100.000 ເຮັກຕາ ຊຶ່ງຕີກເປັນປະມານ 12% ຂອງ ເນື້ອທີ່ປູກເຂົ້າທັງໝົດ ທົ່ວປະເທດ, ຜົນຜະລິດເຂົ້າກໍ່ຫຼຸດລົງ 20% ທຽບໃສ່ປີ 2017 ແລະ ສົ່ງຜົນກະທົບຕໍ່ປະຊາກອນປະມານ 750.000 ຄົນ. ນອກຈາກນັ້ນ, ກໍ່ຍັງເຮັດໃຫ້ລາຄາເຂົ້າ ແລະ ຄ່າຄອງຊີບສູງຂຶ້ນ, ມີຄວາມສ່ຽງຕໍ່ ພະຍາດ ຖອກທ້ອງ, ໄຂ້ຍຸງລາຍ, ພະຍາດລະບາດທີ່ເກີດຂຶ້ນໃໝ່ ແລະ ກັບຄືນມາໃໝ່, ພະຍາດລະບາດຕາມລະດູການ ແລະ ໄຂ້ມະເລເລຍຫຼາຍຂຶ້ນ, ເຮັດໃຫ້ຄວາມທຸກຍາກຍິ່ງສາຫັດຂຶ້ນຕື່ມ ໂດຍສະເພາະແມ່ນແມ່ຍິງ, ຊາວໜຸ່ມ, ຜູ້ ເຖົ້າ ແລະ ຄົນທຸກຍາກ. ຕີລາຄາລວມແລ້ວ ຄວາມເສຍຫາຍ ແລະ ສູນເສຍທັງໝົດແມ່ນປະມານ 3.167 ຕື້ກີບ (371 ລ້ານ ໂດລາສະຫະລັດ) ຫຼື ປະມານ 2,1% ຂອງລວມຍອດພະລິດຕະພັນແຫ່ງຊາດ. ດ້ານການເງິນ ສຳລັບ ວຽກງານການປ່ຽນແປງດິນຟ້າອາກາດ ສາມາດລະດົມທຶນໄດ້ປະມານ 350 ລ້ານ ໂດລາສະຫະລັດ ມາຈັດຕັ້ງ ປະຕິບັດວຽກງານດັ່ງກ່າວຢູ່ ສປປ ລາວ.

1.4.2 ການຈັດຕັ້ງປະຕິບັດຍຸດທະສາດ ແລະ ວຽກງານການປ່ຽນແປງດິນຟ້າອາກາດໄລຍະຜ່ານມາ

ສປປ ລາວ ໄດ້ຈັດຕັ້ງປະຕິບັດ ແລະ ຍົກລະດັບຄວາມສາມາດເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າ ອາກາດ, ໂດຍສອດຄ່ອງກັບ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) ລວມທັງ ບັນດາຂໍ້ຕົກລົງຕ່າງໆຂອງກອງປະຊຸມລັດພາຄີ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງ ດິນຟ້າອາກາດ (COP), ນະໂຍບາຍ ແລະ ແຜນການພັດທະນາເສດຖະກິດ-ສັງຄົມໃນລະດັບສູນກາງ ແລະ ທ້ອງຖິ່ນ. ວຽກງານຕົ້ນຕໍທີ່ໄດ້ຈັດຕັ້ງປະຕິບັດສັງລວມມີ ການປັບປຸງຄວາມພ້ອມໃນການຮັບມື, ການປັບປຸງ ແລະ ສ້າງນະໂຍບາຍ, ການປັບປຸງການຈັດຕັ້ງ, ການສ້າງເຄືອຂ່າຍ ແລະ ການປະສານງານ, ການສ້າງຊັບພະຍາກອນ ມະນຸດ, ການສຶກສາ ແລະ ການສ້າງຈິດສຳນຶກ, ການຄົ້ນຄວ້າ, ຂໍ້ມູນ-ຂ່າວສານ ແລະ ກົນໄກການເງິນ, ເຊິ່ງສັງລວມ ໄດ້ດັ່ງລຸ່ມນີ້.

1) ນະໂຍບາຍ ແລະ ນິຕິກຳ

ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ທີ່ຖືກຮັບຮອງເອົາໃນປີ 2019 ຖືເປັນເອກະສານພື້ນຖານ ສຳຄັນໜຶ່ງດ້ານນະໂຍບາຍ ແລະ ກອບທິດທາງໃນການຈັດຕັ້ງປະຕິບັດທີ່ຈຳເປັນ ແລະ ສຳຄັນ ໂດຍສະເພາະ ໃນ ວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ, ວຽກງານສ້າງຄວາມທົນທານ ແລະ ປັບຕົວເຂົ້າກັບການ ປ່ຽນແປງດິນຟ້າອາກາດຢູ່ ສປປ ລາວ. ດຳລັດດັ່ງກ່າວໄດ້ມອບໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ

ສິ່ງແວດລ້ອມ (ກຊສ) ມີບົດບາດນຳພາ ແລະ ປະສານງານກັບບັນດາກະຊວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ພ້ອມກັນຮັບມືຢ່າງຕັ້ງໜ້າໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ. ດຳລັດສະບັບນີ້ຍັງໄດ້ເນັ້ນໜັກວຽກງານ: (1) ການສ້າງລະບົບຄຸ້ມຄອງຂໍ້ມູນ-ຂ່າວສານ ເພື່ອຊຸກຍູ້ການປະສານງານການວາງແຜນ ແລະ ຈັດຕັ້ງປະຕິບັດ ວຽກງານການປ່ຽນແປງດິນຟ້າອາກາດ, (2) ການປະເມີນ ແລະ ສ້າງແຜນທີ່ຄວາມບອບບາງ ເພື່ອຊ່ວຍການຈັດຕັ້ງ ປະຕິບັດ ວຽກງານການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດຂອງຊາດ ແລະ (3) ການສ້າງຕັ້ງຂອບເຂດໜ້າ ວຽກ ເພື່ອເພີ່ມການດຶດຊັບທາດກາກບອນ ແລະ ກະກຽມຍຸດທະສາດແຫ່ງຊາດ ກ່ຽວກັບ ການປ່ອຍທາດອາຍ ເຮືອນແກ້ວຕ່ຳ ແລະ ອື່ນໆ.

2) ແຜນຍຸດທະສາດ ແລະ ແຜນງານ

ສປປ ລາວ ໄດ້ມີແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດ (NAPA) ໃນປີ 2009, ຍຸດທະສາດການປ່ຽນແປງດິນຟ້າອາກາດໃນປີ 2010 ແລະ ແຜນດຳເນີນງານແຫ່ງຊາດໄລຍະ 2013 ຫາ 2020, ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ໃນປີ 2015 ແລະ 2020, ແຜນດຳເນີນງານດ້ານເຕັກໂນໂລຊີ ເພື່ອຫລຸດຜ່ອນທາດອາຍເຮືອນແກ້ວ ແລະ ປັບຕົວຕ່ຳການ ປ່ຽນແປງດິນຟ້າອາກາດ (TNA-TAP) ຂອງຂະແໜງການກະສິກຳ, ປ່າໄມ້ ແລະ ຊັບພະຍາກອນນ້ຳ ໃນປີ 2018.

ແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດ ໄດ້ກຳນົດຈຸດປະສົງ ດ້ານການປັບຕົວ ເຂົ້າກັບການປ່ຽນແປງດິນຟ້າອາກາດ ພ້ອມທັງໄດ້ກຳນົດວຽກງານບຸລິມະສິດ ດ້ານການປັບຕົວເຂົ້າກັບການປ່ຽນແປງ ດິນຟ້າອາກາດ ໃນຂະແໜງການກະສິກຳ, ປ່າໄມ້, ຊັບພະຍາກອນນ້ຳ ແລະ ສາທາລະນະສຸກ. ໃນແຜນງານດັ່ງກ່າວ ຍັງມີຫຼາຍໆບຸລິມະສິດທີ່ມີຄວາມສຳຄັນ ເຊັ່ນ ການເຕືອນໄພລ່ວງໜ້າ, ການເພີ່ມຄວາມທົນທານໃຫ້ແກ່ແນວພັນ ພືດ ແລະ ສັດລ້ຽງ ລວມທັງ ການນຳໃຊ້ຊັບພະຍາກອນນ້ຳແບບຍືນຍົງ.

ນອກຈາກນີ້ ຍັງໄດ້ເຊື່ອມສານວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຂົ້າໃນ ຍຸດທະສາດ ແລະ ແຜນການຕ່າງໆ ເຊັ່ນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII, ຍຸດທະສາດການເຕີບໂຕ ສີຂຽວແຫ່ງຊາດ, ຂະແໜງການສາທາລະນະສຸກ, ກະສິກຳ ແລະ ປ່າໄມ້.

3) ການສຳຫຼວດ ແລະ ການຫຼຸດຜ່ອນ ທາດອາຍເຮືອນແກ້ວ

ສປປ ລາວ ໄດ້ນຳສົ່ງ ບົດສື່ສານແຫ່ງຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ສະບັບທຳອິດ (FNC) ໃນປີ 2000 ແລະ ສະບັບທີສອງ (SNC) ໃນປີ 2013, ບົດລາຍງານການສຳຫຼວດ ແລະ ການຫລຸດຜ່ອນທາດ ອາຍເຮືອນແກ້ວທຸກສອງປີ (BUR) ໃນປີ 2020. ໃນປີ 1990 ສປປ ລາວ ເປັນປະເທດທີ່ດູດຊັບທາດອາຍ ເຮືອນແກ້ວ ໃນລະດັບ 104.570 $GgCO_2eq$ ແລະ ກາຍມາເປັນປະເທດປ່ອຍທາດອາຍເຮືອນແກ້ວໃນປີ 2000 ເຊິ່ງມີການປ່ອຍສຸດທິເທົ່າກັບ 41.764 $GgCO_2eq$. ໃນປີ 2014 ສປປ ລາວ ໄດ້ປ່ອຍທາດອາຍເຮືອນ ແກ້ວສຸດທິ 24.099 $GgCO_2eq$. ໂດຍລວມແລ້ວ ຂົງເຂດການນຳໃຊ້ທີ່ດິນ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ (LULUCF) ເປັນຂົງເຂດທີ່ປ່ອຍທາດອາຍເຮືອນແກ້ວຫຼາຍກວ່າ 70% ຂອງການປ່ອຍທາດອາຍ ເຮືອນແກ້ວທັງໝົດ, ສ່ວນທີ່ເຫຼືອແມ່ນປ່ອຍຈາກ ຂະແໜງການພະລັງງານ, ສິ່ງເສດເຫຼືອ ແລະ ອຸດສາຫະກຳ.

ດ້ານການຫຼຸດຜ່ອນທາດອາຍເຮືອນແກ້ວ, ນັບແຕ່ປີ 2009 ເປັນຕົ້ນມາ ສປປ ລາວ ໄດ້ຈັດຕັ້ງປະຕິບັດ ຫຼາຍກວ່າ 10 ໂຄງການ. ໂຄງການສ່ວນໃຫຍ່ແມ່ນນອນຢູ່ໃນຂະແໜງປ່າໄມ້, ເປັນຕົ້ນແມ່ນ ກົນໄກພັດທະນາ ແບບສະອາດ (CDM), ການຫຼຸດຜ່ອນການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ (REDD+), ການ ຮ່ວມມືສອງຝ່າຍ ໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ (JCM) ແລະ ການຫຼຸດຜ່ອນການປ່ອຍ ທາດ ອາຍເຮືອນແກ້ວ ທີ່ເໝາະສົມພາຍໃນປະເທດ (NAMA) ໃນຂະແໜງພະລັງງານ ແລະ ຂົນສົ່ງ.

4) ການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

ດັ່ງທີ່ກ່າວມາຂ້ອງເທິງ ສປປ ລາວ ເປັນປະເທດໜຶ່ງທີ່ມີຄວາມບອບບາງສູງຕໍ່ການປ່ຽນແປງດິນຟ້າອາກາດ. ສະນັ້ນ, ວຽກງານການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຈຶ່ງເປັນວຽກງານ ທີ່ເປັນບຸລິມະສິດຂອງປະເທດໃນການປ້ອງກັນ, ຕ້ານ, ສະກັດກັ້ນ, ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຂອງການ ປ່ຽນແປງດິນຟ້າອາກາດ.

ນັບແຕ່ປີ 2009 ເປັນຕົ້ນມາ ສປປ ລາວ ໄດ້ຈັດຕັ້ງປະຕິບັດຫຼາຍກວ່າ 30 ໂຄງການ ໃນການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນຫຼາຍຂະແໜງການ ທີ່ຈັດຕັ້ງປະຕິບັດໂດຍພາກສ່ວນຕ່າງໆ ເຊິ່ງເປັນສ່ວນໜຶ່ງຂອງແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ສ້າງ ແລະ ຈັດຕັ້ງປະຕິບັດ ແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດ (NAPA), ສຳເລັດການສ້າງແຜນທີ່ຄວາມບອບບາງຈາກການປ່ຽນແປງດິນຟ້າອາກາດໃນ 148 ເມືອງໃນຂອບເຂດທົ່ວປະເທດ (2021) ແລະ ລິເລີ່ມສ້າງ ແຜນງານແຫ່ງຊາດການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (NAP). ພ້ອມກັນນີ້ ໃນໄລຍະຜ່ານມາ ບັນດາຂະແໜງການທີ່ກ່ຽວຂ້ອງ ກໍ່ໄດ້ມີຄວາມພະຍາຍາມສູງໃນການດຳເນີນວຽກງານ ການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ຂົງເຂດກະສິກຳ ແລະ ປ່າໄມ້: ໄດ້ຄົ້ນຄວ້າ ແລະ ພັດທະນາແນວພັນພືດ (ລວມທັງ ເຂົ້າ ແລະ ພືດຜັກ) ທີ່ມີຄວາມທົນທານຕໍ່ໄພນ້ຳຖ້ວມ ຫຼື ແຫ້ງແລ້ງ, ນຳໃຊ້ເຕັກນິກການຜະລິດກະສິກຳທີ່ທັນສະໄໝ ເຊັ່ນ ການນຳໃຊ້ເຮືອນຮົ່ມເຂົ້າໃນການເພາະປູກ, ການເກັບກັກນ້ຳ ແລະ ນຳໃຊ້ນ້ຳແບບມີປະສິດທິພາບ, ເສີມສ້າງຄວາມເຂັ້ມແຂງລະບົບການບໍລິການຂໍ້ມູນອຸຕຸກະເສດ, ຍົກລະດັບຕ່ອງໂສ້ມູນຄ່າດ້ານກະສິກຳ ແລະ ຄວາມທົນທານໃຫ້ແກ່ພື້ນຖານໂຄງລ່າງດ້ານກະສິກຳ, ສິ່ງເສີມຄວາມຫຼາກຫຼາຍດ້ານຜົນລະປູກ ແລະ ການຜະລິດເປັນສິນຄ້າ.

ຂົງເຂດຊັບພະຍາກອນນ້ຳ: ໄດ້ຮັບຮອງ ກົດໝາຍ ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ, ກົດໝາຍ ວ່າດ້ວຍ ອຸຕຸນິຍົມ ແລະ ອຸທົກກະສາດ, ບັນດານິຕິກຳລຸ່ມກົດໝາຍ ເປັນຕົ້ນ ດຳລັດ ວ່າດ້ວຍ ການຄຸ້ມຄອງ ອ່າງຮັບນ້ຳ ແລະ ອ່າງເກັບນ້ຳ, ຂໍ້ຕົກລົງ ການຄຸ້ມຄອງນ້ຳໃຕ້ດິນ ແລະ ຄູ່ມືໃນການຈັດຕັ້ງປະຕິບັດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ. ພ້ອມດຽວກັນນີ້ ກໍ່ໄດ້ມີການຕີລາຄາສະພາບ ແລະ ປະເມີນດ້ານຊັບພະຍາກອນນ້ຳ ທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດໃນອ່າງແມ່ນ້ຳອູ, ອ່າງແມ່ນ້ຳງື່ມ ແລະ ອ່າງແມ່ນ້ຳເທີນ-ກະດິງ, ການປະເມີນຄວາມສ່ຽງ ແລະ ຄວາມບອບບາງຂອງທີ່ດິນບໍລິເວນນ້ຳທີ່ສຳຄັນ 2 ແຫ່ງ ຄື ບຶງກຽດໂງ້ງ ແລະ ເຊຈຳພອນ ໂດຍ ສົ່ງເສີມການສ້າງຄວາມທົນທານໃຫ້ແກ່ຊຸມຊົນທີ່ຢູ່ໃນ ແລະ ອ້ອມຮອບທີ່ດິນບໍລິເວນນ້ຳດັ່ງກ່າວ ແລະ ຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນອ່າງແມ່ນ້ຳຂອງ.

ຂົງເຂດໂຍທາທິການ, ຂົນສົ່ງ ແລະ ການພັດທະນາຕົວເມືອງ: ຂະແໜງການນີ້ໄດ້ຮ່າງຍຸດທະສາດການພັດທະນາເຄຫາສະຖານ ແລະ ຕົວເມືອງຮອດປີ 2030 ແລະ ວິໄສທັດຮອດປີ 2035 ເຊິ່ງໄດ້ເຊື່ອມສານວຽກງານການສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດເຂົ້ານຳ. ພ້ອມນີ້ກໍ່ໄດ້ພັດທະນາ ຄູ່ມືແນະນຳການພັດທະນາຕົວເມືອງແບບຍືນຍົງດ້ານສິ່ງແວດລ້ອມ ແລະ ຄູ່ມືຂັ້ນຕອນການຄຸ້ມຄອງ ການສ້ອມແປງທາງຫຼວງ ໂດຍໄດ້ພິຈາລະນາປັດໄຈດ້ານການປ່ຽນແປງດິນຟ້າອາກາດ ເຂົ້າໃນຂັ້ນຕອນການຄັດເລືອກວິທີການສ້ອມແປງທາງຫຼວງ. ໃນປະຈຸບັນ ໄດ້ມີການລົງທຶນເຂົ້າໃນຫຼາຍໂຄງການເພື່ອຫຼຸດຜ່ອນມົນລະພິດ ແລະ ການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ ໂຄງການ ການນຳໃຊ້ລົດໄຟ ລາວ-ຈີນ ແລະ ການຈັດຕັ້ງປະຕິບັດໂຄງການຂົນສົ່ງແບບຍືນຍົງ ໃນຕົວເມືອງນະຄອນຫຼວງວຽງຈັນໂດຍນຳໃຊ້ ລົດເມສາທາລະນະ, ການປະກາດໃຊ້ ນະໂຍບາຍການນຳໃຊ້ລົດໄຟຟ້າ, ພ້ອມນັ້ນ ກໍ່ໄດ້ລິເລີ່ມສ້າງນິຕິກຳກ່ຽວກັບ ການກຳນົດມາດຕະຖານເຕັກນິກ ແລະ ອອກແບບອອກປ້າຍທະບຽນລົດໄຟຟ້າ ຕາມນະໂຍບາຍສົ່ງເສີມຂອງລັດຖະບານ ໃນການສ້າງ ແລະ ປັບປຸງນິຕິກຳ ເພື່ອສົ່ງເສີມ ການຂົນສົ່ງ ທີ່ເປັນມິດຕໍ່ສິ່ງແວດລ້ອມ ໃນ ສປປ ລາວ. ບັນດາໂຄງລ່າງພື້ນຖານທາງນ້ຳ ໄດ້ຮັບການກໍ່ສ້າງ ແລະ ບຳລຸງຮັກສາໃນລະດັບມາດຖານ ໂດຍສະເພາະການປ້ອງກັນຕາຝັ່ງເຈື່ອນ ແລະ ປ້ອງກັນນ້ຳຖ້ວມໃນບັນດາຕົວເມືອງ ໃຫ້ມີຄວາມທົນທານຕໍ່ຜົນກະທົບທີ່ເກີດຈາກໄພພິບັດ ຍ້ອນການປ່ຽນແປງດິນຟ້າອາກາດ ໂດຍການເຊື່ອມສານເອົາວຽກງານ ການສ້າງຄວາມທົນທານເຂົ້າໃນໜ້າວຽກວິຊາສະເພາະ ໂດຍເລີ່ມຈາກຂັ້ນຕອນການວາງແຜນ, ການອອກແບບ, ການກໍ່ສ້າງ, ການດຳເນີນການບຳລຸງຮັກສາຢ່າງເປັນປົກກະຕິ ແລະ ຈົນເຖິງຂັ້ນຕອນການປ່ຽນແປງ ທີ່ຕິດພັນກັບ ການເຊື່ອມສານກັບມາດຕະຖານ ໃນການຮັບປະກັນ ແລະ ທົນທານຕໍ່ຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດ, ຫຼຸດຜ່ອນອັດຕາຄວາມສ່ຽງ ແລະ ຜົນເສຍຫາຍ ທີ່ເກີດຈາກການປ່ຽນແປງດິນຟ້າອາກາດ ເຊັ່ນ: ພາຍຸ, ນ້ຳຖ້ວມ, ແຜນດິນ

ໄຫວ ແລະ ອື່ນໆ. ພ້ອມດຽວກັນນີ້ ກໍ່ໄດ້ມີການເອົາໃຈໃສ່ເສີມສ້າງຄວາມທົນທານຂອງຕົວເມືອງ ໂດຍອີງໃສ່ລະບົບນິເວດ ແລະ ວາງແຜນງົບປະມານໃນການບຳລຸງຮັກສາ.

ຂົງເຂດສາທາລະນະສຸກ: ຜົນສຳເລັດສຳຄັນໃນຂົງເຂດນີ້ແມ່ນການສ້າງ ແລະ ຮັບຮອງເອົາຍຸດທະສາດດ້ານການປັບຕົວຂອງຂະແໜງການສາທາລະນະສຸກ ຕໍ່ ການປ່ຽນແປງດິນຟ້າອາກາດ ປີ 2018 - 2025 ແລະ ແຜນການຈັດຕັ້ງປະຕິບັດປີ 2018 - 2020, ສ້າງຄູຝຶກລະດັບສູນກາງໃນຫົວຂໍ້ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບ ພ້ອມທັງສ້າງຄູ່ມື ແລະ ຝຶກອົບຮົມໃຫ້ແກ່ພະນັກງານຂອງຂະແໜງການສາທາລະນະສຸກ ແລະ ຂະແໜງການກ່ຽວຂ້ອງໃນ 7 ແຂວງ, ສ້າງເຄື່ອງມືສື່ສານ ເພື່ອເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບໃຫ້ແກ່ມວນຊົນໄດ້ຮັບຮູ້ ແລະ ເຂົ້າໃຈຂຶ້ນຕື່ມ. ພ້ອມນີ້ “ການຮ່ວມມືເພື່ອຈັດຕັ້ງປະຕິບັດ ວຽກງານການປ່ຽນແປງດິນຟ້າອາກາດ ແລະ ການຕິດຕາມຄຸນນະພາບອາກາດພາຍໃຕ້ແຜນງານຂອງ ອຸຍນິເຊັບ (UNICEF) ຈະຊ່ວຍໃນການສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກປະສານງານຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງ ການຍ່ອຍສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ, ການປະເມີນກຸ່ມທີ່ມີຄວາມສ່ຽງ ແລະ ຄວາມບອບບາງ ໂດຍສະເພາະແມ່ນແມ່ຍິງ, ເດັກນ້ອຍ, ຄົນພິການ ແລະ ຜູ້ສູງອາຍຸ, ການປະເມີນຜົນກະທົບດ້ານສິ່ງແວດລ້ອມຕໍ່ກຸ່ມທີ່ມີຄວາມສ່ຽງ ແລະ ຄວາມບອບບາງ ໂດຍເຊື່ອມສານກັບ ການສ້າງຄວາມເຂັ້ມແຂງໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ພ້ອມທັງຈະມີການສ້າງຕັ້ງ ສະຖານີຕິດຕາມຄຸນນະພາບອາກາດຈຳນວນໜຶ່ງ. ນອກຈາກນີ້ ໂຄງການເສີມຂະຫຍາຍ ການສະໜອງນ້ຳປະປາ, ສຸຂາພິບານ ແລະ ສຸຂະອະນາໄມ” ກໍ່ໄດ້ປະກອບສ່ວນໃຫ້ແກ່ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງສາທາລະນະສຸກ ໂດຍການເຂົ້າເຖິງແຫຼ່ງນ້ຳສະອາດ ແລະ ການບໍລິການດ້ານສຸຂາພິບານໃນເຂດຊົນນະບົດ.

ຂົງເຂດພະລັງງານ: ຂະແໜງພະລັງງານໄດ້ມີການປະເມີນຄວາມບອບບາງ ແລະ ສ້າງແຜນດຳເນີນງານດ້ານຄວາມທົນທານຂອງຂະແໜງການຕົນ, ຄູ່ມືແນະນຳກ່ຽວກັບຄວາມປອດໄພຂອງເຂື່ອນ ແລະ ແຜນດຳເນີນງານກ່ຽວກັບສະຖານະການສຸກເສີນ ເຊິ່ງເປັນການສ້າງຄວາມທົນທານ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ນອກຈາກນີ້, ກໍ່ຈະໄດ້ມີການຄຸ້ມຄອງອ່າງເກັບນ້ຳຢ່າງມີປະສິດທິຜົນ ແລະ ນຳໃຊ້ໃນຫຼາຍຈຸດປະສົງ ເພື່ອເສີມສ້າງຄວາມທົນທານໃຫ້ແກ່ຊຸມຊົນອ້ອມຂ້າງ ແລະ ສ້າງຜົນປະໂຫຍດໃຫ້ກັບຂະແໜງການອື່ນ ໂດຍການປັບປຸງມາດຕະການແກ້ໄຂບັນຫາໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ.

ຂົງເຂດການສຶກສາ ແລະ ສ້າງຈິດສຳນຶກ: ໄດ້ມີການຮັບຮອງເອົາ ຍຸດທະສາດແຫ່ງຊາດດ້ານການສຶກສາ ແລະ ສ້າງຈິດສຳນຶກດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (2018 - 2025) ແລະ ວິໄສທັດຮອດ ປີ 2030. ມະຫາວິທະຍາໄລແຫ່ງຊາດລາວ ເປັນຕົ້ນ ຄະນະວິທະຍາສາດສິ່ງແວດລ້ອມ ໄດ້ມີການສິດສອນວິຊາການປ່ຽນແປງດິນຟ້າອາກາດ ແລະ ວິຊາອື່ນໆທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ. ນອກຈາກນີ້ ກໍ່ໄດ້ມີການເຜີຍແຜ່ ແລະ ໂຄສະນາວຽກງານການປ່ຽນແປງດິນຟ້າອາກາດຜ່ານສື່ຕ່າງໆ ເພື່ອໃຫ້ສັງຄົມຮັບຮູ້ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.

1.4.3 ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ

ສປປ ລາວ ຍັງມີຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງໃນການດຳເນີນວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ກໍ່ຄື ການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຈະຕ້ອງໄດ້ແກ້ໄຂ ເປັນຕົ້ນ ຂໍ້ມູນ-ຂ່າວສານ ແລະ ຄວາມຮູ້ກ່ຽວກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ຂະແໜງການຕ່າງໆ, ການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນແຜນການພັດທະນາຕ່າງໆ, ການປະສານງານລະຫວ່າງຂະແໜງການ, ງົບປະມານ, ຄວາມສາມາດດ້ານເຕັກນິກວິຊາການ, ການເຂົ້າເຖິງເຕັກໂນໂລຊີທີ່ເໝາະສົມ, ລະບົບການຕິດຕາມກວດກາ ແລະ ການປະເມີນຜົນການຈັດຕັ້ງປະຕິບັດວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ. ພ້ອມນີ້ ຍັງຕ້ອງໄດ້ຊັ່ງຊາຜົນໄດ້ ແລະ ຜົນເສຍດ້ານການພັດທະນາເສດຖະກິດ ແລະ ການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຊິ່ງຕ້ອງໄດ້ພິຈາລະນາຮອບດ້ານ ໃນໄລຍະທີ່ປະເທດມີຄວາມມຸ່ງຫວັງອັນແຮງກ້າຕໍ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2026. ໝາຍວ່າ ຕ້ອງ

ບັນລຸລວມຍອດຜະລິດຕະພັນພາຍໃນໃຫ້ໄດ້ຕາມ ອົງການສະຫະປະຊາຊາດ ກຳນົດ. ສະນັ້ນ ຄວາມຮຽກຮ້ອງຕ້ອງການໃນການຫັນເປັນອຸດສາຫະກຳທັນສະໄໝ, ການຜະລິດ ແລະ ການບໍລິໂພກເພີ່ມຂຶ້ນ ເປັນສິ່ງທ້າທາຍໃນພາບລວມ. ອີກສິ່ງທ້າທາຍໜຶ່ງແມ່ນ ຈິດສຳນຶກຂອງມວນຊົນໂດຍລວມ ແມ່ນຍັງບໍ່ທັນຖືວ່າການປ່ຽນແປງດິນຟ້າອາກາດເປັນບັນຫາເລັ່ງດ່ວນ ແລະ ເກີດຂຶ້ນຈິງໃນປະຈຸບັນ ຈຶ່ງຍັງມີພຶດຕິກຳການດຳລົງຊີວິດແບບຄອງເດີມ ເຊັ່ນ ການຈູດຂີ້ເຫຍື້ອຊະຊາຍ, ເຮັດການຜະລິດໂດຍບໍ່ສຶກສາຕິດຕາມຂໍ້ມູນ-ຂ່າວສານສະພາບອາກາດໃນລະດູການ.

1.5 ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງຍຸດທະສາດ

ເຫດຜົນ ແລະ ຄວາມຈຳເປັນຕົ້ນຕໍສຳລັບການປັບປຸງຍຸດທະສາດສະບັບນີ້ ແມ່ນຍ້ອນບັນດາປັດໄຈພາຍໃນ ແລະ ພາຍນອກ ດັ່ງລຸ່ມນີ້:

ນັບຕັ້ງແຕ່ ສປປ ລາວ ໄດ້ຮັບຮອງ ຍຸດທະສາດການປ່ຽນແປງດິນຟ້າອາກາດ ໃນປີ 2010 ເປັນຕົ້ນມາ ໄດ້ມີສະພາບ ແລະ ເຫດການປ່ຽນແປງຫຼາຍຢ່າງໃນດ້ານຕ່າງໆ ເປັນຕົ້ນ ສປປ ລາວ ໄດ້ຮັບຮອງເອົາ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມໃນປີ 2012 (ສະບັບປັບປຸງ) ແລະ ຍຸດທະສາດຂະແໜງຊັບພະຍາກອນທຳ ມະຊາດ ແລະ ສິ່ງແວດລ້ອມຮອດປີ 2030 ໃນປີ 2015, ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດໃນປີ 2016, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ໃນປີ 2018, ຍຸດທະສາດຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ ສະບັບເດືອນມີນາ 2021 (REDD+), ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ໃນປີ 2019, ແຜນການເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ການເປັນປະເທດກຳລັງພັດທະນາພາຍໃນປີ 2024 ແລະ ການເປັນປະເທດທີ່ມີລາຍໄດ້ປານກາງຕ່ຳໃນປີ 2030 ແລະ ຄວາມພະຍາຍາມທີ່ຈະປະກອບສ່ວນເຂົ້າໃນເປົ້າໝາຍ ການຫຼຸດຜ່ອນການປ່ອຍ ແລະ ການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນໃນປີ 2050. ນອກຈາກນີ້ຍັງໄດ້ຮັບຮອງເອົາກົດໝາຍຕ່າງໆ ເປັນຕົ້ນ ກົດໝາຍ ວ່າດ້ວຍ ອຸຕຸນິຍົມ ແລະ ອຸທົກກະສາດ (2017), ກົດໝາຍ ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ (2017) ແລະ ຍຸດທະສາດຮອດປີ 2030 (2019), ກົດໝາຍ ວ່າດ້ວຍ ປ່າໄມ້ (2019), ກົດໝາຍ ວ່າດ້ວຍ ທີ່ດິນ (2019) ແລະ ແຜນແມ່ບົດການນຳໃຊ້ທີ່ດິນ (2018) ແລະ ກົດໝາຍ ວ່າດ້ວຍ ການຄຸ້ມຄອງໄພພິບັດ (2019).

ສຳລັບຍຸດທະສາດການປ່ຽນແປງດິນຟ້າອາກາດ ສະບັບທຳອິດທີ່ຮັບຮອງເອົາໃນປີ 2010 ນັ້ນ, ຜ່ານການທົບທວນ ແລະ ປະເມີນຜົນພົບວ່າ ຍັງບໍ່ຄົບຖ້ວນ ຫຼື ມີຊ່ອງຫວ່າງຢູ່ ເປັນຕົ້ນແມ່ນ: (1) ບໍ່ໄດ້ກຳນົດກອບເວລາສຳລັບວິໄສທັດ, ຄາດໝາຍ, ແຜນການ; (2) ລະບົບຕິດຕາມກວດກາ, ປະເມີນ ແລະ ລາຍງານ ເຮັດໃຫ້ ປະເມີນຄວາມຄືບໜ້າ ແລະ ຜົນສຳເລັດໄດ້ຍາກ; (3) ກອມເອົາພຽງ 7 ຂະແໜງການ; (4) ບໍ່ໄດ້ກຳນົດກົນໄກທາງດ້ານການເງິນ, ການເຂົ້າເຖິງ ແລະ ການລະດົມທຶນ; (5) ການຈັດຕັ້ງປະຕິບັດປະສິດທິຜົນຍັງບໍ່ສູງເທົ່າທີ່ຄວນ; ຫຼາຍກິດຈະກຳ-ໂຄງການບໍ່ໄດ້ຮັບງົບປະມານ ແລະ ບໍ່ຖືກຈັດຕັ້ງປະຕິບັດ ເນື່ອງຈາກຂາດກົນໄກທາງດ້ານການເງິນ, ການເຂົ້າເຖິງແຫຼ່ງທຶນ ແລະ ການລົງທຶນ. ກິດຈະກຳສ່ວນໜຶ່ງຍັງບໍ່ສອດຄ່ອງ ຫຼື ຍາກຕໍ່ການຈັດຕັ້ງປະຕິບັດ ເປັນຕົ້ນ: (1) ການຫຼຸດຜ່ອນການປ່ອຍອາຍເມຕານ (CH_4) ຈາກນາເຂົ້າ ແລະ ສັດລ້ຽງ; (2) ການນຳໃຊ້ອາຍເມຕານທີ່ບັນຈຸໃນຊັ້ນຖ່ານຫີນ ແລະ ບໍ່ຖ່ານຫີນ. ນອກຈາກນັ້ນ, ອາດບໍ່ຕອບສະໜອງ ຫຼື ສອດຄ່ອງກັບນະໂຍບາຍທີ່ສ້າງຫຼັງປີ 2010 ທີ່ກ່າວມາ ເຊັ່ນ: ນະໂຍບາຍ ແລະ ແຜນການກ່ຽວກັບການພັດທະນາແບບຍືນຍົງ, ການເຕີບໂຕສີຂຽວ, ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.

ສະພາບການປ່ຽນແປງດິນຟ້າອາກາດຢູ່ໃນລະດັບໂລກ ແລະ ສປປ ລາວ ໄດ້ມີການປ່ຽນແປງຢ່າງໄວວາ, ສະຫຼັບສັບຊ້ອນ ແລະ ຄາດຄະເນໄດ້ຍາກ ເປັນຕົ້ນ: ການປ່ຽນແປງອຸນຫະພູມ, ປະລິມານນ້ຳຝົນ ໄດ້ມີການປ່ຽນແປງກະທັນຫັນ, ພື້ນທີ່ຄວາມບອບບາງ, ປະລິມານການປ່ອຍທາດອາຍເຮືອນແກ້ວ, ພະຍຸ, ໄພນ້ຳຖ້ວມມີທ່າອ່ຽງຖີ່ຂຶ້ນ ແລະ ຮຸນແຮງຂຶ້ນ, ໄພແຫ້ງແລ້ງແກ່ຍາວຂຶ້ນ. ໃນຂະນະດຽວກັນນີ້ ປະຊາຄົມໂລກກໍ່ໄດ້ຮັບຮອງເອົາສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດໃນປີ 2015 ເຊິ່ງໄດ້ຮຽກຮ້ອງໃຫ້ບັນດາປະເທດພາຄີ ຕ້ອງໄດ້ປັບປຸງຍຸດທະສາດ, ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ປະຕິ

ບັດມາດຕະການຢ່າງຈິງຈັງ ເພື່ອຄວບຄຸມອຸນນະພູມສະເລ່ຍຂອງໂລກບໍ່ໃຫ້ເກີນ 1,5°C ແລະ ເສີມສ້າງຄວາມທົນທານ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ປີ 2030 ຖືເປັນຂີດໝາຍທີ່ສຳຄັນໜຶ່ງໃນລະດັບໂລກ ເຊິ່ງປະຊາຄົມໂລກ ລວມທັງ ສປປ ລາວ ຈະໄດ້ປະເມີນຄືນ ແລະ ປັບປຸງເປົ້າໝາຍການພັດທະນາແບບຍືນຍົງ ແລະ ປະຊາຄົມໂລກຈະໄດ້ມີການທົບທວນຄວາມຄືບໜ້າ ແລະ ຜົນສຳເລັດການຈັດຕັ້ງປະຕິບັດ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດໃນຊ່ວງ 10 ປີທຳອິດ ໂດຍສະເພາະ ສະພາບການບັນລຸເປົ້າໝາຍ ກ່ຽວກັບ ການຄວບຄຸມການເພີ່ມຂຶ້ນອຸນຫະພູມສະເລ່ຍຂອງໂລກ.

ດ້ວຍເຫດຜົນ, ປັດໄຈພາຍໃນ ແລະ ພາຍນອກທີ່ກ່າວມາທັງໝົດຂ້າງເທິງນັ້ນ ຈຶ່ງເຫັນວ່າມີຄວາມຈຳເປັນ ແລະ ສຳຄັນໃນການປັບປຸງຍຸດທະສາດສະບັບນີ້ ໃຫ້ສອດຄ່ອງກັບສະພາບການ, ນະໂຍບາຍ, ທິດທາງ ແລະ ກອບຂອງການພັດທະນາເສດຖະກິດ-ສັງຄົມ ທັງເປັນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຕາມທິດຍືນຍົງ ແລະ ສີຂຽວ.

ພາກທີ II: ຍຸດທະສາດ ແລະ ແຜນງານຮອດປີ 2030

2.1 ເປົ້າໝາຍລວມ ແລະ ຄາດໝາຍສູ້ຊົນ

ສປປ ລາວ ໄດ້ວາງເປົ້າໝາຍລວມເພື່ອບັນລຸຄາດໝາຍສູ້ຊົນຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນໃນປີ 2050 ແລະ ສາມາດປ້ອງກັນ, ຫົນທານ, ປັບຕົວ, ຫຼຸດຜ່ອນຄວາມສ່ຽງ ແລະ ຟື້ນຟູຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດໄດ້ໂດຍພື້ນຖານ ເພື່ອຮັກສາຄວາມປອດໄພຕໍ່ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ, ໂຄງລ່າງພື້ນຖານ, ເຊື່ອມໂຍງກັບພາກພື້ນ, ສາກົນ, ຊຸກຍູ້ ແລະ ປະກອບສ່ວນການພັດທະນາເສດຖະກິດ-ສັງຄົມ ຕາມທິດຍືນຍົງ ແລະ ສີຂຽວ ແລະ ຄາດໝາຍສູ້ຊົນຮອດປີ 2030 ຄື: 1) ເສີມສ້າງຄວາມເຂັ້ມແຂງດ້ານຕ່າງໆ ເປັນຕົ້ນ ດ້ານນະໂຍບາຍ, ການຈັດຕັ້ງ, ຊັບພະຍອນມະນຸດ, ການເງິນ, ການປະສານງານ, ການຮ່ວມມື, ການຄົ້ນຄວ້າ, ການແລກປ່ຽນຂໍ້ມູນ-ຂ່າວສານ, ການສຶກສາ ແລະ ສ້າງຈິດສຳນຶກ ແລະ ສາມາດຈັດຕັ້ງປະຕິບັດວຽກງານຮັບມືການປ່ຽນແປງດິນຟ້າອາກາດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ ຢູ່ໃນຂະແໜງການຕ່າງໆ ແລະ 2) ສູ້ຊົນເພື່ອໃຫ້ບັນລຸຄາດໝາຍໃນປີ 2030 ດັ່ງລຸ່ມນີ້:

1) ສູ້ຊົນເຊື່ອມສານນະໂຍບາຍ, ຍຸດທະສາດ, ແຜນງານ ແລະ ໂຄງການແຫ່ງຊາດ, ຂອງຂະແໜງການທີ່ກ່ຽວຂ້ອງຫຼັກ ເຊັ່ນ: ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແຜນການ ແລະ ການລົງທຶນ, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ສາທາລະນະສຸກ, ສຶກສາ, ແຮງງານ ແລະ ສະຫວັດດີການສັງຄົມ ແລະ ທ້ອງຖິ່ນທີ່ມີຄວາມບອບບາງໄດ້ເຊື່ອມສານ ແລະ ກຳນົດມາດຕະການ ການຄຸ້ມຄອງວຽກງານການປ່ຽນແປງດິນຟ້າອາກາດທີ່ກ່ຽວຂ້ອງຢ່າງສົມເຫດສົມຜົນ, ພຽງພໍ ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ. ບັນດາໂຄງການພັດທະນາ ແລະ ໂຄງການລົງທຶນຕ່າງໆ ທີ່ຕ້ອງໄດ້ສຶກສາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ ແລະ ແບບລະອຽດ ຕ້ອງໄດ້ມີການປະເມີນ ແລະ ມີແຜນຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບຕໍ່ກັບການປ່ຽນແປງດິນຟ້າອາກາດ;
2) ສູ້ຊົນຍົກລະດັບຄວາມສາມາດ ແລະ ເສີມສ້າງຄວາມທົນທານ ໃຫ້ໄດ້ລະດັບປານກາງຫາສູງໃຫ້ແກ່ຕົວເມືອງ, ຊົນນະບົດ, ຊຸມຊົນ, ໂຄງລ່າງພື້ນຖານ, ລະບົບການຜະລິດ-ການບໍລິການ ແລະ ລະບົບນິເວດ ຫຼື ມີຄວາມສາມາດຫຼຸດຜ່ອນຄວາມບອບບາງ, ຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດໃຫ້ໄດ້ໂດຍພື້ນຖານ ໂດຍມີດັດສະນີຄວາມບອບບາງຕ່ຳຫາກາງຕ່ຳ;
3) ສູ້ຊົນຫຼຸດຜ່ອນທາດອາຍເຮືອນແກ້ວໃຫ້ໄດ້ 60% ໂດຍທຽບໃສ່ລະດັບການປ່ອຍຕາມປົກກະຕິ (BAU);
4) ສູ້ຊົນຫຼຸດຜ່ອນຜົນກະທົບຂອງໄພພິບັດຕໍ່ເສດຖະກິດ ຫຼື ລວມຍອດຜະລິດຕະພັນພາຍໃນ ໃຫ້ໜ້ອຍກວ່າ 0,2%, ຫຼຸດຜ່ອນຜົນກະທົບຂອງໄພພິບັດຕໍ່ປະຊາກອນ ໃຫ້ໜ້ອຍກວ່າ 120.000 ຄົນ ພາຍໃນປີ 2030 ແລະ ກາຍເປັນປະເທດປ່ອຍທາດອາຍເຮືອນແກ້ວຕ່ຳ ໂດຍຫຼຸດຜ່ອນການປ່ອຍສຸດທິ ໃຫ້ໜ້ອຍກວ່າ 1,2 ໂຕນ/ຄົນ/ປີ, ການເພີ່ມເນື້ອທີ່ປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ປະເທດ ແລະ ການນຳໃຊ້ພະລັງງານທົດແທນ ກວມເອົາ 30% ຂອງການນຳໃຊ້ພະລັງງານທັງໝົດໃນປະເທດ.

2.2 ຫຼັກການພື້ນຖານ

ຍຸດທະສາດສະບັບນີ້ ປະຕິບັດຕາມຫຼັກການພື້ນຖານ ດັ່ງລຸ່ມນີ້:

1. **ຄວາມຈຳເປັນ, ຄວາມສອດຄ່ອງ ແລະ ການເຊື່ອມໂຍງ:** ຮັບປະກັນຄວາມສອດຄ່ອງ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ຕາມທິດຍືນຍົງ ແລະ ສີຂຽວ, ສອດຄ່ອງກັບສະພາບເງື່ອນໄຂຂອງປະເທດ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ດ້ານການປ່ຽນແປງດິນຟ້າອາກາດ;

2. **ການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ:** ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າເປັນອົງປະກອບທີ່ສຳຄັນໃນບັນດານະໂຍບາຍ, ຍຸດທະສາດ, ແຜນງານ, ແຜນການ, ໂຄງການພັດທະນາ ແລະ ໂຄງການລົງທຶນຕ່າງໆ;
3. **ການເສີມສ້າງສະພາບແວດລ້ອມທີ່ເອື້ອຍອຳນວຍ:** ປັບປຸງ ແລະ ພັດທະນານະໂຍບາຍ, ການກຽມຄວາມພ້ອມດ້ານການເງິນ ແລະ ເຕັກນິກ ເພື່ອສົ່ງເສີມ ແລະ ຄຸ້ມຄອງວຽກງານການປ່ຽນແປງດິນຟ້າອາກາດ;
4. **ການຮ່ວມມື, ການປະສານງານ ແລະ ຄູ່ຮ່ວມງານ:** ເສີມຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງດ້ານການປະສານງານ, ການຮ່ວມມື, ການເປັນຄູ່ຮ່ວມງານ ແລະ ສ້າງເຄືອຂ່າຍກັບຂະແໜງການຂອງລັດ, ພາກສ່ວນທຸລະກິດ, ເອກະຊົນ, ຊຸມຊົນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ ພາຍໃນ ແລະ ຕ່າງປະເທດ ໃຫ້ມີປະສິດທິຜົນ;
5. **ການຍົກລະດັບຄວາມສາມາດ:** ສ້າງຄວາມສາມາດດ້ານການຈັດຕັ້ງ ແລະ ບຸກຄະລາກອນ ສຳລັບວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ໃນຂະແໜງການຂອງລັດ, ສະຖາບັນການສຶກສາຄົ້ນຄວ້າ, ພາກສ່ວນທຸລະກິດ, ເອກະຊົນ ແລະ ຊຸມຊົນໃຫ້ມີຄວາມເຂັ້ມແຂງ;
6. **ການແກ້ໄຂບັນຫາແບບຍຸດທະສາດ, ມີສ່ວນຮ່ວມ ແລະ ມີຜົນປະໂຫຍດຮ່ວມກັນ:** ສົ່ງເສີມການພັດທະນາ ແລະ ການຈັດຕັ້ງປະຕິບັດການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ທີ່ມີລັກສະນະຍຸດທະສາດ, ແບບມີສ່ວນຮ່ວມ, ມີປະສິດທິພາບ ແລະ ປະສິດທິຜົນດ້ານການລົງທຶນ, ມີຕະຫຼາດຮອງຮັບ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ຫຼາຍຂົງເຂດ, ຂະແໜງການ ແລະ ຊຸມຊົນ;
7. **ເຄື່ອງມືດ້ານການເງິນທີ່ເໝາະສົມ:** ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃນການເຂົ້າເຖິງ, ຈັດສັນງົບປະມານ, ພັດທະນາລະບົບ ແລະ ກົນໄກການເງິນທີ່ເໝາະສົມ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ;
8. **ການສຶກສາ, ສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງມວນຊົນ:** ສົ່ງເສີມ ແລະ ສ້າງຄວາມເຂັ້ມໃນວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດໃນລະບົບການສຶກສາ, ສ້າງຈິດສຳນຶກ, ຄວາມຮັບຜິດຊອບ, ການມີສ່ວນຮ່ວມ ແລະ ການປະກອບສ່ວນຂອງມວນຊົນ ເຂົ້າໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດ;
9. **ການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ສອດຄ່ອງກັບ ຫຼັກການປົກປັກຮັກສາສິ່ງແວດລ້ອມ, ການປົກຮັກສາຊີວະນາໆພັນ, ການພັດທະນາແບບຍືນຍົງ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ:** ຖືເອົາວຽກງານການປ້ອງກັນເປັນວຽກງານຕົ້ນຕໍ ແລະ ແກ້ໄຂ, ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດເປັນວຽກງານສຳຄັນ, ນຳໃຊ້ວິທີການ ແລະ ເຕັກໂນໂລຊີທີ່ເໝາະສົມ, ມີຄວາມໂປ່ງໃສ, ມີຈັນຍາບັນ, ຜູ້ສ້າງຄວາມເສຍຫາຍ ແລະ ຜູ້ນຳໃຊ້ເປັນຜູ້ຈ່າຍ, ສົ່ງເສີມ ຍ້ອງຍໍ ຫຼື ນະໂຍບາຍ ອື່ນໆ ຕໍ່ຜູ້ທີ່ມີຜົນງານທີ່ດີເດັ່ນ;
10. **ຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການ:** ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງໃນການປະສານງານ, ທຸກຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການປະສານສົມທົບ ແລະ ຈັດຕັ້ງປະຕິບັດຫຼັກການຂ້າງເທິງນັ້ນຕາມໜ້າທີ່ ແລະ ພາລະບົດບາດຂອງຂະແໜງການຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

2.3 ຍຸດທະສາດ, ແຜນງານ ແລະ ໂຄງການບຸລິມະສິດຮອດປີ 2030

ສປປ ລາວ ຈະຈັດຕັ້ງປະຕິບັດ 3 ຍຸດທະສາດຕົ້ນຕໍແຕ່ນີ້ຮອດປີ 2030 ດັ່ງນີ້:

2.3.1 ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ສ້າງຄວາມທົນທານ ແລະ ຄວາມສາມາດໃນການປັບຕົວ, ຫຼຸດຜ່ອນຄວາມສ່ຽງ ແລະ ຟື້ນຟູຜົນກະທົບຈາກການປ່ຽນແປງດິນຟ້າອາກາດ

1. ພັດທະນາ ແລະ ຄຸ້ມຄອງລະບົບຂໍ້ມູນ-ຂ່າວສານ, ລາຍງານກ່ຽວກັບການປ່ຽນແປງ ແລະ ພັດທະນາລະບົບເຕືອນໄພລ່ວງໜ້າກ່ຽວກັບການປ່ຽນແປງດິນຟ້າອາກາດ ລວມທັງການຕິດຕາມ, ການສື່ສານ, ແຜນຕອບໂຕ້ສຸກເສີນ ແລະ ຟື້ນຟູພາຍຫຼັງໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ;
2. ພັດທະນາ, ນ□າໃຊ້ ແລະ ຖ່າຍທອດເຕັກໂນໂລຊີທີ່ທັນສະໄໝ ແລະ ເໝາະສົມໃນການເຕືອນໄພ, ປ້ອງກັນ, ຕ້ານ, ສະກັດກັ້ນ, ຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບ, ສ້າງຄວາມທົນທານ ແລະ ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ;
3. ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ, ພັດທະນາຊັບພະຍາກອນມະນຸດ ລວມທັງ ຄວາມຮູ້ ແລະ ຄວາມສາມາດໃນດ້ານຕ່າງໆ ເພື່ອຮັບປະກັນໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ລະບົບການວາງແຜນ ແລະ ຄຸ້ມຄອງເພື່ອການປັບຕົວ ແລະ ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ;
4. ສົ່ງເສີມ ແລະ ປຸກລະດົມການສຶກສາ, ສ້າງຈິດສຳນຶກ ເພື່ອຍົກສູງຄວາມຮູ້, ສະຕິ, ຄວາມຕື່ນຕົວ, ແລະ ຫຼຸດຜ່ອນພຶດຕິກຳທີ່ມີຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ;
5. ເສີມສ້າງສິ່ງແວດລ້ອມທີ່ເອື້ອອຳນວຍ, ຊຸກຍູ້ສົ່ງເສີມ ແລະ ບັງຄັບໃຊ້ມາດຕະການສຳລັບການປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງ ແລະ ຟື້ນຟູຜົນກະທົບຈາກການປ່ຽນແປງດິນຟ້າອາກາດ;
6. ເສີມສ້າງຄວາມທົນທານ, ຄວາມສາມາດໃນການປັບຕົວ ໂຄງລ່າງພື້ນຖານ, ລະບົບການຜະລິດ, ທຸລະກິດ, ບໍລິການ, ລະບົບນິເວດ ແລະ ຊຸມຊົນ ກ່ຄືທຸກຂະແໜງການ ແລະ ລະດັບທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບ.

2.3.2 ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ຄວບຄຸມ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ

1. ເສີມສ້າງຄວາມເຂັ້ມແຂງໃນການສຳຫຼວດ, ວາງແຜນຄຸ້ມຄອງ ແລະ ຄວບຄຸມທາດອາຍເຮືອນແກ້ວ;
2. ເສີມຂະຫຍາຍການປະຢັດ ແລະ ນຳໃຊ້ພະລັງງານ ແລະ ຊັບພະຍາກອນຕ່າງໆ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
3. ເສີມຂະຫຍາຍການພັດທະນາ ແລະ ການນຳໃຊ້ພະລັງງານທົດແທນ ແລະ ພະລັງງານທາງເລືອກເປັນມິດຕໍ່ສິ່ງແວດລ້ອມ ແລະ ປ່ອຍກາກບອນຕ່ຳ;
4. ເສີມຂະຫຍາຍການພັດທະນາ ແລະ ການຊຸ້ມໃຊ້ເຕັກໂນໂລຊີ, ກົນໄກການພັດທະນາທີ່ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ, ປ່ອຍກາກບອນຕ່ຳ, ເຕັກໂນໂລຊີດັກຈັບ ແລະ ເກັບກັກທາດອາຍເຮືອນແກ້ວ ຢູ່ໃນຂະແໜງການທີ່ເຫັນວ່າມີຄວາມຈຳເປັນ;
5. ປົກປັກຮັກສາ ແລະ ເສີມຂະຫຍາຍການດູດຊັບ ແລະ ເກັບກັກທາດອາຍກາກບອນຂອງລະບົບນິເວດ ໂດຍສະເພາະແມ່ນການປົກປັກຮັກສາ ແລະ ຟື້ນຟູປ່າໄມ້, ດິນບໍລິເວນນ້ຳ, ດິນຖ່ານຕົ້ມ ແລະ ດິນກາກບອນ;
6. ສົ່ງເສີມການຜະລິດ, ການປຸງແຕ່ງ, ການດຳເນີນກິດຈະການ, ການບໍລິການ ແລະ ການກຳຈັດສິ່ງເສດເຫຼືອ ໃຫ້ໄດ້ຕາມມາດຕະຖານພາຍໃນ ແລະ ສາກົນດ້ານສິ່ງແວດລ້ອມ ແລະ ການຄວບຄຸມທາດອາຍເຮືອນແກ້ວ;
7. ສົ່ງເສີມ ແລະ ເສີມຂະຫຍາຍການພັດທະນາ ແລະ ປັບປຸງຜັງເມືອງ, ໂຄງລ່າງພື້ນຖານໂຍທາທິການ, ລະບົບການຂົນສົ່ງ, ໂດຍສານ, ສິນຄ້າ ແລະ ການສັນຈອນດ້ວຍພາຫານະທີ່ນຳໃຊ້ໄຟຟ້າ ແລະ ບໍ່ນຳໃຊ້ນ້ຳມັນເຊື້ອໄຟ;
8. ສົ່ງເສີມ ແລະ ເສີມຂະຫຍາຍການຄຸ້ມຄອງສິ່ງເສດເຫລືອທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ລວມທັງ ການຫຼຸດຜ່ອນ, ການນຳໃຊ້ຄືນ, ການຜະລິດຄືນ (3R) ແລະ ການປ່ຽນສິ່ງເສດເຫຼືອໃຫ້ເປັນພະລັງງານ;

9. ສ້າງຄວາມສາມາດ ແລະ ສົ່ງເສີມການຈັດຕັ້ງປະຕິບັດນິຕິກຳ ແລະ ມາດຕະການສຳລັບການຄວບຄຸມການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ.

2.3.3 ຍຸດທະສາດ ການເຊື່ອມສານ ແລະ ສ້າງສະພາບແວດລ້ອມທີ່ເອື້ອຍອຳນວຍ ສຳລັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ

1. ເຊື່ອມສານບັນດາເປົ້າໝາຍ ແລະ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຂົ້າໃນຂະແໜງການຕ່າງໆ;
2. ພັດທະນາ ແລະ ຈັດຕັ້ງປະຕິບັດລະບຽບການ, ແຜນງານ ແລະ ກົນໄກການເງິນກ່ຽວກັບ ການຄຸ້ມຄອງການປ່ຽນແປງດິນຟ້າອາກາດ;
3. ປັບປຸງ ແລະ ເສີມຂະຫຍາຍການປະສານງານ ແລະ ການຮ່ວມມືພາຍໃນ ແລະ ສາກົນ;
4. ພັດທະນາ ແລະ ຈັດຕັ້ງປະຕິບັດບັນດາແຜນການ ແລະ ໂຄງການຄວາມກຽມພ້ອມກ່ຽວກັບ ການຄຸ້ມຄອງການປ່ຽນແປງດິນຟ້າອາກາດ;
5. ປັບປຸງ ແລະ ເສີມຂະຫຍາຍການຕິດຕາມກວດກາ ແລະ ປະເມີນຜົນ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ.

2.4 ແຜນງານ ແລະ ໂຄງການບຸລິມະສິດຮອດປີ 2030

ຍຸດທະສາດສະບັບນີ້ປະກອບດ້ວຍ 9 ແຜນງານ ດັ່ງທີ່ໄດ້ສັງລວມໃນຕາຕະລາງລຸ່ມນີ້. ບັນດາໂຄງການໃນແຕ່ລະແຜນງານໄດ້ລະບຸໄວ້ໃນ ເອກະສານຊ້ອນທ້າຍ.

ຕາຕະລາງ 1 ແຜນງານ ແລະ ໂຄງການບຸລິມະສິດຮອດປີ 2030

ລດ	ແຜນງານ	ຈຸດປະສົງ
1	ພັດທະນາ, ແລະ ຄຸ້ມຄອງ ລະບົບຂໍ້ມູນຂ່າວສານ, ແລະ ລາຍງານສະພາບ, ເຫດການ ແລະ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ	ແຜນງານ 1 ນີ້ແມ່ນເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດທີ 2.3.1 ແລະ 2.3.2. ຈຸດປະສົງຕົ້ນຕໍແມ່ນເພື່ອໃຫ້ມີຂໍ້ມູນທີ່ເໝາະສົມ ແລະ ພຽງພໍສຳລັບການຕັດສິນໃຈ ແລະ ວາງແຜນຄຸ້ມຄອງການປ່ຽນແປງດິນຟ້າອາກາດ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ທັນການ.
2	ເສີມສ້າງຄວາມທົນທານ, ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງໂຄງລ່າງພື້ນຖານ, ລະບົບການຜະລິດ, ທຸລະກິດ, ບໍລິການ, ລະບົບນິເວດ ແລະ ຊຸມຊົນ ກໍ່ຄືທຸກຂະແໜງການ ທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບ	ແຜນງານ 2 ນີ້ແມ່ນເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດທີ 2.3.1. ໂດຍລວມແລ້ວ ຈຸດປະສົງຂອງແຜນງານນີ້ແມ່ນເພື່ອເຮັດໃຫ້ ລະບົບເສດຖະກິດ-ສັງຄົມ, ນິເວດ ແລະ ສິ່ງແວດລ້ອມ ມີຄວາມທົນທານ, ຄວາມສາມາດໃນການປັບຕົວສູງ, ຫຼຸດຜ່ອນຄວາມສ່ຽງ, ຜົນກະທົບ ແລະ ຟື້ນຕົວໄດ້ໄວຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດ.
3	ເສີມສ້າງຄວາມເຂັ້ມແຂງໃນ ການ ການສຳຫຼວດ, ຕິດຕາມກວດກາ ແລະ ລາຍງານກ່ຽວກັບ ທາດອາຍເຮືອນແກ້ວ	ແຜນງານ 3 ນີ້ແມ່ນເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດ 2.3.2 ແນໃສ່ເພື່ອຍົກລະດັບຄວາມສາມາດຂອງການຈັດຕັ້ງລັດ, ເອກະຊົນ ແລະ ຫົວໜ່ວຍທຸລະກິດ ແລະ ລະດັບຄວາມສົມບູນ, ຄວາມຊັດເຈນແມ່ນຍຳ ແລະ ໂປ່ງໃສຂອງການຄິດໄລ່, ປະເມີນການປ່ອຍ ແລະ ການດູດຊັບທາດອາຍເຮືອນແກ້ວ, ເຊິ່ງເປັນພື້ນຖານສຳຄັນສຳລັບ ການວາງແຜນຫລຸດຜ່ອນທາດອາຍເຮືອນແກ້ວ.

4	ເສີມສ້າງຄວາມເຂັ້ມແຂງ ໃນການຄວບຄຸມ ແລະ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃນຂະແໜງການຕ່າງໆ	ແຜນງານ 4 ນີ້ແມ່ນເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດ 2.3.2, ແລະ ເພື່ອເປັນການປະກອບສ່ວນຕໍ່ເປົ້າໝາຍ ການຫຼຸດຜ່ອນທາດອາຍເຮືອແກ້ວ ແລະ ການເຕີບໂຕສີຂຽວ ໄປພ້ອມໆກັນກັບການສົ່ງເສີມເຕັກໂນໂລຊີ, ພູມປັນຍາ ແລະ ກິດຈະການກ່ຽວກັບເຕັກໂນໂລຊີສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມໃນ ແຜນງານທີ 5.
5	ພັດທະນາ, ນຳໃຊ້ ແລະ ຖ່າຍທອດເຕັກໂນໂລຊີ	ແຜນງານ 5 ນີ້ແມ່ນເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ 2.3.1 ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ສ້າງຄວາມທົນທານ ແລະ ຄວາມສາມາດໃນການປັບຕົວ, ຫຼຸດຜ່ອນຄວາມສ່ຽງ ແລະ ຟື້ນຟູຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ຂໍ້ 2.3.2. ຍຸດທະສາດ ການເສີມສ້າງຄວາມເຂັ້ມແຂງໃນການປ້ອງກັນ, ຄວບຄຸມ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ
6	ສົ່ງເສີມການສຶກສາ ແລະ ສ້າງຈິດສຳນຶກ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ	ແຜນງານ 6-9 ນີ້ແມ່ນເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດ 2.3.3, ເຊິ່ງເປັນຍຸດທະສາດຊຸກຍູ້ສົ່ງເສີມ ຍຸດທະສາດ 2.3.1 ແລະ 2.3.2. ຈຸດປະສົງສະເພາະແມ່ນເພື່ອ: - ຍົກສູງການໄດ້ຮັບຂໍ້ມູນ, ຄວາມຮູ້, ຈິດສຳນຶກ ແລະ ການອ່ອມມື ແລະ ປະກອບສ່ວນຂອງສັງຄົມ, ຊຸມຊົນ ແລະ ທຸກຂະແໜງການ ໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດ - ໃຫ້ມີສະພາບແວດລ້ອມ ລວມທັງນະໂຍບາຍ ແລະ ເງື່ອນໄຂທີ່ເອື້ອອຳນວຍ ແລະ ຄວາມພ້ອມດ້ານຕ່າງໆ - ໃຫ້ມີການຈັດຕັ້ງ ແລະ ລະບົບຄຸ້ມຄອງບໍລິຫານທີ່ເຂັ້ມແຂງ ແລະ ມີຊັບພະຍາກອນມະນຸດທີ່ພຽງພໍ ສຳລັບ ການຄຸ້ມຄອງບໍລິຫານ ວຽກງານການປ່ຽນແປງດິນຟ້າອາກາດ
7	ເສີມສ້າງຄວາມເຂັ້ມແຂງ ດ້ານການເງິນ ໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	
8	ເຊື່ອມສານ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	
9	ເສີມສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ, ຊັບພະຍາກອນມະນຸດ ຄຸ້ມຄອງບໍລິຫານ ວຽກງານການປ່ຽນແປງດິນຟ້າອາກາດ	

ພາກທີ III: ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ, ການປະເມີນຜົນແລະການລາຍງານ

3.1 ການຈັດຕັ້ງປະຕິບັດ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເປັນຈຸດປະສານງານໃນການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້, ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ. ໜ້າວຽກຕົ້ນຕໍລວມມີ:

1) ເຜີຍແຜ່ ແລະ ສື່ສານຍຸດທະສາດສະບັບນີ້ໃຫ້ແກ່ຜູ້ມີສ່ວນຮ່ວມ ແລະ ກຸ່ມເປົ້າໝາຍໃຫ້ທົ່ວເຖິງ;
2) ສ້າງ ແຜນງານ, ໂຄງການ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ລວມທັງ ກົນໄກ ແລະ ແຜນການດ້ານການເງິນສຳລັບການຈັດຕັ້ງປະຕິບັດ. ບັນດາແຜນງານ ແລະ ໂຄງການ ຕ້ອງໄດ້ຄຳນຶງເຖິງຄວາມສອດຄ່ອງ ແລະ ຜົນທະທົບທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ລວມທັງຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ ແລະ ກຸ່ມຄົນທີ່ມີຄວາມບອບບາງ;
3) ຊຸກຍູ້, ສົ່ງເສີມ ແລະ ເຮັດວຽກຢ່າງໃກ້ສິດຮ່ວມກັບບັນດາກະຊວງ ແລະ ອົງການຈັດຕັ້ງໃນທຸກຂະແໜງການ ແລະ ທຸກລະດັບ ສ້າງແຜນປະຕິບັດງານ ຫຼື ເຊື່ອມສານວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຂົ້າໃນຍຸດທະສາດ ແລະ ແຜນການ ພ້ອມທັງສ້າງຕັ້ງໜ່ວຍງານ ຫຼື ແຕ່ງຕັ້ງຜູ້ຮັບຜິດຊອບການຈັດຕັ້ງປະຕິບັດແຜນການຂອງຕົນ ແລະ ປະສານງານການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້;
4) ງົບປະມານການຈັດຕັ້ງປະຕິບັດຍຸດທະສາດແມ່ນໄດ້ມາຈາກ ກອງທຶນການປ່ຽນແປງດິນຟ້າອາກາດ ເຊິ່ງເປັນສ່ວນໜຶ່ງຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF). ນອກນີ້ ກໍ່ໄດ້ມາຈາກການລະດົມທຶນຈາກແຫຼ່ງທຶນອື່ນໆ ຈາກກອງທຶນສາກົນສຳລັບວຽກງານການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF), ກອງທຶນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (AF), ກອງທຶນສຳລັບປະເທດດ້ອຍພັດທະນາ (LDCF), ກອງທຶນສິ່ງແວດລ້ອມໂລກ (GEF), ແຫຼ່ງທຶນທີ່ໄດ້ຮັບຈາກການຮ່ວມມືສອງຝ່າຍ, ການຮ່ວມມືຫຼາຍຝ່າຍ ແລະ ຄູ່ຮ່ວມພັດທະນາສາກົນຕ່າງໆ ແລະ ແຫຼ່ງທຶນອື່ນໆທີ່ຖືກຕ້ອງຕາມກົດໝາຍ ຕາມທີ່ໄດ້ກຳນົດໃນ ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.

3.2 ການຕິດຕາມກວດກາ ແລະ ການປະເມີນຜົນ

3.2.1 ລະບົບການຕິດຕາມກວດກາ, ການລາຍງານ ແລະ ການຢັ້ງຢືນ

ສປປ ລາວ ມີຄວາມຈຳເປັນໃນການຕິດຕາມກວດກາ, ປະເມີນ ແລະ ລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ລວມທັງ ເປົ້າໝາຍດ້ານການຄຸ້ມຄອງການປ່ຽນແປງດິນຟ້າອາກາດໃນແຕ່ລະປີ. ລະບົບການຕິດຕາມກວດກາ, ການລາຍງານ ແລະ ການຢັ້ງຢືນ ເຊິ່ງຈະສ້າງຂຶ້ນໃນປີ 2022 ໂດຍສອດຄ່ອງ ແລະ ຕາມພັນທະຂອງ ສປປ ລາວ ພາຍໃຕ້ ສົນທິສັນຍາ ແລະ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (ລາຍລະອຽດໄດ້ລະບຸໃນເອກະສານຊ້ອນທ້າຍ) ແລະ ສຸມໃສ່ການຕິດຕາມກວດກາ, ການລາຍງານ ແລະ ການຢັ້ງຢືນບັນດາໜ້າວຽກລຸ່ມນີ້:

- ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ບົດສື່ສານແຫ່ງຊາດ ແລະ ບົດລາຍງານທຸກສອງປີ ລວມທັງ ການສຳຫຼວດທາດອາຍເຮືອນແກ້ວ, ຄວາມຄືບໜ້າ ແລະ ຜົນກະທົບຂອງການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວ, ການປັບຕົວ ແລະ ການເພີ່ມຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ;
- ເຊື່ອມສານ, ຄວາມຄືບໜ້າ ແລະ ຜົນສຳເລັດເປົ້າໝາຍຂອງວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ທີ່ໄດ້ກຳນົດໃນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX, ເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ, ຍຸດທະສາດການເຕີບໂຕສີຂຽວ ແລະ ຍຸດທະສາດແຫ່ງຊາດກ່ຽວ

ກັບການຫຼຸດຜ່ອນຄວາມສ່ຽງໄພພິບັດ 2021-2030, ຍຸດທະສາດຂອງຂະແໜງການ ໃນລະດັບສູນກາງ ແລະ ທ້ອງຖິ່ນ;

- ຄວາມຕ້ອງການ ແລະ ການໄດ້ຮັບການສະໜັບສະໜູນດ້ານການເງິນ, ການຖ່າຍທອດເຕັກໂນໂລຊີ ແລະ ການສ້າງຄວາມສາມາດດ້ານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ.

3.2.2 ການທົບທວນຍຸດທະສາດ ແລະ ແຜນງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດແຫ່ງຊາດ

1. ການທົບທວນປະຈຳປີ ແລະ ກາງສະໄໝ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະເປັນຜູ້ທົບທວນ ແລະ ກະກຽມບົດລາຍງານປະຈຳປີ ກ່ຽວກັບ ຄວາມຄືບໜ້າການຈັດຕັ້ງປະຕິບັດ, ເຊິ່ງຈະເລີ່ມໃນເດືອນ ທັນວາ 2022. ການທົບທວນການຈັດຕັ້ງປະຕິບັດຍຸດທະສາດກາງສະໄໝ ຈະດຳເນີນໃນປີ 2025.

2. ການທົບທວນໄລຍະສຸດທ້າຍ

ການທົບທວນໄລຍະສຸດທ້າຍ ຈະດຳເນີນໃນປີ 2029. ການທົບທວນໄລຍະສຸດທ້າຍ ຈະເປັນຂໍ້ມູນພື້ນຖານໃຫ້ແກ່ ການປັບປຸງຍຸດທະສາດສະບັບຕໍ່ໄປ. ໃນການທົບທວນດັ່ງກ່າວ, ກະຊວງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຈະໄດ້ປະສານສົມທົບຢ່າງໃກ້ສິດກັບ ກະຊວງແຜນການ ແລະ ການລົງທຶນ, ບັນດາຂະແໜງການທັງໃນລະດັບສູນກາງ ແລະ ທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ. ການປະເມີນຜົນໄລຍະສຸດທ້າຍ ຈະປະກອບດ້ວຍ ການປະເມີນປະສິດທິພາບ, ປະສິດທິຜົນ, ຄວາມສອດຄ່ອງ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້. ພ້ອມດຽວກັນນີ້ ກໍ່ຍັງຈະໄດ້ທົບທວນ ວຽກງານລຸ່ມນີ້:

- ຂອບເຂດໜ້າວຽກດ້ານການຕິດຕາມກວດກາ, ການລາຍງານ ແລະ ການຢັ້ງຢືນຄວາມຄືບໜ້າ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດ ແຜນການກ່ຽວກັບການປ່ຽນແປງດິນຟ້າອາກາດຂອງບັນດາຂະແໜງການ;
- ການຮ່ວມມືໃນລະດັບຊາດ, ພາກພື້ນ ແລະ ສາກົນ;
- ອົງປະກອບສຳຄັນສຳລັບ ການສ້າງຍຸດທະສາດສະບັບຕໍ່ໄປ.

ເອກະສານຊ້ອນທ້າຍ

ແຜນງານ ແລະ ໂຄງການບຸລິມະສິດຮອດປີ 2030

ແຜນງານ 1: ພັດທະນາ, ຄຸ້ມຄອງລະບົບຂໍ້ມູນຂ່າວ-ສານ, ລາຍງານ ແລະ ລະບົບເຕືອນໄພລ່ວງໜ້າ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ພັດທະນາ ແລະ ຄຸ້ມຄອງຂໍ້ມູນ-ຂ່າວສານ ແລະ ສະຖິຕິ ຂອງວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	√
ຕິດຕາມ, ປະເມີນ ແລະ ສ້າງແຜນທີ່ຄວາມສ່ຽງ ແລະ ຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທີ່ກ່ຽວຂ້ອງ (ນ້ຳຖ້ວມ, ແຫ້ງແລ້ງ, ຄື້ນຄວາມຮ້ອນ ແລະ ອື່ນໆ).	√	√
ພັດທະນາລະບົບເຕືອນໄພລ່ວງໜ້າ ລວມທັງການຕິດຕາມ, ປະເມີນ ໄພອັນຕະລາຍ, ການສື່ສານລາຍງານ, ແຈ້ງເຕືອນໄພລ່ວງໜ້າ ແລະ ການຕອບໂຕ້ສຸກເສີນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ	√	√
ສ້າງບົດລາຍງານສະພາບ ແລະ ບົດສັງລວມວຽກງານການປ່ຽນແປງດິນຟ້າອາກາດ	√	√

ແຜນງານ 2: ເສີມສ້າງຄວາມທົນທານ, ຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຂອງໂຄງລ່າງພື້ນຖານ, ລະບົບການຜະລິດ, ທຸລະກິດ, ບໍລິການ, ລະບົບນິເວດ ແລະ ຊຸມຊົນ ກໍ່ຄືທຸກຂະແໜງການທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
1. ຂົງເຂດກະສິກຳ		
ທົບທວນ ແລະ ປະເມີນຄວາມບອບບາງ, ຄວາມສ່ຽງ, ຜົນກະທົບ ແລະ ແຜນການ-ທາງເລືອກໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຂອງຂົງເຂດກະສິກຳ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານໃຫ້ທົ່ວເຖິງ ແລະ ລະອຽດ ເຊິ່ງສຸມໃສ່: - ລະບົບການຜະລິດ ແລະ ຕ່ອງໂສ້ມູນຄ່າເພີ່ມຕົ້ນຕໍ ສຳລັບການຄ້ຳປະກັນສະບຽງອາຫານ, ເສຖະກິດ-ການຄ້າ ແລະ ການສ້າງວຽກເຮັດງານທຳ - ລະບົບການຜະລິດ ແລະ ຕ່ອງໂສ້ມູນຄ່າເພີ່ມອື່ນໆທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບ	√	√
ສ້າງ ແລະ ຈັດຕັ້ງປະຕິບັດແຜນການປັບຕົວ ສຳລັບ ຂະແໜງກະສິກຳ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ	√	√
ສ້າງຄວາມເຂັ້ມແຂງ ແລະ ເສີມຂະຫຍາຍການພັດທະນາ ລະບົບເຕືອນໄພລ່ວງໜ້າ: - ຂະຫຍາຍລະບົບອຸຕຸກະເສດ ໃຫ້ໄດ້ໃນລະດັບພາກ, ເຂດ ແລະ ລະບົບການຜະລິດ ແລະ ຕ່ອງໂສ້ມູນຄ່າເພີ່ມຕົ້ນຕໍ ໃຫ້ທົ່ວເຖິງໃນແຕ່ລະແຂວງທີ່ມີຄວາມສ່ຽງ - ສຶກສາ ແລະ ສ້າງແຜນ ຕິດຕາມກວດກາ ແລະ ເຕືອນໄພລ່ວງໜ້າ ກ່ຽວກັບ ວັດສະພືດ, ສັດຕູພືດ, ແມງໄມ້ ແລະ ພະຍາດລະບາດໃນສັດລ້ຽງ - ຈັດຕັ້ງປະຕິບັດແຜນຕິດຕາມກວດກາ ແລະ ເຕືອນໄພລ່ວງໜ້າ ກ່ຽວກັບ ວັດສະພືດ, ສັດຕູພືດ, ແມງໄມ້ ແລະ ພະຍາດລະບາດໃນສັດລ້ຽງ	√	√
ເສີມຂະຫຍາຍການພັດທະນາ ແລະ ການຖ່າຍທອດເຕັກໂນໂລຊີ ແລະ ເຕັກນິກ ສຳລັບ ການປັບຕົວ ແລະ ສ້າງຄວາມທົນທານຕໍ່ການປຽນແປງດິນຟ້າອາກາດ ໃນຂົງເຂດກະສິກຳ ທີ່ໄດ້ຮັບຜົນກະທົບຈາກໄພອັນຕະລາຍທຸກຮູບແບບ	√	√

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
- ທົບທວນ, ກຳນົດ/ຂຶ້ນບັນຊີ ແລະ ປັບປຸງແຜນງານ ຖ່າຍທອດເຕັກໂນໂລຊີ ສຳລັບ ການປັບຕົວ ແລະ ສ້າງຄວາມທົນທານຕໍ່ການປຽນແປງດິນຟ້າອາກາດ ໃນຂົງເຂດກະສິກຳ - ຈັດຕັ້ງປະຕິບັດ ແຜນງານ ຖ່າຍທອດເຕັກໂນໂລຊີ ສຳລັບ ຂົງເຂດກະສິກຳ ໂດຍສະເພາະແມ່ນ ເຕັກໂນໂລຊີ ທີ່ສ້າງຄວາມທົນທານ ແລະ ກ້າວໜ້າ, ການກະສິກຳ ທີ່ຄຳນຶງເຖິງຜົນກະທົບຂອງການປ່ຽນແປງດິນຟ້າອາກາດ, ສ້າງລະບົບກະສິກຳ ແລະ ແນວພັນໃຫ້ມີຄວາມຫຼາກຫຼາຍ, ອະນຸລັກ, ອີງໃສ່ ແລະ ເປັນມິດກັບລະບົບນິເວດ.		
ເສີມຂະຫຍາຍການຄົ້ນຄວ້າ, ການພັດທະນາ ແລະ ສິ່ງເສີມ ລະບົບການກະສິກຳ, ສັດລ້ຽງ ແລະ ແນວພັນພືດ, ໂດຍສຸມໃສ່ ການຜະລິດກະສິກຳເພື່ອໂພສະນາການ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ, ການຄ້າຜະລິດຕະພັນກະສິກຳ, ການອະນຸລັກພັນທຸກຳ ແລະ ຊະນິດພັນທີ່ມີຄວາມເໝາະສົມ ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ	√	√
ພັດທະນາ ແລະ ເສີມຂະຫຍາຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກສຳລັບການຜະລິດ, ການປຸງແຕ່ງ ແລະ ການເກັບຮັກສາຜະລິດຕະພັນກະສິກຳທີ່ທົນທານ ແລະ ຊ່ວຍປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ	√	√
ສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ໂຄງການ ແລະ ຄວາມສາມາດຂອງອົງການຈັດຕັ້ງ, ລວມທັງ ອົງການຈັດຕັ້ງຂອງຊາວກະສິກອນ ເພື່ອປັບຕົວ ແລະ ສ້າງຄວາມທົນທານຕໍ່ການປຽນແປງດິນຟ້າອາກາດ, ຮັບມືສຸກເສີນ ແລະ ຟື້ນຟູຫຼັງຈາກໄພພິບັດໃນທຸກຂົງເຂດກະສິກຳ	√	√
ສຶກສາ ແລະ ສິ່ງເສີມການຜະລິດ, ທຸລະກິດ, ຕ່ອງໂສ້ມູນຄ່າ ແລະ ຂະຫຍາຍທາງເລືອກໃນການດຳລົງຊີວິດຂອງຊາວກະສິກອນ ເພື່ອປັບຕົວເຂົ້າກັບການປຽນແປງດິນຟ້າອາກາດ	√	
ປັບປຸງກົດໝາຍກະສິກຳ, ດຳລັດ ແລະ ນະໂຍບາຍອື່ນໆ ເພື່ອເຊື່ອມສານ ແລະ ສິ່ງເສີມການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນຂະແໜງກະສິກຳ	√	√
2. ຂົງເຂດນ້ຳ ແລະ ຊັບພະຍາກອນນ້ຳ		
ເສີມຂະຫຍາຍ ການສຶກສາ ແລະ ປະເມີນຄວາມບອບບາງຂອງຂົງເຂດນ້ຳ ແລະ ຊັບພະຍາກອນນ້ຳ ເປັນຕົ້ນ: ດິນທາມ, ດິນຖ່ານຕົມ, ຊີວະນານາພັນທາງນ້ຳ, ລະບົບນິເວດ, ຖິ່ນທີ່ຢູ່ອາໄສ, ປະລິມານ ແລະ ຄຸນພາບນ້ຳ, ການສະໜອງນ້ຳ ແລະ ສຸຂະພິບານ ໃນລະດັບຊາດ ຫຼື ອ່າງຮັບນ້ຳຫຼັກທີ່ໄດ້ຮັບຜົນກະທົບ, ມີຄວາມສ່ຽງສູງ ຫຼື ສາມາດຊ່ວຍໃນການປັບຕົວໃນອ່າງຮັບນ້ຳຍ່ອຍ ແລະ ອື່ນໆ	√	√
ສ້າງ ແລະ ຈັດຕັ້ງປະຕິບັດແຜນການປັບຕົວ ແລະ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ຂອງຂົງເຂດນ້ຳ ແລະ ຊັບພະຍາກອນນ້ຳ ໂດຍການຄຸ້ມຄອງ ແລະ ປົກປັກຮັກສາອ່າງຮັບນ້ຳ, ແຫຼ່ງນ້ຳ, ເຂດເຕົ້າໂຮມນ້ຳ, ໜອງ, ອ່າງເກັບນ້ຳ, ດິນບໍລິເວນນ້ຳ, ດິນຖ່ານຕົມ, ຊີວະນາໆພັນທາງນ້ຳ, ການບໍລິການຂອງລະບົບນິເວດ, ຄຸນນະພາບນ້ຳ, ການຮັບປະກັນການສະໜອງ ແລະ ເຂົ້າເຖິງແຫຼ່ງນ້ຳຂອງທຸກຂະແໜງການ ແລະ ຊຸມຊົນ.	√	√
ພັດທະນາ, ປັບປຸງ ແລະ ຂະຫຍາຍລະບົບພະຍາກອນ, ຕິດຕາມ ແລະ ເຕືອນໄພລ່ວງໜ້າ ໄພອັນຕະລາຍທີ່ມາຈາກນ້ຳ ແລະ ການປ່ຽນແປງຂອງນ້ຳ ໂດຍປະສານສົບທົບກັບຂະແໜງອຸຕຸນິຍົມ ແລະ ອຸທົກກະສາດ, ພະລັງງານ, ກະສິກຳ ແລະ ອື່ນໆ	√	√
ຊຸກຍູ້ສິ່ງເສີມການບັງຄັບໃຊ້ກົດໝາຍ ແລະ ການຈັດຕັ້ງປະຕິບັດມາດຕະການທີ່ລະເມີດ ແລະ ສ້າງຄວາມເສຍຫາຍຕໍ່ໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກ, ລະບົບນິເວດ ສຳລັບ ການປັບຕົວ ແລະ ແກ້ໄຂຂໍ້ຂັດແຍ່ງໃນການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ	√	√
3. ຂົງເຂດປ່າໄມ້ ແລະ ການນຳໃຊ້ທີ່ດິນ		
ເສີມຂະຫຍາຍການສຶກສາ, ພັດທະນາ ແລະ ຈັດຕັ້ງປະຕິບັດແຜນການປັບຕົວ ໃນຂົງເຂດປ່າໄມ້ ແລະ ການນຳໃຊ້ທີ່ດິນ, ຕິດຕາມກວດກາ ແລະ ປະເມີນຄວາມບອບບາງ, ຄວາມສ່ຽງ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕໍ່ຊັບພະຍາກອນປ່າໄມ້ ລວມທັງ ລະບົບນິເວດ ແລະ ຊີວະນາໆພັນ	√	

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ເສີມຂະຫຍາຍ, ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີສຳລັບຂົງເຂດປ່າໄມ້ ແລະ ການນຳໃຊ້ທີ່ດິນ, ໂດຍສະເພາະແມ່ນ ການນຳໃຊ້ລະບົບນິເວດປ່າໄມ້, ທີ່ດິນປ່າໄມ້, ຈຸດພິເສດຂອງພູມສັນຖານ, ການຄຸ້ມຄອງປ່າໄມ້ ແລະ ເຄື່ອງປ່າຂອງດົງແບບຍືນຍົງ, ການປົກປັກຮັກສາ, ຟື້ນຟູ ແລະ ຂະຫຍາຍເນື້ອທີ່ປ່າໄມ້, ການບໍລິການຂອງລະບົບນິເວດປ່າໄມ້, ທຸລະກິດດ້ານປ່າໄມ້, ລະບົບກະສິກຳ-ປ່າໄມ້, ເຕັກນິກການບໍລິຫານ ແລະ ການນຳໃຊ້ພູມປັນຍາທ້ອງຖິ່ນ	√	√
ສ້າງຄາມສາມາດໃຫ້ແກ່ອົງການປົກຄອງທ້ອງຖິ່ນ ແລະ ພາກເອກະຊົນ ແບບມີສ່ວນຮ່ວມເພື່ອການປັບຕົວ ແລະ ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ	√	√
4. ຂົງເຂດໂຄງລ່າງພື້ນຖານໂຍທາທິການ ແລະ ຂົນສົ່ງ		
ສຶກສາ ແລະ ປະເມີນຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ຂົງເຂດໂຄງລ່າງພື້ນຖານໂຍທາທິການ ແລະ ຂົນສົ່ງ, ພ້ອມທັງສ້າງຄວາມສາມາດດ້ານການຈັດຕັ້ງ ແລະ ບຸກຄະລາກອນໃນການພັດທະນາ ແລະ ຄຸ້ມຄອງໂຄງລ່າງພື້ນຖານ ໃຫ້ມີຄວາມທົນທານ ແລະ ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ	√	√
ພັດທະນາ ແລະ ຈັດຕັ້ງປະຕິບັດລະບຽບການ, ມາດຕະຖານ ແລະ ແຜນການປັບຕົວ ແລະ ການລົງທຶນໃນຂົງເຂດໂຄງລ່າງພື້ນຖານໂຍທາທິການ ແລະ ຂົນສົ່ງ	√	
ເສີມຂະຫຍາຍການຄົ້ນຄວ້າ ແລະ ຖ່າຍທອດເຕັກໂນໂລຊີ ແລະ ເຕັກນິກ ສຳລັບການປັບຕົວ ແລະ ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ	√	√
ສົ່ງເສີມການພັດທະນາ ລະບົບຄົມມະນາຄົມ-ຂົນສົ່ງ ຫຼາຍຮູບແບບ, ໂຄງລ່າງພື້ນຖານ, ການອອກແບບຕົວເມືອງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ	√	√
5. ຂົງເຂດພະລັງງານ ແລະ ບໍ່ແຮ່		
ປະເມີນ ແລະ ສ້າງແຜນທີ່ຄວາມສ່ຽງການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຂອງຂະແໜງພະລັງງານ ແລະ ບໍ່ແຮ່, ເປັນຕົ້ນໂຄງການລົງທຶນ ແລະ ກິດຈະການກ່ຽວກັບເຂື່ອນໄຟຟ້າພະລັງງານນ້ຳ, ພະລັງງານແສງຕາເວັນ, ພະລັງງານລົມ, ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ	√	
ພັດທະນາ, ເພີ່ມທະວີການຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດລະບຽບການ, ມາດຕະຖານ ແລະ ແຜນການປັບຕົວໃນຂົງເຂດພະລັງງານ ແລະ ບໍ່ແຮ່	√	√
ສ້າງຄວາມສາມາດດ້ານການຈັດຕັ້ງ ແລະ ບຸກຄະລາກອນ ໃນການພັດທະນາ ແລະ ຄຸ້ມຄອງພະລັງງານ ແລະ ບໍ່ແຮ່ ໃຫ້ມີຄວາມທົນທານ ແລະ ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ	√	√
6. ຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ		
ປະເມີນ, ສ້າງແຜນທີ່ຄວາມສ່ຽງ ແລະ ແຜນປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ສະເພາະ ຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ, ໂດຍສະເພາະແມ່ນ ຊັບພະຍາກອນການທ່ອງທ່ຽວ ແລະ ການທ່ອງທ່ຽວແບບອະນຸລັກ, ລວມທັງ ແຫຼ່ງທ່ອງທ່ຽວດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ	√	
ພັດທະນາ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດແຜນປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ	√	√
7. ຂົງເຂດພັດທະນາຊົນນະບົດ ແລະ ການຕັ້ງພູມລຳເນົາ		
ປະເມີນຄວາມສ່ຽງ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ໃນຂົງເຂດການພັດທະນາຊົນນະບົດ ແລະ ການຕັ້ງພູມລຳເນົາ ລວມທັງ ສຶກສາ, ວາງແຜນ, ຍົກຍ້າຍຈັດສັນປະຊາຊົນທີ່ມີຄວາມສ່ຽງສູງ ແລະ ໄດ້ຮັບຜົນກະທົບຮ້າຍແຮງຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆຢ່າງເໝາະສົມ ແລະ ແບບຍືນຍົງ	√	

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ສ້າງຄວາມເຂັ້ມແຂງ, ສ້າງ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດ ແຜນການປັບຕົວ ແລະ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ການພັດທະນາຊົນນະບົດ ແລະ ການຕັ້ງພູມລຳເນົາ	√	√
8. ຂົງເຂດສາທາລະນະສຸກ		
ປະເມີນຄວາມສ່ຽງ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ໃນຂົງເຂດສາທາລະນະສຸກ	√	
ສ້າງ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດລະບົບ ແລະ ແຜນງານກ່ຽວກັບ ການເຝົ້າລະວັງ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ ແລະ ການເຈັບປ່ວຍ ທີ່ຕິດພັນກັບການປຽນແປງດິນຟ້າອາກາດ ເປັນຕົ້ນແມ່ນ: ມາເລເລຍ, ຖອກທ້ອງ, ພະຍາດລະບາດ ແລະ ການເຈັບປ່ວຍອື່ນໆ.	√	√
ເສີມຂະຫຍາຍການພັດທະນາ ແລະ ປັບປຸງລະບົບສະໜອງນ້ຳສະອາດ, ສຸຂະອານາໄມ, ໂພສະນາການ ແລະ ສາທາລະນະສຸກໃຫ້ທົ່ວເຖິງ	√	√
ເສີມຂະຫຍາຍຄວາມສາມາດ, ສ້າງ ແລະ ຈັດຕັ້ງປະຕິບັດແຜນປັບຕົວເຂົ້າກັບການປຽນແປງດິນຟ້າອາກາດຂອງ ຂະແໜງສາທາລະນະສຸກ	√	√
9. ຂົງເຂດການສຶກສາ		
ປະເມີນຄວາມສ່ຽງ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ຄວາມຕ້ອງການດ້ານການສ້າງຄວາມສາມາດໃນການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດໃນ ຂະແໜງການສຶກສາ	√	
ພັດທະນາ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດ ແຜນປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ	√	√
10. ຂົງເຂດທີ່ປົ່ນອ້ອມທຸກຂະແໜງການ		
ປະເມີນຄວາມສ່ຽງ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ຕໍ່ກຸ່ມຄົນທີ່ມີຄວາມບອບບາງ, ເປັນຕົ້ນແມ່ນ ແມ່ຍິງ ແລະ ເດັກນ້ອຍ, ຄົນພິການ, ຊົນເຜົ່າ, ຜູ້ສູງອາຍຸ ແລະ ອື່ນໆ	√	
ພັດທະນາ, ແລະ ຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດແຜນການປັບຕົວໃຫ້ຊຸມຊົນທີ່ມີຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ, ເປັນຕົ້ນແມ່ນ ແມ່ຍິງ ແລະ ເດັກນ້ອຍ, ຄົນພິການ, ຊົນເຜົ່າ, ຜູ້ສູງອາຍຸ ແລະ ອື່ນໆ	√	√

ແຜນງານ 3: ເສີມສ້າງຄວາມເຂັ້ມແຂງໃນການສຳຫຼວດ, ຕິດຕາມກວດກາ ແລະ ລາຍງານກ່ຽວກັບທາດອາຍເຮືອນແກ້ວ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ພັດທະນາຂໍ້ມູນ ແລະ ລະບົບຄຸ້ມຄອງຂໍ້ມູນ-ຂ່າວສານ ສຳລັບການສຳຫຼວດທາດອາຍເຮືອນແກ້ວ ໃນລະດັບຊາດ ແລະ ລະດັບນະຄອນ ລວມທັງໃນຂະແໜງການຕົ້ນຕໍ ເຊັ່ນ ກະສິກຳ, ປ່າໄມ້ ແລະ ການນຳໃຊ້ທີ່ດິນ, ອຸດສາຫະກຳ, ສິ່ງເສດເຫຼືອ, ພະລັງງານ ແລະ ຂົນສົ່ງ	√	√
ສົ່ງເສີມການຄົ້ນຄວ້າ ແລະ ການພັດທະນາ ສຳປະສິດການປ່ອຍທາດອາຍເຮືອນແກ້ວ (emission factor) ໃນຂະແໜງການຕົ້ນຕໍຄື: ການນ□ໃຊ້ທີ່ດິນ, ປ່າໄມ້, ພະລັງງານ, ກະສິກຳ, ອຸດສາຫະກຳ, ຂົນສົ່ງ, ຜັງເມືອງ-ທີ່ພັກອາໄສ ແລະ ສິ່ງເສດເຫຼືອ	√	√
ສ້າງຄວາມສາມາດ ແລະ ຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດ ມາດຕະການສຳລັບ ການສຳຫຼວດ, ຕິດຕາມກວດກາ, ລາຍງານ ແລະ ຢັ້ງຢືນ (MRV) ທາດອາຍເຮືອນແກ້ວໃນລະດັບນະຄອນ	√	√
ສ້າງລະບົບ ການສຳຫຼວດ, ການຕິດຕາມກວດກາ, ການລາຍງານ ແລະ ຢັ້ງຢືນ (MRV) ກ່ຽວກັບການປ່ອຍທາດອາຍເຮືອນແກ້ວແຫ່ງຊາດ ແລະ ຊຸກຍູ້ສົ່ງເສີມການຈັດຕັ້ງປຕິບັດ MRV ໃນຂະແໜງການ ແລະ ໂຄງການຕ່າງໆ	√	√

ແຜນງານ 4: ເສີມສ້າງຄວາມເຂັ້ມແຂງໃນການຄວບຄຸມ ແລະ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃນຂະແໜງການຕ່າງໆ

ຂົງເຂດ, ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ຂົງເຂດ 1: ເສີມສ້າງຄວາມເຂັ້ມແຂງ, ສົ່ງເສີມການປະຢັດ ແລະ ນຳໃຊ້ພະລັງງານ ແລະ ຊັບພະຍາກອນຢ່າງມີປະສິດທິພາບ		
ເສີມຂະຫຍາຍການພັດທະນາ ແລະ ປັບປຸງຖ່ານ ແລະ ເຕົາປະຫຍັດ	√	√
ສົ່ງເສີມການອອກແບບ-ກໍ່ສ້າງ ທີ່ປະຫຍັດພະລັງງານ ແລະ ສົ່ງເສີມການນຳໃຊ້ອຸປະກອນໄຟຟ້າປະຫຍັດພະລັງງານໃນອາຄານ	√	√
ເສີມຂະຫຍາຍການພັດທະນາໂຄງລ່າງພື້ນຖານ ເປັນຕົ້ນ: ຂົວ-ທາງ, ລະບົບຄົມມະນາຄົມ-ຂົນສົ່ງ, ໂດຍສານ, ສິນຄ້າ, ການສັນຈອນທາງບົກ ເພື່ອຫຼີກລ່ຽງ, ຫຼຸດຜ່ອນ ແລະ ລະບາຍການສັນຈອນທີ່ແອອັດ ແລະ ຕິດຂັດ	√	√
ສົ່ງເສີມ ແລະ ເສີມຂະຫຍາຍການພັດທະນາການນຳໃຊ້ລົດໄຟຟ້າ	√	√
ເສີມຂະຫຍາຍການພັດທະນາຕົວເມືອງອັດສະລິຍະ (Smart Cities) ໃນຕົວເມືອງອັນດັບສອງ ແລະ ອື່ນໆ	√	√
ສົ່ງເສີມ ແລະ ເສີມຂະຫຍາຍການນຳໃຊ້ຊັບພະຍາກອນຢ່າງມີປະສິດທິຜົນ ແລະ ປະຢັດໃນອຸດສາຫະກຳປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ	√	√
ສົ່ງເສີມ ແລະ ເສີມຂະຫຍາຍການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການສື່ສານ ເພື່ອປະຢັດພະລັງງານ ແລະ ຊັບພະຍາກອນ	√	√
ສ້າງຄວາມເຂັ້ມແຂງໃນການພັດທະນາ ລະບົບ ແລະ ຕິດຕາມກວດກາ-ຄວບຄຸມ ແລະ ຫຼຸດຜ່ອນການຮົ່ວໄຫຼຂອງກະແສໄຟຟ້າ	√	√
ສ້າງຄວາມເຂັ້ມແຂງໃນການພັດທະນາລະບົບ ແລະ ຕິດຕາມກວດກາ-ຄວບຄຸມ ແລະ ຫຼຸດຜ່ອນການຮົ່ວໄຫຼຂອງທາດຊັນເຟີເຮັກຊາຟຼູໂອລາຍ (SF6)		√
ສ້າງຈິດສຳນຶກ, ພັດທະນາ ແລະ ນຳໃຊ້ສະຫຼາກສີຂຽວ ແລະ ໃຫ້ລາງວັນແກ່ມວນຊົນທີ່ດີເດັ່ນ ກ່ຽວກັບ ການປະຢັດພະລັງງານ ແລະ ຊັບພະຍາກອນ	√	√
ສຶກສາ, ປັບປຸງ ແລະ ທົດລອງນຳໃຊ້ກົນໄກລາຄາພະລັງງານ ແລະ ຊັບພະຍາກອນ, ເປັນຕົ້ນ ກົນໄກລາຄາພະລັງງານໄຟຟ້າ, ນ້ຳມັນ, ນ້ຳ, ຊັບພະຍາກອນປ່າໄມ້ ແລະ ແຮ່ທາດ	√	√
ຂົງເຂດ 2: ສຶກສາ, ທົດລອງ ແລະ ສ້າງຕົວແບບການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີທີ່ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ການປ່ອຍທາດອາຍເຮືອນແກ້ວຕ່ຳ		
ສົ່ງເສີມ ການຄົ້ນຄວ້າ ແລະ ສ້າງແຜນການຂະຫຍາຍເຕັກໂນໂລຊີ ທີ່ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ການປ່ອຍທາດອາຍເຮືອນແກ້ວຕ່ຳ	√	
ຈັດຕັ້ງປະຕິບັດແຜນການຂະຫຍາຍເຕັກໂນໂລຊີທີ່ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ການປ່ອຍທາດອາຍເຮືອນແກ້ວຕ່ຳ ໃນຂະແໜງພະລັງງານ, ໂຍທາທິການ ແລະ ຂົນສົ່ງ ອຸດສາຫະກຳ, ກະສິກຳ-ປ່າໄມ້ ແລະ ການຄຸ້ມຄອງສິ່ງເສດເຫຼືອ	√	√
ຂົງເຂດ 3: ທົດລອງ ແລະ ສ້າງຕົວແບບການພັດທະນາ ແລະ ການນຳໃຊ້ພະລັງງານທົດແທນ ແລະ ພະລັງງານທາງເລືອກ		
ສົ່ງເສີມ ແລະ ເສີມຂະຫຍາຍການພັດທະນາ ແລະ ນຳໃຊ້ພະລັງງານແສງອາທິດ, ພະລັງງານລົມ, ນ້ຳມັນຊີວະພາບ ແລະ ຊີວະມວນ	√	√
ສົ່ງເສີມ ແລະ ທົດລອງການນຳໃຊ້ສິ່ງເສດເຫຼືອເພື່ອຜະລິດພະລັງງານ		√
ຂົງເຂດ 4: ສົ່ງເສີມການພັດທະນາ ແລະ ການຈັດຫາເຕັກໂນໂລຊີເກັບກັກທາດອາຍເຮືອນແກ້ວ ໃນຂະແໜງການຕົ້ນຕໍ		

ຂົງເຂດ, ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ສຶກສາຄົ້ນຄວ້າ, ສ້າງບັນຊີ ແລະ ລາຍລະອຽດກ່ຽວກັບເຕັກໂນໂລຊີເກັບກັກທາດອາຍເຮືອນແກ້ວ ທີ່ເໝາະສົມ	√	
ສົ່ງເສີມເຕັກໂນໂລຊີເກັບກັກທາດອາຍເຮືອນແກ້ວ ໃນອຸດສາຫະກຳພະລັງງານໄຟຟ້າ, ຖ່ານຫີນ ແລະ ຊີມັງ		√
ຂົງເຂດ 5: ປ້ອງກັນ ແລະ ເພີ່ມຄວາມສາມາດໃນການດູດຊັບທາດອາຍການກອນຂອງລະບົບນິເວດ, ໂດຍສະເພາະແມ່ນ ປ່າໄມ້, ດິນທາມ ແລະ ເຂດຊຽວ		
ປ້ອງກັນ ແລະ ຫຼຸດຜ່ອນການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າເຊື່ອມໂຊມ	√	√
ຟື້ນຟູປ່າເຊື່ອມໂຊມ	√	√
ສົ່ງເສີມການຄຸ້ມຄອງປ່າຜະລິດ ແລະ ປ່າໄມ້ຊຸມຊົນແບບຍືນຍົງ	√	√
ສົ່ງເສີມ ແລະ ຂະຫຍາຍປ່າປຸກແບບຍືນຍົງ	√	√
ສົ່ງເສີມ ແລະ ຂະຫຍາຍການຄຸ້ມຄອງເຄື່ອງປ່າຂອງດົງ ແບບຍືນຍົງ	√	√
ປ້ອງກັນ ແລະ ຫຼຸດຜ່ອນການທຳລາຍດິນທາມ ແລະ ດິນການກອນ ຕິດພັນກັບການປັບປຸງຊີວິດການເປັນຢູ່	√	√
ສົ່ງເສີມການຜະລິດ ແລະ ນຳໃຊ້ຜະລິດຕະພັນປ່າໄມ້ທີ່ມີປະສິດທິພາບ ແລະ ຍືນຍົງ	√	√
ສົ່ງເສີມການປ້ອງກັນ ແລະ ເສີມຂະຫຍາຍເຂດຊຽວໃນຕົວເມືອງ	√	√
ຂົງເຂດ 6. ສົ່ງເສີມ ແລະ ຍົກສູງດ້ານການຄຸ້ມຄອງ, ການຜະລິດ, ການປຸງແຕ່ງ ແລະ ການກຳຈັດສິ່ງເສດເຫລືອໃຫ້ໄດ້ຕາມມາດຕະຖານ		
ສົ່ງເສີມການຄົ້ນຄວ້າ, ທົດລອງ ແລະ ບັງຄັບນຳໃຊ້ມາດຕະຖານສິ່ງແວດລ້ອມສາກົນ ໃນຂະແໜງພະລັງງານໄຟຟ້າຖ່ານຫີນ, ການບິນ, ອຸດສາຫະກຳຊີມັງ, ເຫຼັກ ແລະ ສະໜາມຂີ້ເຫຍື້ອໃນຕົວເມືອງ, ພ້ອມທັງຂະຫຍາຍ ໃຫ້ກວມເອົາເມືອງ ແລະ ເຂດພັດທະນາອື່ນໆ ທີ່ບັນດາກິດຈະກຳພັດທະນາເຫຼົ່ານັ້ນຕັ້ງຢູ່.	√	√
ສົ່ງເສີມ ການສຶກສາ ແລະ ຄົ້ນຄວ້າ ການສ້າງຄູ່ມືຕ່າງໆ ກ່ຽວກັບ ການພັດທະນາຕົວເມືອງ ແລະ ໂຄງລ່າງພື້ນຖານ ໃຫ້ມີຄວາມຄົງທົນຕໍ່ການປ່ຽນແປງດິນຟ້າອາກາດ, ເປັນຕົ້ນ ຄູ່ມືໃນການວາງແຜນ, ບຳລຸງຮັກສາ ແລະ ກໍ່ສ້າງຮ່ອງລະບາຍນ້ຳ ແລະ ສະໜາມຂີ້ເຫຍື້ອ.	√	√
ສົ່ງເສີມ ການສຶກສາ ແລະ ຄົ້ນຄວ້າເພື່ອປະຍຸກໃຊ້ ການປະເມີນຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດຂອງຕົວເມືອງ (City Resilience Index)	√	√
ສ້າງຖານຂໍ້ມູນໄພພິບັດທາງທຳມະຊາດ ທີ່ກ່ຽວຂ້ອງກັບ ຂະແໜງເຄຫາ ແລະ ຜັງເມືອງ ທີ່ສາມາດເຂົ້າເຖິງໄດ້ຫຼາຍຊ່ອງທາງ	√	√
ສົ່ງເສີມ ແລະ ບັງຄັບນຳໃຊ້ມາດຕະຖານສິ່ງແວດລ້ອມສາກົນ ໃນຂະແໜງພະລັງງານ ແລະ ອຸດສາຫະກຳຊີມັງຂະໜາດໃຫຍ່ອື່ນໆ		√
ຂົງເຂດ 7. ເພີ່ມທະວີການຄຸ້ມຄອງສິ່ງເສດເຫຼືອ ໃຫ້ມີການປ່ອຍທາດອາຍການກອນຕ່ຳ, ລວມທັງ ການຫຼຸດຜ່ອນ, ການນຳໃຊ້ຄືນ ແລະ ການຜະລິດຄືນ (3R) ແລະ ສົ່ງເສີມການນຳໃຊ້ສິ່ງເສດເຫຼືອເພື່ອຜະລິດພະລັງງານ		
ເສີມຂະຫຍາຍການພັດທະນາ ແລະ ປັບປຸງຍົກລະດັບການຄຸ້ມຄອງ ແລະ ບໍລິການກຳຈັດ ລວມທັງ ສະຖານທີ່ບຳບັດຂີ້ເຫຍື້ອ ໃຫ້ສາມາດບໍລິການໄດ້ຢ່າງທົ່ວເຖິງ ໃນບັນດານະຄອນ, ຕົວເມືອງອັນດັບ 2 ແລະ 3	√	√
ເສີມຂະຫຍາຍການພັດທະນາ ແລະ ປັບປຸງຍົກລະດັບການຄຸ້ມຄອງ, ການບໍລິການ ແລະ ການບຳບັດ ລວມທັງ ສະຖານທີ່ບຳບັດນ້ຳເປື້ອນໃຫ້ສາມາດບໍລິການໃຫ້ທົ່ວເຖິງ ໃນບັນດານະຄອນ, ຕົວເມືອງ ອັນດັບ 2 ແລະ 3	√	√
ໂຄງການປັບປຸງສະພາບແວດລ້ອມຕົວເມືອງຫຼວງພະບາງ	√	√

ແຜນງານ 5: ພັດທະນາ, ນຳໃຊ້ ແລະ ຖ່າຍທອດເຕັກໂນໂລຊີ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ທົບທວນ, ປະເມີນຄວາມຕ້ອງການ ແລະ ສ້າງແຜນງານດ້ານເຕັກໂນໂລຊີສຳລັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວ	√	
ປະສານສົມທົບ ແລະ ຮ່ວມມືກັບຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ ຈັດຕັ້ງປະຕິບັດແຜນງານດ້ານເຕັກໂນໂລຊີ ລວມທັງ ການທົດລອງ, ສົ່ງເສີມ ແລະ ຜັນຂະຫຍາຍເຕັກໂນໂລຊີທີ່ເໝາະສົມ ສຳລັບການປັບຕົວ, ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວ	√	√
ຊຸກຍູ້, ສົ່ງເສີມ ແລະ ພັດທະນາພູມປັນຍາທ້ອງຖິ່ນ ເຂົ້າໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.	√	

ແຜນງານ 6: ສົ່ງເສີມ ການສຶກສາ, ສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງມວນຊົນກ່ຽວກັບການປ່ຽນແປງດິນຟ້າອາກາດ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ປະເມີນຄວາມຕ້ອງການ ດ້ານການສ້າງຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ໃນຂະແໜງການສຶກສາ	√	√
ທົບທວນ ແລະ ປັບປຸງຫຼັກສູດການສຶກສາ, ແຜນງານສະເພາະການຝຶກອົບຮົມ ແລະ ການມີສ່ວນຮ່ວມຂອງມວນຊົນກ່ຽວກັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ສຳລັບການສຶກສາໃນ ແລະ ນອກລະບົບໃນທຸກລະດັບ	√	√
ພັດທະນາ ແລະ ຈັດຕັ້ງປະຕິບັດແຜນການສ້າງຄວາມສາມາດ ສຳລັບຄູອາຈານ ເພື່ອສິດສອນວິຊາທີ່ກ່ຽວຂ້ອງກັບ ການປ່ຽນແປງດິນຟ້າອາກາດ	√	√
ພັດທະນາຫຼັກສູດ, ປຶດແນະນຳ, ເນື້ອໃນ ແລະ ວິທີການສຳລັບການສື່ສານ, ເຜີຍແຜ່, ສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງມວນຊົນໃຫ້ເປັນມາດຕະຖານ	√	√
ການຝຶກອົບຮົມກ່ຽວກັບວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ໂດຍສະເພາະ ຄວາມຮູ້ ທາງດ້ານວິທະຍາສາດກ່ຽວກັບການປ່ຽນແປງດິນຟ້າອາກາດ, ການປັບຕົວ, ເຕັກໂນໂລຊີ ແລະ ການຈັດຕັ້ງປະຕິບັດທີ່ມີປະສິດທິພາບ	√	√
ສ້າງຂະບວນການຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເຜີຍແຜ່ຂໍ້ມູນ-ຂ່າວສານດ້ານການປ່ຽນແປງດິນຟ້າອາກາດ ໂດຍການຈັດຕັ້ງ ແລະ ສ້າງການລະໂອກາດໃນການແລກປ່ຽນບົດຮຽນທີ່ດີ, ໂຄງການຕົວແບບ, ຊຸມຊົນຕົວແບບ, ຜະລິຕະພັນຕົວແບບ ແລະ ຂະບວນການອື່ນໆ	√	√

ແຜນງານ 7: ເສີມສ້າງ ຄວາມເຂັ້ມແຂງ ດ້ານການເງິນ ໃນວຽກງານ ການຄຸ້ມຄອງ ການປ່ຽນແປງດິນຟ້າອາກາດ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ສຶກສາ ແລະ ພັດທະນາລະບຽບການ ຫຼື ຄຳສັ່ງແນະນຳ, ກົນໄກ ແລະ ຄູ່ມືໃນການຈັດຕັ້ງປະຕິບັດກອງທຶນຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	
ສຶກສາແຫຼ່ງທຶນ ແລະ ຄວາມຕ້ອງການດ້ານການເງິນສຳລັບການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	
ສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ ແລະ ກົນໄກການເຂົ້າເຖິງແຫຼ່ງທຶນ, ລະດົມທຶນ ແລະ ຊັບພະຍາກອນດ້ານການເງິນ ເພື່ອຮັບໃຊ້ການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	√
ສ້າງ ແລະ ຈັດຕັ້ງປະຕິບັດລະບົບຕິດຕາມກວດກາ ແລະ ລາຍງານດ້ານການເງິນ	√	√

ແຜນງານ 8: ເຊື່ອມສານ, ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ແລະ ສິ່ງເສີມ ການກະກຽມຄວາມພ້ອມ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ສຶກສາການເຊື່ອມສານ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຂົ້າໃນນະໂຍບາຍ, ຍຸດທະສາດ, ແຜນງານແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ	√	
ປຶກສາຫາລື ແລະ ສ້າງແຜນງານການເຊື່ອມສານ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	
ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາແຜນງານ ການເຊື່ອມສານ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	√
ສ້າງ ແລະ ດຳເນີນເວທີປຶກສາຫາລື ແລະ ແລກປ່ຽນສອງຝ່າຍ ແລະ ຫຼາຍຝ່າຍ ກ່ຽວກັບ ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແລະ ວຽກງານທີ່ກ່ຽວຂ້ອງ	√	

ແຜນງານ 9: ເສີມສ້າງຄວາມເຂັ້ມແຂງ ໃນຄຸ້ມຄອງບໍລິຫານ ວຽກງານການປ່ຽນແປງດິນຟ້າອາກາດ

ກອບໂຄງການ ຫຼື ໜ້າວຽກຕົ້ນຕໍ	2021-2024	2025-2030
ສ້າງ ແລະ ປັບປຸງດ້ານນະໂຍບາຍ ແລະ ການວາງແຜນການ	√	
ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາຄວາມສາມາດດ້ານການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ, ແນໃສ່ເພື່ອປະເມີນຊ່ອງຫວ່າງ ແລະ ຄວາມຕ້ອງການ ໃນການຈັດຕັ້ງປະຕິບັດ ນິຕິກຳ, ລະບຽບການ, ແຜນງານ NDC, ສົນທິສັນຍາ ແລະ ຂໍ້ຕົກລົງສາກົນທີ່ກ່ຽວຂ້ອງ	√	√
ປະເມີນຄວາມຕ້ອງການ ແລະ ຈັດຕັ້ງປະຕິບັດວຽກງານ ການພັດທະນາຊັບພະຍາກອນມະນຸດ ກ່ຽວກັບ ການສຳຫຼວດ, ປະເມີນ ແລະ ການວາງແຜນຫຼຸດຜ່ອນທາດອາຍເຮືອນແກ້ວ, ການຈຳລອງ ແລະ ຄາດຄະເນ, ຄວາມຫນອບບາງ, ຄວາມສ່ຽງ, ຜົນກະທົບ ແລະ ການວາງແຜນປັບຕົວ, ການເງິນ ກ່ຽວກັບ ວຽກງານການປ່ຽນແປງດິນຟ້າອາກາດ, M&E ແລະ MRV, ແລະ ອື່ນໆ	√	√
ປັບປຸງການຮ່ວມມື ແລະ ປະສານງານໃນການຄຸ້ມຄອງການປ່ຽນແປງດິນຟ້າອາກາດ	√	√
ສິ່ງເສີມການຄົ້ນຄວ້າ ແລະ ການພັດທະນາ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ	√	√

ເອກະສານອ້າງອີງ

ນິຕິກຳ:

1) ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ສະບັບເລກທີ 321/ລບ, ລົງວັນທີ 18/09/2019;
2) ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ສະບັບເລກທີ 041/ສພຊ, ລົງວັນທີ 18 ທັນວາ 2012;
3) ກົດໝາຍ ວ່າດ້ວຍ ອຸຕຸນິຍົມ ແລະ ອຸທົກກະສາດ, ສະບັບເລກທີ 36/ສພຊ, ລົງວັນທີ 13 ພະຈິກ 2017;
4) ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ), ສະບັບເລກທີ 14/ສພຊ, ລົງວັນທີ 21/06/2019;
5) ກົດໝາຍ ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ, ສະບັບເລກທີ 010/ສພຊ, ລົງວັນທີ 11/05/2017;
6) ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13/06/2019;
7) ກົດໝາຍ ວ່າດ້ວຍ ການຄຸ້ມຄອງໄພພິບັດ, ສະບັບເລກທີ 15/ສພຊ, ລົງວັນທີ 24/06/2019.

ສົນທິສັນຍາສາກົນ:

1) ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) (1992);
2) ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (UNCBD) (1992);
3) ສົນທິສັນຍາ ວ່າດ້ວຍ ການຕ້ານການກາຍເປັນທະເລຊາຍ (UNCCD) (1992);
4) ອານຸສັນຍາກຽວໂຕ ວ່າດ້ວຍ ການຄວບຄຸມ ການປ່ອຍທາດອາຍເຮືອນແກ້ວ (Kyoto Protocol) (2003);
5) ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (Paris Agreement) (2015);
6) ເປົ້າໝາຍ ການພັດທະນາ ແບບຍືນຍົງ ຂອງສະຫະປະຊາຊາດ (SDGs) (2015);
7) ສົນທິສັນຍາ ວ່າດ້ວຍ ສານເຄມີທີ່ທຳລາຍຊັ້ນໂອໂຊນ (1989) ຫຼື ແລະ ສະບັບປັບປຸງ (ກິກາລີ) ວ່າດ້ວຍ ການຢຸດຕິ ການນຳໃຊ້ ໄຮໂດຣຟລູໂອໂຣກາກບອນ (HFCs) (2016);
8) ຂໍ້ຕົກລົງ A38–18 ແລະ A40–18 ຂອງອົງການ ການບິນພົນລະເຮືອນສາກົນ (ICAO) ວ່າດ້ວຍ ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (2013);
9) ຖະແຫຼງການຮ່ວມ ຂອງອາຊຽນ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (2019).

ນະໂຍບາຍ, ຍຸດທະສາດ ແລະ ແຜນງານ:

1) ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IIX ແຕ່ປີ 2016-2020;
2) ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແຕ່ປີ 2020-2025;
3) ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ (NDC) ສະບັບທຳອິດ (2015) ແລະ ສະບັບທີ 2 (2020);
4) ຍຸດທະສາດ ການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ (2010);
5) ແຜນດຳເນີນງານ ການປ່ຽນແປງດິນຟ້າອາກາດ 2013-2020 (2013);
6) ຍຸດທະສາດ ປ່າໄມ້ ເຖິງປີ 2020 (2005)
7) ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ຂອງ ສປປ ລາວ (2022);
8) ຍຸດທະສາດການພັດທະນາພະລັງງານທົດແທນໃນ ສປປ ລາວ (2011);
9) ແຜນງານ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດແຫ່ງຊາດ (2009);
10) ຍຸດທະສາດນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳຮອດປີ 2030 (2019);
11) ແຜນແມ່ບົດການນຳໃຊ້ທີ່ດິນ (2018);
12) ຍຸດທະສາດ ຫຼຸດຜ່ອນ ທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ ສະບັບເດືອນມີນາ 2021 (REDD+);

13) ຍຸດທະສາດ ພັດທະນາ ອ່າງແມ່ນ້ຳຂອງ 2021 – 2030 ແລະ ແຜນຍຸດທະສາດ ຂອງ ຄະນະກຳມາທິການ ແມ່ນ້ຳຂອງ ສກິນ 2021 2025 (2021);
14) ຍຸດທະສາດ ແລະ ແຜນດຳເນີນງານ ການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ ໃນອ່າງແມ່ນ້ຳຂອງ (2017);
15) ແຜນຄຸ້ມຄອງ ອ່າງຮັບນ້ຳງື່ມ, ແຜນຄຸ້ມຄອງ ອ່າງຮັບນ້ຳອູ, ແຜນຄຸ້ມຄອງ ອ່າງຮັບນ້ຳເທີນ-ກະດິງ (2022).

ບົດຄົ້ນຄວ້າ, ບົດລາຍງານ ແລະ ອື່ນໆ:

1) ສະພາວິທະຍາສາດ ລະຫວ່າງປະເທດ ດ້ານການປ່ຽນແປງດິນຟ້າອາກາດ (IPCC). 2018. ບົດສະຫລຸບຫຍໍ້ ສ□ຳລັບການ ນຳ. In V. Masson-Delmotte et al., eds. ການເພີ່ມຂຶ້ນຂອງອຸນຫະພູມສະເລ່ຍຂອງໂລກ 1.5°C: ບົດລາຍງານ ພິເສດ ຂອງ IPCC
2) ລັດຖະບານ ແຫ່ງ ສປປ ລາວ. 2019. ການປະເມີນ ຄວາມຕ້ອງການ ຫຼັງໄພພິບັດ: ນ້ຳຖ້ວມ 2018, ສປປ ລາວ. ນະຄອນຫຼວງວຽງຈັນ
3) ສູນສະຖິຕິແຫ່ງຊາດ (2015). ປຶ້ມສະຖິຕິປະຈຳປີ 2015. ນະຄອນຫຼວງວຽງຈັນ
4) ກະຊວງກະສິກຳ ແລະ ປ່າໄມ້. ບົດລາຍງານການສຳຫຼວດຄວາມປົກຫຸ້ມປ່າໄມ້ປີ 2015 ແລະ 2019
5) ກະຊວງກະສິກຳ ແລະ ປ່າໄມ້. ຍຸດທະສາດຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ ຊຸດໂຊມແຫ່ງຊາດ, 2021
6) ລັດຖະບານແຫ່ງ ສປປ ລາວ. ກະຊວງກະສິກຳ ແລະ ປ່າໄມ້. 2018. ລະດັບການປ່ອຍທາດອາຍເຮືອນແກ້ວອ້າງອີງ ຈາກ ປ່າໄມ້ ແລະ ລະດັບ ອ້າງອີງ ປ່າໄມ້ຂອງ ສປປ ລາວ ສຳລັບຜົນການໃຊ້ຈ່າຍເຂົ້າໃນ ໂຄງການ REDD+ ທີ່ຢູ່ພາຍໃຕ້ UNFCCC. ນະຄອນຫຼວງວຽງຈັນ.
https://redd.unfccc.int/files/2018_frel_submission_laopdr.pdf
7) ລັດຖະບານແຫ່ງ ສປປ ລາວ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ສະຖາບັນຄົ້ນຄວ້າເສດຖະກິດ ສຳລັບ ອາຊຽນ ແລະ ອາຊີ ຕາເວັນອອກ (ERIA). 2020. Lao PDR Energy Outlook 2020. ຈາກາຣຕາ: ERIA.
https://www.eria.org/uploads/media/Research-Project-Report/Lao-Energy-Outlook-2020/Lao-PDR-Energy-Outlook-2020.pdf
8) ກະຊວງພະລັງງານ ແລະ ບໍ່ແຮ່. 2018. ສະຖິຕິພະລັງງສານຂອງ ສປປ ລາວ 2018
9) ກະຊວງພະລັງງານ ແລະ ບໍ່ແຮ່. ການປັບປຸງຂໍ້ມູນແຫຼ່ງຜະລິດໄຟຟ້າ ສະບັບປີ 2022
10) ກະຊວງພະລັງງານ ແລະ ບໍ່ແຮ່. ບົດສະຫຼຸບແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ VIII (2016 – 2020) ແລະ ແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ IX (2021 – 2025)
11) ທະນາຄານໂລກ. ທະນາຄານໂລກ ປະຈຳ ສປປ ລາວ; ທະນາຄານພັດທະນາອາຊີ. 2017. ຍຸດທະສາດ ການເປັນຫຸ້ນສ່ວນກັບ ປະເທດ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, 2017-2020. ມະນີລາ.
https://www.adb.org/sites/default/files/institutional-document/360121/cps-lao-2017-2020.pdf
12) ລັດຖະບານແຫ່ງ ສປປ ລາວ, ສູນສະຖິຕິແຫ່ງຊາດລາວ. ຜົນຜະລິດມວນຮວມ (ປະເມີນ ວັນທີ 10 ມິຖຸນາ 2020).
https://laosis.lsb.gov.la/tblInfo/TblInfoList.do?rootId=2101000&menuId=2101101
13) ADB. 2019. ການປະເມີນ ຂະແໜງການພະລັງງານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຍຸດທະສາດ, ແລະ ການວາງແນວທາງ. ມະນີລາ.
https://www.adb.org/sites/default/files/institutional-document/360121/cps-lao-2017-2020.pdf
14) ທະນາຄານພັດທະນາອາຊີ (ADB). ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຕົວຊີ້ວັດຕົ້ນຕໍ
15) ທະນາຄານພັດທະນາອາຊີ. 2017. ຍຸດທະສາດການເປັນຫຸ້ນສ່ວນກັບປະເທດ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ, 2017-2020. https://www.adb.org/sites/default/files/institutional-document/360121/cps-lao-2017-2020.pdf; ແລະ ທະນາຄານ ພັດທະນ ອາຊີ. 2019. ການປະເມີນ, ຍຸດທະສາດ ແລະ ການວາງແຜນຂອງ ຂະແໜ ງພະລັງງານ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ມະນີລາ
16) ADB. Asian Development Outlook 2020: What Drives Innovation in Asia. Manila

17) ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. 2016. ບົດລາຍງານ ກ່ຽວກັບ ປະຫວັດຂອງ ການປ່ຽນແປງດິນຟ້າອາກາດ, ຄວາມບອບບາງ ແລະ ການຄາດຄະເນ ກ່ຽວກັບ ການປ່ຽນແປງ ດິນຟ້າອາກາດສຳລັບ ສປປ ລາວ. ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ. ນະຄອນຫຼວງວຽງຈັນ

18) ສະຖິຕິແຫ່ງຊາດ (ສຖຕ).2018. ສະຖິຕິປະຈຳປີ 2018. ນະຄອນຫຼວງວຽງຈັນ

19) IPCC. 2014. Asia. In V.R. Barros, et al., eds. Climate Change 2014: Impacts, Adaptation, and Vulnerability. Part B: Regional Aspects. Contribution of Working Group II to the Fifth Assessment Report of the Intergovernmental Panel on Climate Change. Cambridge and New York: Cambridge University Press

20) ລັດຖະບານແຫ່ງ ສປປ ລາວ. 2019. ການປະເມີນຄວາມຕ້ອງການຫຼັງໄພພິບັດ: ນ້ຳຖ້ວມ 2018, ສປປ ລາວ. ນະຄອນຫຼວງວຽງຈັນ

21) ບົດລາຍງານການສຳຫຼວດຄວາມປົກຫຸ້ມປ່າໄມ້ປີ 2015 ແລະ 2019, ສະບັບເດືອນມັງກອນ 2021

22) ບົດລາຍງານສະພາບການປ່ຽນແປງດິນຟ້າອາກາດ ໃນຂົງເຂດອາຊຽນ (2021)